# ປື້ມຄູ່ມື

# ວິທີການວາງແຜນພັດທະນາຊຸມຊົນ

## "ສຳລັບພະນັກງານພັດທະນາຊຸມຊົນ"




ພະແນກພັດທະນາຊຸມຊົນ

25 ພະຈິກ 2011

# ຄຳນຳ

ການຈັດຕັ້ງປະຕິບັດວຽກງານ ກອງທຶນຫຼຸດຜ່ອນຄວາມທຸກ (ທລຍ) ໄລຍະທີ 2 ແມ່ນມີຄວາມແຕກຕ່າງຈາກ ທລຍ ໄລຍະທີ 1 ຊຶ່ງຈະໄດ້ເນັ້ນໃສ່ການສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ທັງນີ້ເພື່ອຍົກສູງຂີດຄວາມສາມາດ ແລະ ຄວາມເປັນເຈົ້າການໃນການພັດທະນາຊຸມຊົນຂອງເຂົາເຈົ້າໃຫ້ໄດ້ໃນອານາຄົດ ໂດຍສາມາດຮັບຜິດຊອບວຽກງານພັດທະນາໄດ້ແຕ່ຫົວທີ.

ສະນັ້ນ, ເພື່ອເປັນບ່ອນອີງໃຫ້ແກ່ ພະນັກງານ ທລຍ ໃນທຸກໆຂັ້ນນັ້ນ ທີມງານບໍລິຫານ ທລຍ ຂັ້ນສູນກາງ ຈຶ່ງໄດ້ຜະລິດປື້ມຄູ່ມື **ວິທີການວາງແຜນພັດທະນາຊຸມຊົນ** ຫົວນີ້ຂຶ້ນມາ. ປື້ມຄູ່ມືດັ່ງກ່າວນີ້ ນອກຈາກໄດ້ສັງລວມເອົາເນື້ອໃນ ແລະ ວິທີການວາງແຜນແບບມີສ່ວນຮ່ວມຂັ້ນຕ່າງໆແລ້ວ ຍັງໄດ້ອະທິບາຍ ກ່ຽວກັບຈຸດຂ້າມຜ່ານຈາກ ທລຍ 1 ສູ່ ທລຍ 2, ຍົກໃຫ້ເຫັນລະບຽບການພັດທະນາຊຸມຊົນ ແລະ ວິທີການຈັດກອງປະຊຸມອື່ນໆອີກດ້ວຍ.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານ ທລຍ ໄລຍະທີ່ 2 ມີປະສິດທິພາບ ແລະ ປະສິດທິຜົນນັ້ນ, ທີມງານບໍລິຫານ ທລຍ ຂັ້ນສູນກາງ ຂໍສະເໜີ ແລະ ຮຽກຮ້ອງ ມາຍັງ ພະນັກງານ ທລຍ ໃນທຸກໆຂັ້ນ ຈົ່ງນຳໃຊ້ຄູ່ມືສະບັບນີ້ ໃນເວລາລົງໄປຈັດຕັ້ງປະຕິບັດໜ້າທີ່ຢູ່ຂັ້ນທ້ອງຖິ່ນ ຫຼື ໃນເວລາທີ່ທ່ານເປັນຜູ້ອຳນວຍຄວາມສະດວກ ໃນການດຳເນີນວຽກງານກອງທຶນຫລຸດຜ່ອນ ຄວາມທຸກຍາກທຸກໆຄັ້ງ.

ສະແດງຄວາມນັບຖື,

ຜູ້ອຳນວຍການບໍລິຫານ ທລຍ

ບຸນກ້ອງ ສຸວັນນະພັນ

# ສາລະບານ

ກ. ການຂ້າມຜ່ານຈາກ ທລຍ I ສູ່ ທລຍ II........................................................................3

ຂ. ກິດເກນ 10 ຢ່າງ ຂອງການເປັນຜູ້ອຳນວຍຄວາມສະດວກທີ່ດີ........................................10

ຄ. ກອງປະຊຸມແນະນຳໂຄງການຂັ້ນບ້ານ......................................................................12

ງ. ກອງປະຊຸມກຳນົດທິດທາງພັດທະນາບ້ານ ..................................................................16

1. ການກຳນົດທິດທາງພັດທະນາບ້ານ - ພາກທີ 1 ນຳສະເໜີໂດຍລວມ............................16
2. ການກຳນົດທິດທາງພັດທະນາບ້ານ - ພາກທີ 2: "ບ້ານຂອງພວກເຮົາໃນປັດຈຸບັນ" ............19
3. ການກຳນົດທິດທາງພັດທະນາບ້ານ - ພາກທີ 3: "ບ້ານຂອງພວກເຮົາໃນອະນາຄົດ"..........22
4. ການກຳນົດທິດທາງພັດທະນາບ້ານ - ພາກທີ 4 "ເອົາໃຈໃສ່ບ້ານໃກ້ຄຽງຂອງພວກເຮົາ"......26
5. ການກຳນົດທິດທາງພັດທະນາບ້ານ - ພາກທີ 5 " ການຄັດເລືອກຕົວແທນບ້ານ"..............28

ຈ. ວິທີການ ວາງແຜນພັດທະນາກຸ່ມບ້ານ ໃນໄລຍະ 5 ປີ ....................................................31

1. ການວາງແຜນພັດທະນາກຸ່ມບ້ານ – ພາກທີ່ 1: ເຂົ້າໃຈບັນຫາ ແລະ ເປົ້າໝາຍໃນການພັດທະນາກຸ່ມບ້ານຂອງພວກເຮົາ ..................................................................................31
2. ການວາງແຜນພັດທະນາກຸ່ມບ້ານ ພາກທີ 2 – "ພັດທະນາກຸ່ມບ້ານຂອງພວກເຮົາ"............33
3. ການວາງແຜນພັດທະນາກຸ່ມບ້ານ ພາກທີ 3 – "ສ້າງແຜນພັດທະນາກຸ່ມບ້ານຂອງພວກເຮົາ "..........................................................................................................36
4. ການວາງແຜນພັດທະນາກຸ່ມບ້ານ ພາກທີ 4 – "ການສ້າງແຜນການຂອງ ທລຍ ເພື່ອສະໜັບສະໜູນ ການຈັດຕັ້ງປະຕິບັດແຜນພັດທະນາກຸ່ມບ້ານ ໃນໄລຍະ 5 ປີ"........................38
5. ກອງປະຊຸມປະສານງານການວາງແຜນພັດທະນາກຸ່ມບ້ານ ທີ່ຈັດຂຶ້ນຢູ່ຂັ້ນເມືອງ.................42
6. ກອງປະຊຸມລາຍງານຜົນການວາງແຜນພັດທະນາກຸ່ມບ້ານ ໄລຍະ 5 ປີ............................45

ຂໍ້ແນະນຳ ໃນການອະທິບາຍແຜ່ນໂຄສະນາ ......................................................................48

ວິໃສທັດຂອງ ທລຍ..............................................................................................48

10 ລະບຽບການພັດທະນາຊຸມຊົນ ..................................................................................48

ລະບຽບທີ 1: ຄວາມສາມັກຄີ....................................................................................49

ລະບຽບທີ 2: ຄວາມໂປ່ງໃສ ......................................................................................50

ລະບຽບທີ 4: ຄວາມສະເໝີພາບ..................................................................................52

ລະບຽບທີ 5: ການວາງແຜນແຕ່ຂັ້ນບ້ານ ........................................................................53

ລະບຽບທີ 6: ໃຫ້ໂອກາດແກ່ຜູ້ທຸກຍາກ ........................................................................54

ລະບຽບທີ 7: ກຸ້ມຕົນເອງ..........................................................................................55

ລະບຽບທີ 8: ຄວາມເປັນເຈົ້າຂອງໂຄງການ ......................................................................56

ລະບຽບທີ 9:  ການລົງທຶນຕ້ອງຄຸ້ມຄ່າ ........................................................................................................ 57
ລະບຽບທີ 10:  ການກຳນົດທິດທາງພັດທະນາ ທີ່ຖືກຕ້ອງ ............................................................................ 58
ຂໍ້ແນະນຳໃນການນຳໃຊ້ແຜ່ນໂຄສານາ ຂອງ ທລຍ .................................................................................... 59
ແບບຟອມສັງລວມ ການວິເຄາະບັນຫາຂອງບ້ານໆ...........................................................67
ແບບຟອມຈັດລະດັບຄວາມທຸກຍາກ ຂອງບ້ານຕ່າງໆ ພາຍໃນກຸ່ມບ້ານ..................................68
ແບບຟອມ ລົງທະບຽນຜູ້ເຂົ້າຮ່ວມ ......................................................................................69
ລາຄາຫົວໜ່ວຍ ໂດຍສະເລັ່ຽ ສຳລັບໂຄງການຍ່ອຍພື້ນຖານໂຄງລ່າງ ປະຈຳປີ 2011-12.............70
ສັນຍາລັກ ທີ່ໃຊ້ສຳລັບແຕ້ມແຜນທີ່ບ້ານ ແລະ ແຜນທີ່ກຸ່ມບ້ານ .............................................79
ແບບຟອມການປະເມີນຜົນ ການຝຶກອົບຮົມ ........................................................................82

## ກ. ການຂ້າມຜ່ານຈາກ ທລຍ 1 ສູ່ ທລຍ 2

*ເຂົ້າຫາປະຊາຊົນ,*

*ຢູ່ກັບປະຊາຊົນ,*

*ຮັກປະຊາຊົນ,*

*ເລີ່ມຕົ້ນຈາກສິ່ງທີ່ພວກເຂົາຮູ້,*

*ສ້າງຈາກສິ່ງທີ່ພວກເຂົາມີ*

*ກັບຜູ້ນຳທີ່ດີທີ່ສຸດ,*

*ເມື່ອງານສຳເລັດ,*

*ປະຊາຊົນສາມາດເວົ້າໄດ້ຢ່າງພາກພູມໃຈ,*

*"ເຮົາເຮັດດ້ວຍໂຕເຮົາເອງ"*

**ຄວາມແຕກຕ່າງຕົ້ນຕໍລະຫວ່າງ**
**ກອງທຶນຫລຸດຜ່ອນຄວາມທຸກຍາກ ໄລຍະທີ 1 ແລະ ໄລຍະທີ 2 ມີຄືແນວໃດ?**

- ໃນທ່າມກາງຄວາມພາກພູມໃຈຂອງບັນດາພະນັກງານ ທລຍ ທັງໝົດ ຕໍ່ຜົນງານ ທີ່ຍາດມາໄດ້ ໃນ ທລຍ ໄລຍະໜຶ່ງ, ໃນປັດຈຸບັນ ພວກເຮົາ ເລັງເປົ້າຫມາຍເພື່ອໃຫ້ ທລຍ 2 ເປັນແຜນງານ " **ການພັດທະນາທີ່ຂັບ ເຄື່ອນໂດຍຊຸມຊົນ** " ຢ່າງເຕັມຮູບແບບ ( ຫລື CDD ) ທີ່ຈະປັບປຸງຜົນກະທົບແບບຍາວນານໃນການຫລຸດຜ່ອນຄວາມທຸກຍາກຂອງຊົນນະບົດຢູ່ ສປປ ລາວ.
- ສິ່ງດັ່ງກ່າວນີ້ມີຄວາມຫມາຍວ່າ ທລຍ 2 ຈະບໍ່ເລັງເປົ້າຫມາຍໃສ່ ສະເພາະດ້ານການສະຫນອງພື້ນຖານໂຄງລ່າງໃຫ້ແກ່ຊຸມຊົນ.

***ສັງເກດການປ່ຽນແປງ ຈຸດປະສົງເປົ້າໝາຍ ການພັດທະນາຂອງໂຄງການ.***

***<u>ເປົ້າຫມາຍ ທລຍ 1 ລະບຸວ່າ:</u>*** *" ສະຫນັບສະຫນູນຊາວບ້ານ ໃນການພັດທະນາພື້ນຖານໂຄງລ່າງ ແລະ ປັບປຸງການເຂົ້າເຖິງການບໍລິການ ເພີ່ມຂຶ້ນ"*

***<u>ເປົ້າຫມາຍ ທລຍ 2 ລະບຸວ່າ:</u>*** *" ເພື່ອປັບປຸງການເຂົ້າເຖິງ ແລະ ການນຳໃຊ້ພື້ນຖານໂຄງລ່າງ ແລະ ການບໍລິການ ສຳລັບຊຸມຊົນທີ່ທຸກຍາກ ໂດຍຜ່ານຂະບວນການພັດທະ*

*ນາທີ່ມີສ່ວນຮ່ວມ ຂອງຊຸມຊົນ  ແລະ ອຳນາດການປົກຄອງທ້ອງຖິ່ນ ທັງນີ້ເພື່ອໃຫ້ເກີດການພັດທະນາທີ່ຍືນຍົງ*

- ສິ່ງດັ່ງກ່າວນີ້ ຈະເຄື່ອນຍ້າຍ ທລຍ 1 ຈາກວິທີທາງການພັດທະນາທີ່ອີງໃສ່ຊຸມຊົນ (ໄລຍະ 3) ໄປເປັນ ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ (ໄລຍະ 4) ດັ່ງທີ່ໄດ້ສະແດງໃນແຜນວາດຂ້າງລຸ່ມນີ້ ຊຶ່ງແມ່ນການມອບໜາຍໃຫ້ແກ່ຊຸມຊົນ ໃນການຄວບຄຸມຊັບພະຍາກອນຂອງໂຄງ ການ ແລະ ການຕັດສິນບັນຫາຕ່າງໆ. ທລຍ ແມ່ນໂຄງການທີ່ເນັ້ນໜັກໃສ່ການເພິ່ງພາຕົນເອງ, ການມີສ່ວນຮ່ວມ ແລະ ການມີຄວາມຮັບຜິດຊອບຮ່ວມກັນ.




| ⇧ | ⇧ | ⇧ | ⇧ |
|---|---|---|---|
| ແລກປ່ຽນຂໍ້ມູນ<br>ຊຸມຊົນ ບໍ່ມີສ່ວນຮ່ວມ | ປຶກສາຫາລື<br>ການພັດທະນາທີ່ອີງໃສຊຸມຊົນ | ຊຸມຊົນມີສ່ວນຮ່ວມ<br>ທຸກຂັ້ນຕອນ | ການພັດທະນາທີ່ຂັບເຄື່ອນ<br>ໂດຍຊຸມຊົນ |

- ພວກເຮົາ ຕັ້ງເປົ້າໝາຍເອົາໄວ້ວ່າ ຈະໝູນໃຊ້ບົດຮຽນຂອງປະເທດອື່ນໆ ທີ່ໄດ້ຮັບຜົນສຳເລັດຈາກການນຳໃຊ້ວິທີການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງ  ເຂົ້າໃນການດຳເນີນໂຄງການ, ແຕ່ຕ້ອງໄດ້ດັດປັບໃຫ້ເຂົ້າກັບສະພາບເງື່ອນໄຂຂອງທ້ອງຖິ່ນຊົນນະບົດ ຢູ່ ສປປ ລາວ.

<u>ພວກເຮົາວາງແຜນເຮັດການຂ້າມຜ່ານດັ່ງກ່າວນີ້ຄືແນວໃດ?</u>

1. ພວກເຮົາມີເປົ້າໝາຍເອົາການວາງແຜນແບບມີສ່ວນຮ່ວມ ແຕ່ລຸ່ມຂຶ້ນເທິງ ຢູ່ໃນຂັ້ນບ້ານ ແລະ ຂັ້ນກຸ່ມບ້ານ ທັງນີ້ຍຸດທະສາດເພື່ອບັນລຸເປົ້າໝາຍການຫລຸດຜ່ອນຄວາມທຸກຍາກ ຂອງ ທລຍ II - ຍ້າຍອອກຈາກ ການສຸມໃສ່ແຕ່ການສະໜອງໂຄງລ່າງພື້ນຖານແບບໄວວາເທົ່ານັ້ນ. ສິ່ງດັ່ງກ່າວນີ້  ຈະປະກອບດ້ວຍການແນະນຳສອງບາດກ້າວໃໝ່  ເຊິ່ງຈະສະໜັບສະໜູນການມີສ່ວນ

ຮ່ວມໃນຂະບວນການວາງແຜນ ຂອງ ທລຍ ແລະ ສ້າງຂີດຄວາມສາມາດຂອງຊຸມຊົນ ເຊັ່ນ: ການກຳນົດທິດທາງພັດທະນາບ້ານ ແລະ ການວາງແຜນພັດທະນາກຸ່ມບ້ານ.

2. ພວກເຮົາມີເປົ້າຫມາຍເລັ່ງໃສ່ ສ້າງຂີດຄວາມສາມາດຂອງຊຸມຊົນໃຫ້ຫລາຍຂຶ້ນ ເພື່ອໃຫ້ເຂົາເຈົ້າດຳເນີນການພັດທະນາຊຸມຊົນໂດຍເຂົາເຈົ້າເອງ ແລະ ເພື່ອເພີ່ມທະວີທັດສະນະຄວາມເປັນເຈົ້າການຂອງເຂົາເຈົ້າ ຕໍ່ໝາກຜົນທີ່ໄດ້ຮັບຂອງໂຄງການ.



3. ພວກເຮົາ ຈະເລັ່ງໃສ່ເປົ້າໝາຍຜູ້ທຸກຍາກ ໃຫ້ມີປະສິດທິພາບຂຶ້ນຕື່ມ.
4. ພວກເຮົາມີເປົ້າຫມາຍ ທີ່ຈະເຮັດວຽກຢ່າງໃກ້ຊິດຫລາຍຂຶ້ນ ກັບຂະແໜງການທີ່ກ່ຽວຂ້ອງຂອງລັດ ຢູ່ແຕ່ລະຂັ້ນ.
5. ພວກເຮົາ ຈະຂະຫຍາຍຂອບເຂດພື້ນທີ່ເປົ້າໝາຍຂອງ ທລຍ ອອກໃຫ້ຫລາຍຂຶ້ນ.

**# ຕາຕະລາງສະແດງການວາງແຜນໃນ ທລຍ 2**

| ການປ່ຽນແປງ | | ວິທີການ/ຜົນກະທົບທີ່ຄາດຫວັງ | ເຫດຜົນ |
|---|---|---|---|
| | *I. ການວາງແຜນແບບມີສ່ວນຮ່ວມ* | | |
| 1. | ການນັດໝາຍ ຕໍ່ຊຸມຊົນ, ເພີ່ມທະວີການພັດທະນາແບບມີສ່ວນຮ່ວມ ໂດຍສະເພາະໃນຂັ້ນຕອນການວາງແຜນ. | ທັງສອງກອງປະຊຸມ ຄື: ກອງປະຊຸມກຳນົດທິດທາງພັດທະນາບ້ານ ແລະ ກອງປະຊຸມວາງແຜນພັດທະນາກຸ່ມບ້ານ ຊຶ່ງແຕ່ລະຂັ້ນຈະໄດ້ຈັດຂຶ້ນເປັນເວລາ 2 ມື້ ໃນນັ້ນຈະໄດ້ເນັ້ນໜັກໃສ່ ການມີສ່ວນຮ່ວມຂອງຊຸມຊົນຢ່າງເຕັມສ່ວນ ໂດຍສຸມໃສ່ ການຈຳແນກ ແລະ ເຂົ້າໃຈ ເຖິງສາຍເຫດຄວາມທຸກຍາກ ແລະ ຜົນກະທົບຂອງມັນ ຢູ່ເຂດຊົນນະບົດ. ປັບປຸງ ເຄື່ອງມືເຜີຍແຜ່ຂໍ້ມູນ-ຂ່າວສານ ທັງນີ້ເພື່ອປູກຝັງຈິດສຳນຶກ ແລະ ເພີ້ມຄວາມເຂົ້າໃຈຂອງມະຫາຊົນ ກ່ຽວກັບ ຫລັກເກນ ແລະ ວິທີການເຮັດວຽກຂອງ ທລຍ. | ການມີສ່ວນຮ່ວມທີ່ເຂັ້ມແຂງ ແລະ ການສືບຕໍ່ ໃຫ້ຜູ້ໄດ້ຮັບປະໂຫຍດ ມີສ່ວນຮ່ວມຕະຫລອດໄລຍະຮອບວຽນຂອງໂຄງການ (ການວາງແຜນ, ອອກແບບໂຄງການຍ່ອຍ, ຈັດຕັ້ງປະຕິບັດ, ການຄຸ້ມຄອງການເງິນ, ການຕິດຕາມ ແລະ ປະເມີນຜົນ) ແມ່ນມີຄວາມສຳຄັນ ເພື່ອເຮັດໃຫ້ໂຄງການ ທີ່ນຳໃຊ້ຮູບແບບການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງ ໄດ້ຮັບຜົນ. |
| 2. | ເນັ້ນຫນັກໃສ່ ການວາງແຜນແບບກວມລວມ (ບໍ່ແມ່ນພຽງແຕ່ໂຄງລ່າງຂະຫນາດນ້ອຍຂັ້ນບ້ານເທົ່ານັ້ນ) | ທັງສອງກອງປະຊຸມ ຄື: ກອງປະຊຸມກຳນົດທິດທາງພັດທະນາບ້ານ ແລະ ກອງປະຊຸມວາງແຜນພັດທະນາກຸ່ມບ້ານ ເນັ້ນຫນັກໃສ່ການວາງແຜນແບບກວ້າງໆ ໃນໄລຍະຍາວ ແລະ ກຳນົດເປົ້າຫມາຍການພັດທະນາ, ບໍ່ແມ່ນພຽງແຕ່ສະໜອງໂຄງລ່າງ (ເຖິງວ່າ ທລຍ 2 ຈະສືບຕໍ່ສະຫນອງທຶນໃຫ້ແກ່ໂຄງການຍ່ອຍ ດ້ານພື້ນຖານໂຄງລ່າງ ກໍຕາມ). | ຊຸມຊົນພິຈາລະນາເອງໃນທຸກດ້ານ ກ່ຽວກັບ ການກຳນົດເປົ້າຫມາຍການພັດທະນາ ແລະ ຈັດລຳດັບບູລິມະສິດຄວາມຕ້ອງການ ຊຶ່ງນອນຢູ່ໃນຂັ້ນຕອນ ການກຳນົດທິດທາງພັດທະນາບ້ານ ແລະ ການວາງແຜນພັດທະນາກຸ່ມບ້ານ. ນອກຈາກນັ້ນ ແຜນພັດທະນາກຸ່ມບ້ານດັ່ງກ່າວ ຍັງສາມາດນຳໃຊ້ ເຂົ້າໃນການວາງແຜນຂອງລັດ ແລະ ໂຄງການພັດທະນາອື່ນໆ. |
| 3. | ສ້າງຄວາມພະຍາຍາມ ທີ່ໃຫຍ່ຫລວງ ຕໍ່ການມີສ່ວນຂອງແມ່ຍິງໃນທຸກດ້ານຂອງໂຄງການ | ເພີ່ມການຝຶກອົບຮົມຕື່ມ ກ່ຽວກັບຄວາມສະເຫມີໃນດ້ານບົດບາດຍິງ-ຊາຍ ເພື່ອຮັບປະກັນວ່າເປົ້າຫມາຍ ທີ່ລະອຽດອ່ອນດ້ານບົດ ບາດຍິງ-ຊາຍ ມີຜົນສຳເລັດ. ສືບຕໍ່ການ | ຄວາມພາກພຽນພະຍາຍາມຫລຸດຜ່ອນຄວາມ ທຸກຍາກ ມີທ່າອ່ຽງທີ່ຈະບໍ່ມີປະສິດທິພາບ ຖ້າຫາກວ່າມັນບໍ່ໃຫ້ແມ່ຍິງແລະ ກຸ່ມດ້ອຍໂອກາດ ອື່ນໆ ມີສ່ວນໂດຍ |

| | | | |
|---|---|---|---|
| | | ເຂົ້າຮ່ວມຂອງແມ່ຍິງ ໂດຍສະເພາະການເປັນຜູ້ປະສານງານກຸ່ມບ້ານ ແລະ ຕົວແທນບ້ານ. | ກິງ ໃນຂະບວນການຕັດສິນໃຈ. |
| | *II. ປັບປຸງ ການສ້າງຂີດຄວາມສາມາດແລະ ຄວາມເປັນເຈົ້າການ ຂອງຊຸມຊົນ* | | |
| 4. | ການວາງແຜນໄລຍະເວລາ 4 ປີ ໂດຍການໃຫ້ສຳພັນສັນຍາ ຕໍ່ການສະໜອງທຶນໄລຍະຍາວ ຈາກ ທລຍ | ກຸ່ມບ້ານຈະສ້າງແຜນພັດທະນາກຸ່ມບ້ານ ເພື່ອກຳນົດບູລິມະສິດຄວາມຕ້ອງການ ແລະ ເປົ້າໝາຍການພັດທະນາຂອງເຂົາເຈົ້າ ໃນໄລຍະເວລາ 4 ປີ. ການສະໜອງທຶນຈະຖືກຈັດແບ່ງໃຫ້ແຕ່ລະກຸ່ມ ເປັນໄລຍະ 4 ປີ. | ການຫລຸດຜ່ອນຄວາມທຸກຍາກ ແມ່ນຂະບວນການນຶ່ງທີ່ໃຊ້ເວລາຍາວນານ, ສິ່ງດັ່ງກ່າວນີ້ ຈະເປັນການອຳນວຍໃຫ້ຊຸມຊົນ ມີທັດສະນະຍາວ ກ່ຽວກັບການພັດທະນາ ແລະ ສ້າງຄວາມໝັ້ນໃຈໃນຄວາມອາດສາມາດຂອງເຂົາເຈົ້າ ທີ່ຈະຈຳແນກ ແລະ ດຳເນີນການກັບບັນຫາຮາກເຫງົ້າຂອງຄວາມທຸກຍາກ. |
| 5. | ເພີ້ມການຄວບຄຸມຂອງຊຸມຊົນ ຕໍ່ຊັບພະຍາກອນຕ່າງໆຂອງໂຄງການ | ຊຸມຊົນຈະເປັນຜູ້ ຄວບຄຸມຊັບພະຍາກອນຢ່າງເຕັມສ່ວນ ໃນນີ້ລວມທັງການຕັດສິນໃຈ ແລະ ການນຳໃຊ້ ຊັບພະຍາກອນຕ່າງໆເຫລົ່ານັ້ນ ເຊັ່ນ: ວຽກງານການຈັດຊື້-ຈັດຈ້າງ ທີ່ດຳເນີນການໂດຍຊຸມຊົນ ຈະໄດ້ຮັບການຊຸກຍູ້. | ການເພີ່ມ ການຄວບຄຸມຊັບພະຍາກອນໂດຍຊຸມຊົນຈະເປັນການລິເລີ້ມ ການສ້າງຄວາມເປັນເຈົ້າການໃຫ້ເຂົາເຈົ້າ. ສິ່ງດັ່ງກ່າວນີ້ ຍັງຈະເຮັດໃຫ້ເປັນການປັບປຸງທັງດ້ານຄຸນນະພາບຂອງໂຄງການ ແລະ ເຮັດໃຫ້ການໃຊ້ຈ່າຍງົບປະມານ ມີປະສິດທິພາບຂຶ້ນ. |
| 6. | ເພີ່ມ ການສ້າງຄວາມໂປ່ງໃສ ແລະ ການກວດສອບ ຢູ່ໃນລະດັບຊຸມຊົນ | ເສີມຂະຫຍາຍ ກົນໄກການສະແດງຄຳຄິດຄຳເຫັນ ແລະ . ແກ້ໄຂບັນຫາ. ປັບປຸງອຸປະກອນເຜີຍແຜ່ຂໍ້ມູນ-ຂ່າວສານ ແລະ ວິທີການປຸກລະດົມໂຄສະນາຂົນຂວາຍ ເພື່ອຮັບປະກັນວ່າ ຊຸມຊົນມີຄວາມເຂົ້າໃຈ ກ່ຽວກັບລະບຽບ ຫລັກການ ແລະ ວິທີການເຮັດວຽກ ຂອງ ທລຍ 2.<br>ໜ່ວຍງານກວດກາບັນຊີພາຍໃນ ສ້າງຕັ້ງຂຶ້ນຫ້ອງການ ທລຍ ສູນກາງ. ບັນຈຸພະນັກງານການເງິນ/ຈັດຊື້ ຢູ່ລະດັບ | ກົນໄກ ທີ່ສ້າງຄວາມໂປ່ງໃສ ແລະ ການກວດສອບແມ່ນມີຄວາມີຈຳເປັນ ພາຍໃຕ້ໂຄງການ ພັດທະນາທີ່ຂັບເຄື່ອນໂດຍຊຸມຊົນເອງ. ຊຶ່ງຈະເປັນການຮັບປະກັນໃຫ້ການນຳໃຊ້ຊັບງົບປະມານຂອງໂຄງການງົບປະມານຂອງໂຄງການ ໃຫ້ເກີດປະໂຫຍດສູງ, ເຮັດໃຫ້ຊຸມຊົນທຸກຄົນ ໄດ້ຮັບທຸກໆຂໍ້ມູນ-ຂ່າວສານ ຂອງໂຄງການ ຊຶ່ງຈະເຮັດໃຫ້ມີຄວາມໂປ່ງໄສຂື້ນ. |

| | | | |
|---|---|---|---|
| | | ເມືອງເຂົ້າຕື່ມ. | |
| | *III. ເລັງເປົ້າໝາຍໃສ່ຜູ້ທຸກຍາກ ຢ່າງມີປະສິດທິພາບຂຶ້ນຕື່ມ* | | |
| 7. | ເລັງເປົ້າໝາຍໃສ່ຜູ້ທຸກຍາກຫລາຍຂຶ້ນ | 66% ຂອງໂຄງການຍ່ອຍທັງໝົດ ຈະຕ້ອງສ້າງປະໂຫຍດໃຫ້ແກ່ຫມູ່ບ້ານທີ່ທຸກຍາກທີ່ສຸດ ຫລື ຂົງເຂດຂອງກຸ່ມບ້ານ ການຕິດຕາມ ແລະ ປະເມີນຜົນ ກ່ຽວກັບຜົນກະທົບ ຕໍ່ທຸກຍາກ ຈະຕ້ອງໄດ້ເຮັດຢ່າງລະມັດລະວັງ, ໂດຍເລັງໃສ່ຜົນກະທົບທີ່ຈະໄດ້ຮັບທີ່ຈະໄດ້ຕາມພາຍຫລັງ ຫລາຍກວ່າຜົນຜະລິດທີ່ເຫັນ. (ຕົວຢ່າງ ປັບປຸງອັດຕາການເຂົ້າຮຽນ ແທນທີ່ຈະເອົາການກໍ່ສ້າງໂຮງຮຽນ). | ເພື່ອໃຫ້ການຫລຸດຜ່ອນຄວາມທຸກຍາກໃຫ້ມີ ປະສິດທິພາບທີ່ສຸດການເລັງເປົ້າຫມາຍຄວາມທຸກຍາກ ຢ່າງຮອບຄອບ ແມ່ນສິ່ງຈໍາເປັນໃນທັງລະດັບຄົວເຮືອນ ແລະ ບ້ານ. |
| 8. | ເນັ້ນຫນັກໃສ່ການເຂົ້າເຖິງ ແລະ ການນໍາໃຊ້ພື້ນຖານໂຄງລ່າງ ຫລາຍກວ່າການກໍ່ສ້າງ | ຮັບປະກັນ ຍຸດທະສາດຂອງໂຄງການຍ່ອຍໄດ້ຮັບຜົນສໍາເລັດ ທັງນີ້ເພື່ອໃຫ້ໄດ້ປະໂຫຍດສູງສຸດ ແລະ ໃຫ້ຊຸມຊົນເຂົ້າເຖິງການນໍາໃຊ້ໄດ້. ສິ່ງເສີມການສະໜັບສະໜູນ ຫລື ເພີ່ມການຝຶກອົບຮົມ ໃຫ້ແກ່ຊຸມຊົນ ໃນການເພີ່ມທະວີການນໍາໃຊ້ ແລະ ການເຂົ້າເຖິງໂຄງການຍ່ອຍ ( ເຖິງຢ່າງໃດກໍຕາມ, ການສະຫນອງທຶນໂດຍ ທລຍ ຈະບໍ່ມີໃຫ້ແກ່ການຝຶກອົບຮົມວິຊາຊີບ ທີ່ມີລັກສະນະແບບໂດດດ່ຽວ. | ໂຄງລ່າງພື້ນຖານ ຈະບໍ່ມີປະໂຫຍດ ຖ້າຫາກວ່າ:<br>- ບໍ່ສາມາດເຂົ້າເຖິງໄດ້ຢ່າງສະດວກ (ໂດຍສະເພາະຕໍ່ຄົວເຮືອນ ທີ່ທຸກຍາກທີ່ສຸດ).<br>- ຊຸມຊົນ ບໍ່ຮູ້ວ່າ ຈະນໍາໃຊ້ຄືແນວໃດ;<br>- ການບໍາລຸງຮັກສາບໍ່ໄດ້ ຫລື ບ້ານບໍ່ໄດ້ຮັບການຝຶກອົບຮົມກ່ຽວກັບການບໍາລຸງຮັກສາ<br>-ຊຸມຊົນ ບໍ່ເຂົ້າໃຈ ກ່ຽວກັບຄໍາວ່າເປັນເຈົ້າການ. |
| | *IV. ເຮັດວຽກຢ່າງໃກ້ຊິດ ຮ່ວມກັບເບື້ອງລັດ* | | |
| 9. | ເນັ້ນຫນັກຫລາຍກວ່າເກົ່າ ກ່ຽວກັບການສ້າງຂີດຄວາມສາມາດ ຂອງບັນດາສະຖາບັນຂອງລັດ. | ຄວາມພະຍາຍາມ ທີ່ຫນຽວແຫນັ້ນທີ່ຈະໃຫ້ອົງການລັດ ມີສ່ວນກ່ຽວພັນ ແລະ ສ້າງຂີດຄວາມສາມາດຂອງພະນັກງານ ທລຍ ແລະ ຄູ່ຮ່ວມງານລັດໃນທຸກລະດັບ, ໂດຍສະ | ເພື່ອຮັບປະກັນ ຄວາມຍືນຍົງໃນໄລຍະຍາວ, ຈຶ່ງມີຄວາມຈໍາເປັນ ສໍາລັບເບື້ອງລັດ ຜູ້ທີ່ເປັນເຈົ້າພາບ ( ໃນລະດັບ ສູນກາງ, ແຂວງ, ເມືອງ ແລະ ກຸ່ມບ້ານ) |

| | | | |
|---|---|---|---|
| | | ເພາະຜ່ານວິທີທາງ " ທັງຮຽນທັງເຮັດ" | ໄດ້ຮັບການເຜີຍແຜ່ ກ່ຽວກັບວິທີທາງແບບມີສ່ວນຮ່ວມ ແລະ ມີບົດບາດ ໃນການຈັດຕັ້ງປະຕິບັດທຸກໜ້າວຽກຂອງໂຄງ ການ. |
| 10. | ເລັ່ງໃສ່ ລະດັບກຸ່ມບ້ານ ຫລາຍກວ່າລະດັບບ້ານ | ການຕັດສິນໃຈ ກ່ຽວກັບການຄັດເລືອກໂຄງການຍ່ອຍ ຈະໄດ້ດຳເນີນ ຢູ່ລະດັບກຸ່ມບ້ານ (ໂດຍຕົວແທນຂອງບ້ານ ຢູ່ໃນໄລຍະຢູ່ກອງປະຊຸມວາງແຜນພັດທະນາກຸ່ມບ້ານ)<br>ທລຍ 2 ສ້າງຄວາມເຂັ້ມແຂງ ໃນການເຊື່ອມຕໍ່ລະຫວ່າງການວາງແຜນ ແລະ ງົບປະມານທີ່ຈັດສັນໃຫ້. | ການພັດທະນາທີ່ມີປະສິດທິພາບ ຮຽກຮ້ອງໃຫ້ດຳເນີນວິທີການພັດທະນາທີ່ກວ້າງອອກໄປ ແລະ ລວມທັງດ້ານຍຸດທະສາດ (ນອກເໜືອຈາກລະດັບບ້ານ) ທັງນີ້ເພື່ອເພີ່ມຜົນກະທົບຈາກໂຄງການໃຫ້ຫລາຍຂື້ນ.<br>ການເລັ່ງໃສ່ ລະດັບກຸ່ມບ້ານ ຍັງສອດຄ່ອງກັບທິດທາງນະໂຍບາຍຂອງລັດ. ໂດຍການສະໜອງທຶນໂຄງການໄລຍະ 4 ປີ, ອັນນີ້ຈະເປັນເອື້ອອຳນວຍໃຫ້ການວາງແຜນໃນໄລຍະຍາວ. |
| | ***V. ຂະຫຍາຍ ພື້ນທີ່ເປົ້າໝາຍຂອງ ທລຍ 2*** | | |
| 11. | ເພີ່ມທະວີການສະໜັບສະໜູນຈາກຜູ້ໃຫ້ທຶນ ແລະ ລັດຖະບານ ສປປ ລາວ = ຊັບພະຍາກອນຫລາຍຂື້ນ = ການຂະຫຍາຍໂຄງການ ໄປສູ່ແຂວງໃໝ່. | ຂໍ້ຕົກລົງ ລະຫວ່າງຂະແໜງການ ທີ່ກ່ຽວຂ້ອງຂອງລັດ ( ເຊັ່ນ: ສຶກສາ, ສາທາລະນະສຸກ....) ເພື່ອສະໜອງການສະໜັບສະໜູນເພີ່ມຕື່ມໃຫ້ແກ່ໂຄງການຍ່ອຍ(ປະກອບດ້ວຍການຕໍ່ການປະຕິ ບັດງານ ແລະ ບຳ ລຸງຮັກສາບັນດາໂຄງລ່າງຂອງ ທລຍ 2) | ເພີ່ມທະວີຄວາມເຊື່ອໝັ້ນຈາກຜູ້ໃຫ້ທຶນ ແລະ ລັດຖະບານ = ເພີ່ມທະວີຄວາມຮັບຜິດ ຊອບ ເພື່ອເຮັດໃຫ້ແນ່ນອນວ່າ ເປົ້າໝາຍແຜນງານສາມາດບັນລຸໄດ້, ຫລັກການແຜນງານແມ່ນໄດ້ຮັບການເຄົາລົບ ແລະ ການສ້າງຂີດຄວາມສາມາດຂອງທ້ອງຖິ່ນແມ່ນໄດ້ ຮັບການປັບປຸງ. |

# ຂ. ກົດເກນ 10 ຢ່າງຂອງການເປັນຜູ້ອຳນວຍຄວາມສະດວກທີ່ດີ

**ເປົ້າໝາຍ: ເພື່ອປັບປຸງ ທັກສະໃນການເປັນຜູ້ອຳນວຍຄວາມສະດວກ.**

1. **ຟັງຫລາຍກວ່າເວົ້າ.**

   ຈົ່ງຢ່າບັນລະຍາຍ, ວາງຕົວແບບມີປະຕິກິລິຍາໂຕ້ຕອບໃນການສົນທະນາ. ນຳສະເໜີແນວຄວາມຄິດຫລັກ ແລະ ຈຸດປະສົງ ໃນຂັ້ນຕອນຂອງການເລີ່ມຕົ້ນປະຊຸມ, ຫຼັງຈາກນັ້ນ ຈຶ່ງຄວນປ່ອຍໃຫ້ນັກສຳມະນາກອນ ເປັນຜູ້ເວົ້າເກືອບທັງໝົດ.

2. **ຮັບປະກັນການມີສ່ວນຮ່ວມຢ່າງເຕັມສ່ວນ.**

   ປະຕິບັດຕໍ່ນັກສຳມະນາກອນຢ່າງເທົ່າທຽມກັນ ແລະ ດ້ວຍຄວາມເຄົາລົບ. ກວດສອບໃຫ້ໝັ້ນໃຈວ່າ ຜູ້ທີ່ບໍ່ມັກເວົ້າຈະມີໂອກາດໃນການປາກເວົ້າ. ຈົ່ງຢ່າປ່ອຍໃຫ້ຜູ້ໃດຜູ້ນຶ່ງຄວບຄຸມກອງປະຊຸມເກືອບທັງໝົດ (ໂດຍການໃຊ້ສຽງດັງ, ໃຊ້ພາສາທີ່ແຂງກະດ້າງ, ເວົ້າຫລາຍໂພດ), ເຖິງແມ່ນວ່າຈະແມ່ນພະນັກງານລັດ, ຜູ້ຊີ້ນຳກຸ່ມບ້ານ ຫລື ຄະນະບ້ານ. ອາດຈະນຳໃຊ້ "ໄມ້ສັນຍາລັກປ່ຽນຜຽນເວົ້າ" ເພື່ອຊ່ວຍເຮັດໃຫ້ ກຸ່ມສົນທະນາ ຮັກສາຈຸດສຸມຄວາມສົນໃຈ.

3. **ໝັ້ນໃຈວ່າຈະໄດ້ຍິນສຽງຂອງແມ່ຍິງ.**

   ຊຸກຍູ້ແມ່ຍິງ ແລະ ກຸ່ມຊົນເຜົ່າ ໂດຍໃຫ້ໂອກາດເຂົ້າເຈົ້າໄດ້ອອກຄຳຄິດເຫັນ. ຖ້າມີຄວາມຈຳເປັນ, ຄວນແຍກອອກເປັນກຸ່ມຍ່ອຍ ຫຼື ສຳລັບແມ່ຍິງຕ່າງຫາກ. (ໝັ້ນໃຈວ່າ ມີການແປພາສາສຳລັບຜູ້ທີ່ປາກເວົ້າພາສາຊົນເຜົ່າ.)

4. **ນຳໃຊ້ສິ່ງປະຈັກຕາ**

   ໝາຍເຖິງອຸປະກອນທີ່ນຳໃຊ້ ເຊັ່ນ ຮູບພາບ, ຮູບແຕ້ມ, ສັນຍາລັກຕ່າງໆ ເພື່ອເຮັດໃຫ້ກອງປະຊຸມເປັນໜ້າສົນໃຈຂຶ້ນຕື່ມ, ໂດຍສະເພາະ ຢູ່ໃນທ້ອງຖິ່ນທີ່ມີອັດຕາການກຶກໜັງສືສູງ. ຄວນນຳໃຊ້ອຸປະກອນເຫລົ່ານີ້ ໃຫ້ຫລາຍເທົ່າທີ່ຈະຫລາຍໄດ້.

5. **ຮັບປະກັນ ໃຫ້ມີຄວາມເຂົ້າໃຈໃນລັກສະນະດຽວກັນ.**



ກວດກາຄືນເບິ່ງວ່າ ທຸກຄົນໄດ້ມີຄວາມເຂົ້າໃຈຫຼາຍໜ້ອຍພຽງໃດ. ໂດຍເຊີນໃຫ້ນັກສຳມະນາກອນອະທິບາຍຄືນ ໃນສິ່ງທີ່ທ່ານເອງໄດ້ອະທິບາຍໄປແລ້ວ (ຕົວຢ່າງ " ທ່ານເຂົ້າໃຈແນວໃດ ເມື່ອຂ້າພະເຈົ້າເວົ້າວ່າ "ການພັດທະນາແບບມີສ່ວນຮ່ວມ"). ຈົ່ງໃຊ້ຄຳສັບຕາມທີ່ທ່ານເຂົ້າໃຈ ເພື່ອອະທິບາຍເຖິງຈຸດທີ່ຜູ້ເຂົ້າຮ່ວມປະຊຸມໄດ້ອ້າງອີງເຖິງ.

**6. ກະກຽມເປັນຢ່າງດີ.**

- ໝັ້ນໃຈວ່າທ່ານຮູ້ຈັກ ເປັນການລ່ວງໜ້າ ວ່າກອງປະຊຸມ ຈະຈັດຂຶ້ນຢູ່ໃສ.
- ໝັ້ນໃຈວ່າ ອຸປະກອນທຸກຢ່າງ ທີ່ທ່ານຕ້ອງການ ມີພ້ອມສຳລັບນຳໃຊ້ (ແຜ່ນເຈັ້ຍ, ປາກກາຂຽນ , ອຸ ປະກອນໂຄສະນາເຜີຍແຜ່ , ເຄື່ອງມືຮັບໃຊ້ໃນການນັບ ເຊັ່ນ: ຖ້ວຍ ຫຼື ກະຕ່າ...).
- ປະພຶດເປັນແບບຢ່າງທີ່ດີ ໂດຍການມາປະຊຸມຕົງຕໍ່ເວລາ (ມາທັນເວລາ).
- ຮູ້ຂະໜາດຂອງກຸ່ມ ທີ່ທ່ານຈະເຮັດວຽກນຳ ແລະ ທ່ານປະສົງຢາກແຍກອອກເປັນກຸ່ມຍ່ອຍຫລືບໍ່ (ຖ້າເປັນເຊັ່ນນັ້ນ, ບົນພື້ນຖານອັນໃດ ທີ່ທ່ານຈະແບ່ງກຸ່ມ ຕົວຢ່າງ: ແບ່ງຕາມເພດ, ອາຍຸ, ຊົນເຜົ່າ).

**7. ມີຜູ້ບັນທຶກນຶ່ງຄົນ.**

ມອບໝາຍໃຫ້ຜູ້ນຶ່ງເປັນຜູ້ບັນທຶກກອງປະຊຸມ (ອາດຈະແມ່ນຜູ້ປະສານງານກຸ່ມບ້ານ). ຜູ້ກ່ຽວຈະບັນທຶກການຕັດສິນໃຈຕົ້ນຕໍໃນກອງປະຊຸມ, ຈົດກ່າຍເອົາແຜນທີ່ (ຈາກການສ້າງແຜນວາດ) ແລະ ຮັກສາເວລາ (ບອກເຕືອນ ຜູ້ອຳນວຍຄວາມສະດວກ ເມື່ອກອງປະຊຸມໝົດເວລາ).

**8. ບໍລິຫານເວລາຢ່າງສະຫລາດ.**

ຮັກສາກອງປະຊຸມໃຫ້ຢູ່ໃນຂອບເຂດເວລາ ແລະເນື້ອຫາ, ແຕ່ກໍຕ້ອງມີການດັດປັບໄດ້. ຮູ້ຈັກວ່າ ເມື່ອໃດຄວນເຂົ້າແຊກແຊງໃນການຄົ້ນຄວ້າ ເພື່ອເຮັດໃຫ້ກອງປະຊຸມດຳເນີນໄປຕາມລະບຽບວາລະ ແລະ ສິ່ງທີ່ກຳນົດການໄວ້.

**9. ເລັງເປົ້າໝາຍໃສ່ກຸ່ມທີ່ມີຂະໜາດນ້ອຍກວ່າ.**

ຈົ່ງພະຍາຍາມ ຮັກສາຂະໜາດຂອງກຸ່ມບໍ່ໃຫ້ກາຍ 25 ຄົນ ຖ້າຫາກຈຳເປັນ, ໃຫ້ພິຈາລະນາແບ່ງ ອອກເປັນກຸ່ມຍ່ອຍ ແລະ ແຕ່ງຕັ້ງຜູ້ອຳນວຍຄວາມສະດວກ ແລະ ຜູ້ບັນທຶກຢ່າງລະໜຶ່ງຄົນສຳລັບແຕ່ລະກຸ່ມ. ພິຈາລະນາແບ່ງຜູ້ຊາຍ ແລະ ກຸ່ມແມ່ຍິງ ອອກເປັນກຸ່ມຕ່າງຫາກ ແລະ ຖ້າຫາກເໝາະສົມຍ້ອນເຫດ ຜົນທາງພາສາ, ຈົ່ງແຍກກຸ່ມສະເພາະຊົນເຜົ່າ ແລະ ອາດເປັນປະໂຫຍດ ຖ້າຈະແບ່ງກຸ່ມອີງຕາມອາຍຸ (ຕົວ ຢ່າງ ກຸ່ມທີ່ແຕ່ງງານແລ້ວ ແລະ ກຸ່ມທີ່ຍັງເປັນໂສດ).

**10. ຮັກສາການມີອາລົມເບີກບານ ສະນຸກສະໜານ.**

ການມີສ່ວນຮ່ວມຈາກຜູ້ເຂົ້າຮ່ວມກອງປະຊຸມຈະດີຫຼາຍ ຖ້າຫາກກອງປະຊຸມເຕັມໄປດ້ວຍຄວາມມ່ວນຊື່ນ!

# ຄ. ກອງປະຊຸມແນະນຳໂຄງການຂັ້ນບ້ານ

*<u>ກອງປະຊຸມແນະນຳໂຄງການຂັ້ນບ້ານ: ແມ່ນກອງປະຊຸມນຶ່ງ ທີ່ມີຄວາມຈຳເປັນ</u>*

ກອງປະຊຸມແນະນຳໂຄງການຂັ້ນບ້ານ ຈະໄດ້ຈັດຂຶ້ນຢູ່ແຕ່ລະບ້ານພາຍໃນກຸ່ມບ້ານເປົ້າໝາຍຂອງໂຄງການ, ໂດຍປົກກະຕິຈະຕ້ອງຈັດຂຶ້ນ ໃນອາທິດຕໍ່ໄປ ຫລັງຈາກກອງປະຊຸມແນະນຳໂຄງການຂັ້ນເມືອງ ແລະ ຂັ້ນກຸ່ມບ້ານສຳເລັດລົງ. ຢູ່ພື້ນທີ່ເມືອງເປົ້າໝາຍເກົ່າຂອງໂຄງການນັ້ນ ຜູ້ດຳເນີນກອງປະຊຸມແມ່ນ ຜູ້ປະສານງານກຸ່ມບ້ານ ຊຶ່ງເປັນຜູ້ທີ່ມີປະສົບການມາກ່ອນແລ້ວ, ສ່ວນພື້ນທີ່ເປົ້າໝາຍໃໝ່ຂອງໂຄງການ ການດຳເນີນກອງປະຊຸມແມ່ນຜູ້ປະສານງານໃໝ່, ແຕ່ເຂົາເຈົ້າຈະໄດ້ຮັບການຊ່ວຍເຫລືອແນະນຳຈາກພະນັກງານ ທລຍ ເມືອງ, ພະນັກງານ ທລຍ ແຂວງ ແລະ/ຫຼື ຜູ້ປະສານງານກຸ່ມບ້ານຈາກກຸ່ມບ້ານອື່ນທີ່ມີປະສົບການແລ້ວ.

ຕ້ອງໄດ້ໃຊ້ທຸກຄວາມພະຍາມຍາມ ເພື່ອແຈ້ງໃຫ້ຊາວບ້ານຮັບຮູ້ກ່ອນ ກ່ຽວກັບການທີ່ຈະຈັດກອງປະຊຸມ, ວັນເວລາ ແລະ ສະຖານທີ່ຈັດກອງປະຊຸມດັ່ງກ່າວ ແລະ ຊຸກຍູ້ໃຫ້ຊາວບ້ານຮ່ວມໃຫ້ໄດ້ຕາມລະດັບຄາດໝາຍ. ອີງໃສ່ປະສົບການຜ່ານມາເຫັນວ່າ ວິທີທີ່ໄດ້ຮັບຜົນ**ແມ່ນ ນາຍບ້ານ, ຮອງນາຍບ້ານ ແລະ ຜູ້ຕາງໜ້າອົງການຈັດຕັ້ງມະ ຫາຊົນຂອງບ້ານ ເປັນຜູ້ໄປປະກາດ ຫຼື ປ່າວຂ່າວໃຫ້ແຕ່ລະຄອບຄົວ**, ພ້ອມດຽວກັນກໍຕ້ອງໄດ້ນຳໃຊ້ວິທີ ປະກາດແຈ້ງການຢູ່ກະດານຂ່າວຂອງບ້ານ ແລະ ປະກາດແຈ້ງການຢູ່ໂຮງຮຽນ, ຢູ່ວັດ ແລະ ອື່ນໆ....

ຢ່າງໜ້ອຍຜູ້ປະສານງານກຸ່ມບ້ານ
ຄວນຈະໄປພົບກັບບ້ານທີ່ຈະຈັດກອງປະຊຸມນັ້ນກ່ອນນຶ່ງອາທິດທັງນີ້ ເພື່ອເປັນການ ຢັ້ງຢືນວ່າສະຖານທີ່ຈັດກອງປະຊຸມຈະຈັດຢູ່ໃສ (ປົກກະຕິອາດຈະແມ່ນໂຮງຮຽນ, ວັດ, ຕະຫລາດຊຸມຊົນ ຫຼື ສະຖານທີ່ອື່ນໆຕາມຄວາມເໝາະສົມ ທີ່ຈະສາມາດຮັບຜູ້ທີ່ ຈະເຂົ້າຮ່ວມຈຳນວນຫລາຍໄດ້.

**ຢ່າງໜ້ອຍ 50% ຂອງຈຳນວນຜູ້ໃຫ່ຍຜູ້ຊາຍ ແລະ 50% ຂອງຈຳນວນຜູ້ໃຫ່ຍຜູ້ຍິງພາຍໃນບ້ານ (ທີ່ມີອາຍຸ 14 ປີຂຶ້ນໄປ) ຕ້ອງໄດ້ເຂົ້າຮ່ວມກອງປະຊຸມແນະນຳໂຄງການ, ຖ້າຫາກຜູ້ເຂົ້າຮ່ວມບໍ່ຄົບຕາມຈຳນວນທີ່ກຳນົດໄວ້ ສະເໜີໃຫ້ເລື່ອນກອງປະຊຸມດັ່ງກ່າວນີ້ອອກໄປມື້ໃໝ່.** ຜູ້ປະສານງານກຸ່ມບ້ານຈະຕ້ອງໃຊ້ຄວາມພະຍາຍາມທຸກ ວິທີທາງ ເພື່ອຮັບປະກັນວ່າ ທຸກພາກສ່ວນພາຍໃນບ້ານ (ເຊັ່ນ: ຊົນເຜົ່າ, ຜູ້ເສັ່ງອົງຄະ (ຄົນພິການ), ຜູ້ທຸກຍາກ, ຜູ້ຕາງໜ້າໃຫ້ແກ່ເດັກນ້ອຍ ແລະ ຜູ້ຕາງໜ້າຜູ້ອາວຸໂສ ຕ້ອງໄດ້ເຂົ້າຮ່ວມກອງປະຊຸມດັ່ງກ່າວຢ່າງພ້ອມພຽງກັນ.

<u>ສະຖານທີ່ຈັດກອງປະຊຸມ:</u>

ສະໂມສອນບ້ານ ຫຼື ໂຮງຮຽນ ຫຼື ບ່ອນອື່ນໆ ທີ່ມີຄວາມເໝາະສົມ ແລະ ສາມາດຮອງຮັບຈຳນວນຜູ້ເຂົ້າຮ່ວມໄດ້ພຽງພໍ.

<u>ປະທານກອງປະຊຸມ</u>:

ນາຍບ້ານ

ຜູ້ດຳເນີນກອງປະຊຸມ:

ຜູ້ປະສານງານ ທລຍ ຂັ້ນກຸ່ມບ້ານ

ຜູ້ເຂົ້າຮ່ວມ:

ຊາວບ້ານ, ຜູ້ຕາງໜ້າຈາກຫ້ອງການກໍ່ສ້າງຮາກຖານຂັ້ນເມືອງ, ອົງການຈັດຕັ້ງສາກົນ ຫຼື ໂຄງການພັດທະນາອື່ນໆ ທີ່ກຳລັງເຮັດວຽກ ຢູ່ພື້ນທີ່ດັ່ງກ່າວ.

ຈຸດປະສົງຂອງກອງປະຊຸມ:

ແນະນຳຊາວບ້ານ ກ່ຽວກັບຈຸດປະສົງຫລັກ, ວິໃສທັດ, ຫລັກການ, ລະບຽບ ແລະ ວິທີການຈັດຕັ້ງປະຕິບັດໂຄງການ ທລຍ.

*ເນື້ອໃນກອງປະຊຸມ:*

ແນະນຳໂຄງການ ທລຍ 2 (ໃຊ້ຊຸດເຄື່ອງມືເຜີຍແຜ່ຂໍ້ມູນຂ່າວສານ ທີ່ເປັນຮູບພາບ 10 ລະບຽບສຳລັບຊຸມຊົນ).

**ໂດຍປະກອບມີບັນດາຫົວຂໍ້ດັ່ງນີ້:**

- ໂຄງຮ່າງການຈັດຕັ້ງຂອງ ທລຍ ສະເພາະຂັ້ນເມືອງ, ກຸ່ມບ້ານ ແລະ ຂັ້ນບ້ານ;
- ຈຸດປະສົງ, ຫລັກການ ແລະ ວິທີຈັດຕັ້ງປະຕິບັດໂຄງການທີ່ສຳຄັນ;
- ວິທີການວາງແຜນການພັດທະນາກຸ່ມບ້ານ ໄລຍະ 5 ປີ;
- ວິທີຈັດສັນງົບປະມານໃຫ້ແກ່ກຸ່ມບ້ານ;
- ອະທິບາຍ ກ່ຽວກັບການຈັດສັນໂຄງການຍ່ອຍນັ້ນ ຊຶ່ງ 66% ຕ້ອງຈັດສັນສຳລັບບ້ານທີ່ທຸກຍາກພາຍໃນກຸ່ມບ້ານ;
- ລາຍການທາງເລືອກກິດຈະກຳທີ່ສະໜັບສະໜູນ ແລະ ບໍ່ສະໜັບສະໜູນ ໂດຍໂຄງການ ທລຍ;
- ສິດ ແລະ ໜ້າທີ່ຮັບຜິດຊອບ ຂອງທີມງານຂັ້ນກຸ່ມບ້ານ (ວຽກງານການ ຈັດຊື້-ຈັດຈ້າງ ແລະ ການເງິນໂຄງ ການຍ່ອຍ ແມ່ນຊຸມຊົນເປັນຜູ້ຮັບ ຜິດຊອບໃນການຄຸ້ມຄອງ ແລະ ຕັດສິນໂດຍກົງເລີຍ) ;
- ກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາໃນຮູບແບບຂອງ ທລຍ;
- ອະທິບາຍໂດຍຫຍໍ້ ກ່ຽວກັບຂໍ້ແນະນຳ ຂອງການປ້ອງກັນຜົນກະທົບທາງສັງຄົມ ແລະ ສິ່ງແວດລ້ອມລວມທັງນະໂຍບາຍການຍົກຍ້າຍຈັດສັນ, ລະບຽບການທົດແທນຄືນ/ການປະກອບສ່ວນແບບສະໝັກໃຈ (ອີງໃສ່ດຳລັດເລກທີ່ 192) ການຫລຸດຜ່ອນຜົນກະທົບຕໍ່ທຳມະຊາດ, ຕໍ່ຮີດຄອງປະເພນີ, ວັດທະນາທຳ, ການຫລຸດ ຜ່ອນຜົນກະທົບຕໍ່ຜູ້ດ້ອຍໂອກາດ ແລະ ຊົນເຜົ່າ;
- ສິດ ແລະ ໜ້າທີ່ຮັບຜິດຊອບຂອງຊາວບ້ານ, ອຳນາດການປົກຄອງບ້ານ ແລະ ທີມງານ ທລຍ (ລວມທັງການຄຸ້ມຄອງນຳໃຊ້ ແລະ ບູລະນະສ້ອມແປງໂຄງການຍ່ອຍ);
- ແນະນຳ ກ່ຽວກັບພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ ຂອງຜູ້ປະສານງານ ທລຍ ຂັ້ນກຸ່ມບ້ານ;
- ແນະນຳກ່ຽວກັບຄະນະໄກ່ເກັ່ຍຂັ້ນບ້ານ ແລະ ໜ້າທີ່ຮັບຜິດຊອບຂອງເຂົາເຈົ້າ ໃນຂະບວນການແກ້ໄຂຂໍ້ຂັດແຍ່ງ.

*ເປີດກວ້າງການສົນທະນາ ຖາມ ແລະ ຕອບ*

ເປີດກວ້າງການສົນທະນາ ຫຼື ຊັກຖາມ ກ່ຽວກັບຫລັກການຕ່າງໆຂອງ ທລຍ: ສິດ, ໜ້າທີ່ຮັບຜິດຊອບ ແລະ ຄາດໝາຍທີ່ຈະໄດ້ຮັບຂອງຊຸມຊົນ (ສິດ, ບົດບາດຍິງຊາຍ ແລະ ຊົນເຜົ່າ, ການໃຫ້ຜົນປະໂຫຍດແກ່ຜູ້ທຸກຍາກ, ການປະກອບສ່ວນຂອງຊຸມຊົນ, ການລົງທຶນທີ່ກຸ້ມຄ່າ ແລະ ອື່ນໆ..... (ໃຊ້ເວລາປະມານ 2 ຊົ່ວໂມງ)

<u>ລະດັບຄາດໝາຍ ທີ່ຈະໄດ້ຮັບ:</u>

- ທຸກໆບ້ານໄດ້ຮັບຮູ້ ແລະ ມີຄວາມເຂົ້າໃຈ ກ່ຽວກັບຈຸດປະສົງຂອງ ທລຍ, ລັກການ, ລະບຽບການຕ່າງໆ ແລະ ວິທີການ ຈັດຕັ້ງປະຕິບັດໂຄງ ການ ທລຍ;
- ສິດ ແລະ ໜ້າທີ່ຮັບຜິດຊອບຂອງຜູ້ປະສານງານກຸ່ມບ້ານ ໄດ້ອະທິບາຍແຈ້ງຕໍ່ທຸກໆພາກສວ່ນທີ່ກ່ຽວຂ້ອງ;
- ຄະນະຮັບຜິດຊອບກົນໄກສະແດງຄຳເຫັນ ແລະ ແກ້ໄຂບັນຫາ ຫຼື ຄະນະໄກ່ເກັ່ຍຂໍ້ຂັດແຍ່ງຂັ້ນບ້ານໄດ້ຮັບການຄັດເລືອກ ແລະ ໄດ້ຮັບການຝຶກອົບຮົມ;
- ທຸກພາກສ່ວນທີ່ກ່ຽວຂ້ອງມີຄວາມເຂົ້າໃຈກ່ຽວກັບວຽກງານ ທລຍ ແລະ ການປະສານງານກໍໄດ້ຮັບການປັງປຸງດີຂຶ້ນ;
- ແຜນການຈັດກອງປະຊຸມ ກຳນົດທິດທາງການພັດທະນາບ້ານ ໃນອະນາຄົດໄດ້ຖືກກຳນົດ ແລະ ໄດ້ຮັບຮອງກັບຊາວບ້ານ.

<u>ກຳນົດເວລາດຳເນີນກອງປະຊຸມ:</u>

1- 3 ມື້

**ການກວດກາຄືນ**:

ຜູ້ປະສານງານກຸ່ມບ້ານ ຈະຕ້ອງຮັບປະກັນວ່າພໍ່ແມ່ປະຊາຊົນແຕ່ລະບ້ານ ພາຍໃນກຸ່ມບ້ານຂອງຕົນໄດ້ຮັບຮູ້ ກ່ຽວກັບວັນເວລາທີ່ຈະຈັດກອງປະຊຸມກຳນົດທິດທາງການພັດທະນາບ້ານ ແລະ ຮັບປະກັນວ່າ ຜູ້ເຂົ້າຮ່ວມກອງປະຊຸມ ຈະເຂົ້າຮ່ວມຕາມທີ່ກຳນົດໄວ້. ພ້ອມດຽວກັນຜູ້ປະສານງານ ກຸ່ມບ້ານຈະຕ້ອງໄດ້ສືບຕໍ່ປຶກສາຫາລືກັບຊາວ ບ້ານກ່ຽວກັບກຸ່ມຍ່ອຍຕ່າງໆ ທີ່ຈະຕ້ອງການແຍກປຶກສາຫາລືຕ່າງຫາກ ໃນເວລາດຳເນີນກອງປະຊຸມກຳນົດທິດທາງການພັດທະນາບ້ານນັ້ນ ໃນກໍລະນີຖ້າຫາກຕົກລົງບໍ່ທັນໄດ້ໃນກອງປະຊຸມແນະນຳໂຄງການຄັ້ງນີ້.

**ສິ່ງທີ່ຕ້ອງເອົາໃຈໃສ່ ສຳລັບການຈັດກອງປະຊຸມກຳນົດທິດທາງການພັດທະນາບ້ານ.**

ໃນໄລຍະດຳເນີນກອງປະຊຸມແນະນຳໂຄງການຂັ້ນບ້ານ ຜູ້ປະສານງານກຸ່ມບ້ານ ຕ້ອງປຶກສາຫາລືກັບບ້ານ ກ່ຽວກັບການຈັດກອງປະຊຸມກຳນົດທິດທາງການພັດທະນາບ້ານ ທີ່ຈະຈັດຂຶ້ນໃນຂັ້ນຕອນຕໍ່ໄປ ຄື:

- ຕ້ອງຊອກວິທີທາງ ແລະ ຕ້ອງຮັບປະກັນວ່າ ຢ່າງໜ້ອຍ (50% ຂອງຈຳນວນຜູ້ໃຫ່ຍພາຍໃນບ້ານ, 40% ຈຳນວນຜູ້ໃຫ່ຍ ຜູ້ຍິງ, 60% ຂອງຈຳນວນຜູ້ທຸກຍາກ) ຈະໃຫ້ໄດ້ເຂົ້າຮ່ວມກອງປະຊຸມ.

<u>ອະທິບາຍ ເປັນຫຍັງຈຶ່ງໃຫ້ຄົນຈຳນວນຫລາຍເຂົ້າຮ່ວມ?</u>

ຊາວບ້ານທຸກໆຄົນ ບໍ່ວ່າຜູ້ຮັ່ງມີ, ຜູ້ທຸກຍາກ, ຜູ້ດ້ອຍໂອກາດອື່ນໆພາຍໃນ ບ້ານແມ່ນອົງປະກອບນຶ່ງຂອງຊຸມຊົນ ແຕ່ລະຄົນແມ່ນມີແນວຄິດບໍ່ຄືກັນ ເຈົ້າຄິດແນວນຶ່ງ, ຜູ້ອື່ນຄິດແນວນຶ່ງ ແລະ ຕໍ່ໆໄປ. ສະນັ້ນ, ຖ້າຫາກທຸກໆ ຄົນໄດ້ເຂົ້າຮ່ວມກອງປະຊຸມ ຈະໄດ້ຄວາມເປັນເອກະພາບກັນ (ໄມ້ລຳດຽວລ້ອມຮົ້ວບໍ່ໄຂ່ວໄຜ່ບໍ່ພ້ອມແປງບ້ານບໍ່ເຮືອງ). ສຳລັບຜູ້ຍິງ ຊຶ່ງເປັນຜູ້ຮັບຜິດຊອບພາລະໜັກໜ່ວງຂອງຄອບຄົວເຊັ່ນ: ເປັນຜູ້ຊອກຫາລ້ຽວ ຫາຟືນ, ຕັກນ້ຳ-ຕຳເຂົ້າ, ຊອກຫາອາຫານ, ເບິ່ງແຍງລູກເຕົ້າ, ໜື້ງເຂົ້າ-ເປົ່າໄຟ ແລະ ອື່ນໆ.... ເວົ້າລວມແລ້ວແມ່ຍິງແມ່ນຜູ້ກຳຊາຕາກຳຂອງຄອບຄົວ, ເຂົາເຈົ້າເປັນຜູ້ຮູ້ວ່າອັນໃດແມ່ນຄວາມຈຳເປັນກ່ອນອັນໃດຄວນພັດທະນາຕາມຫລັງ. ສະນັ້ນ, ຖ້າຫາກເຂົາເຈົ້າໄດ້ມີໂອກາດເຂົ້າຮ່ວມກອງປະຊຸມກຳນົດທິດທາງພັດທະນາບ້ານ, ເຂົາເຈົ້າຈະສາມາດປະກອບຄຳຄິດຄຳເຫັນຂອງເຂົາເຈົ້າ ເຂົ້າໃນແຜນການ ຫຼື ທິດໃນການພັດທະນາບ້ານ ຫຼື ເວົ້າຢ່າງນຶ່ງວ່າ **<u>ຖ້າຫາກຜູ້ຍິງໄດ້ຮັບການພັດທະນາ ກໍເທົ່າກັບວ່າຫົວໜ່ວຍ, ຄອບຄົວກໍໄດ້ຮັບການພັດທະນາ, ຖ້າຫາກຫົວໜ່ວຍຄອບຄົວ ໄດ້ຮັບການພັດທະນາ ກໍໝາຍຄວາມວ່າ ບ້ານໄດ້ຮັບການພັດທະນາ, ຖ້າບ້ານໄດ້ຮັບການພັດທະນາ ກໍໝາຍຄວາມວ່າສັງຄົມກໍຄືປະເທດຊາດໄດ້ຮັບການພັດທະນາເຊັ່ນດຽວກັນ</u>**.

- ທຸກໆຄັ້ງຕ້ອງໄດ້ເຊີນຜູ້ຍິງ ແລະ ຊາວໜຸ່ມ ໃຫ້ເຂົ້າຮ່ວມກອງປະຊຸມຂອງບ້ານ ແລະຊຸກຍູ້ໃຫ້ເຂົາເຈົ້ານຳສະເໜີຕໍ່ກອງປະຊຸມ ກ່ຽວກັບສິ່ງທີ່ເຂົາຕ້ອງການຢາກພັດທະນາບ້ານຂອງເຂົາເຈົ້າ.
- ຈະຈັດຂຶ້ນຢູ່ໃສ? (ການກຳນົດສະຖານທີ່ຈັດກອງປະຊຸມນັ້ນ ຕ້ອງຮັບປະກັນວ່າໜ່ວຍອື່ນໆຂອງບ້ານ ຈະສາມາດເຂົ້າຮ່ວມນຳໄດ້ໝົດ);
- ຕ້ອງໄດ້ແຈ້ງໃຫ້ຜູ້ທີ່ຈະເຂົ້າຮ່ວມກອງປະຊຸມດັ່ງກ່າວນັ້ນຕັ້ງແຕ່ ຢູ່ກອງປະຊຸມແນະນຳໂຄງການຂັ້ນບ້ານ,
- ກຳນົດວັນ ແລະ ເວລາ ຂອງກອງປະຊຸມກດັ່ງກ່າວ,
- ແຈ້ງໃຫ້ທີ່ປະຊຸມຕື່ມວ່າ ວິທີການໂດຍລວມ ກ່ຽວກັບການດຳເນີນກອງປະຊຸມກຳນົດທິດທາງການພັດທະນາບ້ານ ໂດຍສະເພາະແຈ້ງໃຫ້ເຂົາເຈົ້າຊາບວ່າ ຜູ້ທີ່ຈະເຂົ້າຮ່ວມກອງປະຊຸມດັ່ງກ່າວນັ້ນຈະໄດ້ເຂົ້າຮ່ວມທັງກອງປະຊຸມລວມບ້ານ ແລະ ຈະໄດ້ເຂົ້າຮ່ວມການຄົ້ນຄວ້າປຶກສາຫາລືເປັນກຸ່ມ (ກຸ່ມຍິງ ແລະ ກຸ່ມຊາຍ);
- ການຈັດພາເຂົ້າສາມັກຄີ ໃນເວລາຈັດກອງປະຊຸມກຳນົດທິດທາງການພັດທະນາບ້ານນັ້ນຕ້ອງໄດ້ປຶກສາຫາລືຢູ່ກອງປະຊຸມແນະນຳໂຄງການ (ຄິດວ່າ ງົບປະມານສຳລັບການຈັດພາເຂົ້າສາມັກຄີນັ້ນ ຕ້ອງໄດ້ເອົາໃຫ້ບ້ານທີ່ກ່ຽວຂ້ອງແຕ່ດຽວນີ້ ເພື່ອເຂົາເຈົ້າຈະໄດ້ກະກຽມໄວ້ຖ້າ);
- ຜູ້ປະສານງານກຸ່ມບ້ານ ຕ້ອງຮູ້ວ່າໃນເວລາຈັດກອງປະຊຸມຢູ່ແຕ່ລະບ້ານນັ້ນ ບ້ານໃດຈະຕ້ອງການນຳໃຊ້ພາສາທ້ອງຖິ່ນ ຫຼື ບໍຕ້ອງການ? ຖ້າມີຄວາມຈຳເປັນຕ້ອງໄດ້ຊອກຫາຜູ້ທີ່ຈະແປພາສາໄວ້ກ່ອນລ່ວງໜ້າ;
- ຖາມວ່າແບ່ງອອກເປັນສອງກຸ່ມຄົ້ນຄວ້າໃນກອງປະຊຸມກຳນົດທິດທາງພັດທະນາບ້ານນັ້ນ ພຽງພໍ ຫຼື ບໍ? ຫຼືຕ້ອງການໃຫ້ມີການສົນທະນາ ຫລາຍກຸ່ມກວ່ານັ້ນອີກ (ປີນີ້ມີແຕ່ຖາມຄວາມຕ້ອງການ, ສ່ວນປີໜ້າ ເວລາກອງປະຊຸມທົບທວນແຜນການພັດທະນາ ຂອງບ້ານຈຶ່ງຈັດໃຫ້ມີການສົນທະນາກຸ່ມຍ່ອຍອີກ).

# ໑.  ກອງປະຊຸມກຳນົດທິດທາງພັດທະນາບ້ານ

## 1.  ການກຳນົດທິດທາງການພັດທະນາບ້ານ - ພາກທີ 1 ນຳສະເໜີໂດຍລວມ

ເປັນຫຍັງ ພວກເຮົາຈຶ່ງ ແນະນຳໃຫ້ມີກອງປະຊຸມກຳນົດທິດທາງການພັດທະນາບ້ານ ໃນແຕ່ລະບ້ານ?

ກອງປະຊຸມດັ່ງກ່າວນີ້ ເປັນບາດກ້າວທີ່ສຳຄັນທີ່ສຸດ ໃນຂະການວາງແຜນແບບມີສ່ວນຮ່ວມ ແຕ່ລຸ່ມຂຶ້ນເທິງພາຍໃຕ້ວຽກງານຂອງ ທລຍ 2. ຊຶ່ງຈະເປັນການໃຫ້ສິດຢ່າງແທ້ຈິງ ແກ່ປະຊາຊົນໝົດທຸກຄົນ - ໂດຍສະເພາະແມ່ຍິງ, ຊົນເຜົ່າ ແລະ ຜູ້ທຸກຍາກ, ເພື່ອໃຫ້ເຂົາເຈົ້າສາມາດສະແດງອອກເຖິງ ຄວາມມຸ້ງໝາດປາຖະໜາຂອງເຂົາເຈົ້າ ເພື່ອການມີອະນາຄົດທີ່ດີຂຶ້ນ.




**ແມ່ນຫຍັງຄືເປົ້າໝາຍຕົ້ນຕໍ ແລະ ຜົນທີ່ຈະໄດ້ຮັບ ຈາກກອງປະຊຸມກຳນົດທິດທາງການພັດທະນາບ້ານ?**

- ຜ່ານຂັ້ນຕອນການສ້າງແຜນວາດຊັບພະຍາກອນບ້ານ, ຊຸມຊົນຈະມີຄວາມເຂົ້າໃຈດີຂຶ້ນ ກ່ຽວກັບຮາກເຫງົ້າທີ່ເປັນສາຍເຫດຂອງຄວາມທຸກຢູ່ບ້ານຂອງເຂົາເຈົ້າ.
- ຊຸມຊົນຈະຈຳແນກໄດ້ອຸປະສັກຕົ້ນຕໍ ທີ່ເຂົາເຈົ້າປະເຊີນຢູ່ຕໍ່ການດຳລົງຊີວິດ ກໍ່ຄືການເປັນຢູ່ຂອງເຂົາເຈົ້າ.
- ເຂົາເຈົ້າຍັງຈະຈຳແນກ ແລະ ກຳນົດກິດຈະກຳທີ່ເປັນບູລິມະສິດທີ່ເຂົາເຈົ້າຄາດຫວັງວ່າ ຈະເປັນການປັບປຸງສະຖານະພາບຂອງເຂົາເຈົ້າໃນປະຈຸບັນ ແລະ ຜ່ານຜ່າອຸປະສັກເຫລົ່ານັ້ນ. (ເຂົາເຈົ້າຈະບໍ່ໄດ້ໃຫ້ຈັດລຽງພຽງແຕ່ຄວາມຕ້ອງການທາງດ້ານພື້ນຖານໂຄງລ່າງເທົ່ານັ້ນ).
- ຄວາມຄິດເຫັນຂອງກຸ່ມຜູ້ດ້ອຍໂອກາດ ຈະປະກອບເຂົ້າໃນລາຍການກິດຈະກຳບູລິມະສິດຄວາມຕ້ອງການຂອງບ້ານ (ສັງເກດວ່າຜູ້ຊາຍ, ຜູ້ຍິງ ແລະ ຊົນເຜົ່າຈະຖືກແຍກອອກເປັນກຸ່ມຕ່າງຫາກ ເພື່ອປຶກ

ສາຫາລືຄົ້ນຄວ້າ ແລະ ກໍານົດອຸປະສັກທີ່ມີຕໍ່ການພັດທະນາ ແລະ ກໍານົດກິດຈະກໍາທີ່ເປັນບູລິມະສິດຂອງກຸ່ມເຂົາເຈົ້າ)

- ຊຸມຊົນຈະມີຄວາມເຂົ້າໃຈຢ່າງແຈ່ມແຈ້ງ ກ່ຽວກັບວ່າ ອັນໃດທີ່ເຂົາເຈົ້າສາມາດເຮັດເອງໄດ້, ອັນໃດເກີນກວ່າຄວາມສາມາດຂອງເຂົາເຈົ້າ ຈຶ່ງແມ່ນການຮຽກຮ້ອງ ຫຼື ສະເໜີຈາກພາກສ່ວນພາຍນອກໃຫ້ການ ສະ ໜັບສະໜູນຊ່ວຍເຫລືອ.
- ທີ່ປະຊຸມຈະໄດ້ຄັດເລືອກເອົາ 6 ຄົນ (ຊາຍ 3 ແລະ ຍິງ 3) ເປັນຕົວແທນບ້ານ ເພື່ອເຂົ້າຮ່ວມກອງປະຊຸມວາງແຜນພັດທະນາກຸ່ມບ້ານ.
- ສ້າງຄວາມພ້ອມໃຫ້ແກ່ຕົວແທນຂອງບ້ານທີ່ຖືກຄັດເລືອກ ເພື່ອໃຫ້ມີສ່ວນຮ່ວມ ເວລາເຂົ້າຮ່ວມກອງປະຊຸມວາງແຜນພັດທະນາກຸ່ມບ້ານ ແລະ ໃຫ້ຮູ້ຈັກກ່ຽວກັບວິທີຄິດໃນການວາງແຜນພັດທະນາກຸ່ມບ້ານ.

### ໃຜແດ່ ທີ່ຄວນເຂົ້າຮ່ວມກອງປະຊຸມກໍານົດທິດທາງການພັດທະນາບ້ານ?

ການປະຊຸມດັ່ງກ່າວນີ້ ເປັນແບບເປີດກວ້າງ ແລະ ຊາວບ້ານທັງໝົດ ຄວນມີໜ້າເຂົ້າຮ່ວມ. ແຕ່ໃນນີ້ຂໍ້ກໍານົດຂອງ ທລຍ 2 ໄດ້ລະບຸໄວ້ວ່າ: " ຢ່າງໜ້ອຍ 50% ຂອງຈໍານວນ ຜູ້ຊາຍທີ່ເປັນຜູ້ໃຫຍ່ (ອາຍຸຫລາຍກວ່າ 14 ປີ) ຢູ່ພາຍໃນບ້ານຕ້ອງໄດ້ເຂົ້າຮ່ວມ, ຢ່າງໜ້ອຍ 40% ຂອງຈໍານວນ ຜູ້ຍິງທີ່ເປັນຜູ້ໃຫຍ່ຈະຕ້ອງເຂົ້າຮ່ວມປະຊຸມ ແລະ ຢ່າງໜ້ອຍ 60% ຂອງຈໍານວນຄອບຄົວຜູ້ທຸກຍາກພາຍໃນບ້ານຕ້ອງໄດ້ເຂົ້າຮ່ວມກອງປະຊຸມດັ່ງກ່າວນີ້ເຊັ່ນດຽວກັນ, ຖ້າບໍ່ດັ່ງນັ້ນ ໃຫ້ເລື່ອນກອງປະຊຸມດັ່ງກ່າວນີ້ອອກໄປ".

### ກອງປະຊຸມ ຈະຈັດຂຶ້ນຢູ່ບ່ອນໃດ?

ອາດຈະຈັດຢູ່ໂຮງຮຽນ ຫລື ສະຖານທີ່ອື່ນໆກໍໄດ້ ຊຶ່ງສາມາດເຮັດໃຫ້ທຸກຄົນເດີນທາງເຂົ້າໄປຮ່ວມໄດ້ງ່າຍ ແລະ ເປັນບ່ອນເໝາະສົມທີ່ສຸດ (ສ່ວນວ່າ ຈະຖືກຈັດຂຶ້ນຢູ່ບ່ອນໃດແທ້ນັ້ນຕ້ອງໄດ້ປຶກສາຫາລື ໃນໄລຍະເວລາດໍາເນີນກອງປະຊຸມແນະນໍາໂຄງການ ທລຍ 2 ຂັ້ນບ້ານ.)

### ຈະໃຊ້ເວລາດົນປານໃດ?

- ກອງປະຊຸມນີ້ ໃຊ້ເວລາ 2 ມື້.
- ກອງປະຊຸມນີ້ ຈະຈັດຂຶ້ນຫລັງຈາກກອງປະຊຸມແນະນໍາໂຄງການຂັ້ນບ້ານ ສໍາເລັດລົງ 1 ອາທິດ ທັງນີ້ເພື່ອໃຫ້ພໍ່ແມ່ປະຊາຊົນ ມີເວລາຄິດທົບທວນ ວ່າອີງໃສ່ການແນະນໍາ ຢູ່ກອງປະຊຸມຂັ້ນບ້ານນັ້ນ ຢາກໃຫ້ບ້ານຂອງເຮົາເປັນຄືແນວໃດໃນອີກ 5 ປີຕໍ່ໜ້າ.

**ລາຍລະອຽດຕາຕະລາງດຳເນີນກອງ ປະຊຸມກຳນົດທິດທາງການພັດທະນາບ້ານ ມີຄືດັ່ງຕໍ່ໄປນີ້:**

| | ມື້ທີ 1 | ມື້ທີ 2 |
|---|---|---|
| 0800-0900 | ໄຂກອງປະຊຸມ: ນຳ ສະເໜີຈຸດປະສົງຂອງກອງປະຊຸມ ແລະ ແນະນຳຜູ້ເຂົ້າຮ່ວມ | "ເອົາໃຈໃສ່ບ້ານອື່ນ ຢູ່ພາຍໃນກຸ່ມບ້ານຂອງ ພວກເຮົາ" |
| 0900-1200 | "ບ້ານຂອງພວກເຮົາໃນປັດຈຸບັນ" ການສ້າງແຜນວາດ ຊັບພະຍາກອນບ້ານ | ການຄັດເລືອກຕົວແທນຂອງບ້ານ ເພື່ອເຂົ້າຮ່ວມກອງປະຊຸມວາງແຜນ ພັດທະນາກຸ່ມບ້ານ |
| 1200-1330 | ພັກຜ່ອນກິນເຂົ້າທ່ຽງ | "ພັກຜ່ອນກິນເຂົ້າທ່ຽງ ຈັດພາເຂົ້າສາມັກຄີຮ່ວມກັນ" |
| 1330-1630 | "ບ້ານຂອງພວກເຮົາໃນອະນາຄົດ" ການວິເຄາະບັນຫາ ຄວາມທຸກຍາກຂອງບ້ານ ແລະ ການຈັດລຽງລຳດັບຄວາມຕ້ອງການ ເພື່ອພັດທະນາບ້ານ | ຝຶກອົບຮົມ ໃຫ້ແກ່ຕົວທົນບ້ານ ກ່ຽວກັບການກະກຽມເຂົ້າຮ່ວມກອງປະຊຸມວາງແຜນພັດທະນາກຸ່ມບ້ານ |

**ຍ້ອນເຫດຜົນອັນໃດ ພວກເຮົາຈິ່ງສະເໜີໃຫ້ " ຈັດພາເຂົ້າທ່ຽງສາມັກຄີ " ໃນໄລຍະກອງປະຊຸມກຳນົດທິດທາງການພັດທະນາບ້ານ?**

ພວກເຮົາມີຈຸດປະສົງເພື່ອສ້າງສະຕິ ດ້ານຄວາມສາມັກຄີຂອງໝົດທຸກຄົນພາຍໃນບ້ານ, ເພິ່ງຕົນເອງກຸ້ມຕົນເອງ ແລະ ຄວາມເປັນເອກະພາບຂຶ້ນຢູ່ຊຸມຊົນ. ພວກເຮົາເລັ່ງໃສ່ດ້ານເບື້ອງບວກຫລາຍກວ່າ ເບື້ອງລົບ ໂດຍສະເພາະເຮັດໃຫ້ຊຸມຊົນສາມາດຊ່ວຍເຫລືອຕົນເອງໄດ້. ນອກຈາກນີ້ຍັງຈະເປັນການສ້າງແຮງຈູງໃຈ ເພື່ອໃຫ້ຜູ້ເຂົ້າ ຮ່ວມໄດ້ສືບຕໍ່ເຂົ້າຮ່ວມກອງປະຊຸມໃນມື້ທີສອງ. (ຄວນມອບເງິນຄ່າຄາບອາຫານ ດັ່ງກ່າວໃຫ້ແກ່ນາຍບ້ານ.)

**ສິ່ງໃດແດ່ ທີ່ພະນັກງານ ທລຍ ແລະ ຜູ້ປະສານງານກຸ່ມບ້ານຈະຕ້ອງໄດ້ກະກຽມກ່ອນຈັດກອງປະຊຸມດັ່ງກ່າວນີ້?**

- ໝັ້ນໃຈວ່າ ທ່ານມີອຸປະກອນທັງໝົດ ທີ່ຈຳເປັນສຳລັບກອງປະຊຸມ (ລາຍລະອຽດ ເບິ່ງຄືນພາກ ທີ 6, 7, 8 ແລະ 9 )
- ໝັ້ນໃຈວ່າ ເວລາ ແລະ ສະຖານທີ່ ຂອງກອງປະຊຸມໄດ້ກຳນົດຢ່າງລະອຽດ ຢູ່ກອງປະຊຸມແນະນຳໂຄງການ (ໃຫ້ຈື່ວ່າ "ຢ່າງໜ້ອຍ 50% ຂອງຈຳນວນ ຜູ້ຊາຍທີ່ເປັນຜູ້ໃຫ່ຍ (ອາຍຸຫລາຍກວ່າ 14 ປີ) ຢູ່ພາຍໃນບ້ານ ຕ້ອງໄດ້ເຂົ້າຮ່ວມ, ຢ່າງໜ້ອຍ 40% ຂອງຈຳນວນຜູ້ຍິງ ທີ່ເປັນຜູ້ໃຫ່ຍຈະຕ້ອງເຂົ້າຮ່ວມປະຊຸມ ແລະ ຢ່າງໜ້ອຍ 60% ຂອງຈຳນວນຄອບຄົວຜູ້ທຸກຍາກພາຍໃນບ້ານຕ້ອງໄດ້ເຂົ້າຮ່ວມກອງປະຊຸມດັ່ງກ່າວ ນີ້ເຊັ່ນ ດຽວກັນ, ຖ້າບໍ່ດັ່ງນັ້ນ ໃຫ້ເລື່ອນກອງປະຊຸມດັ່ງກ່າວນີ້ອອກໄປ".
- ໝັ້ນໃຈວ່າ ທ່ານຈະຕ້ອງມີອີກຜູ້ໜຶ່ງ ເພື່ອຈະເປັນຜູ້ຊ່ວຍໃນການສົນທະນາໃນເວລາແບ່ງກຸ່ມ ແລະ ຊ່ວຍໃນການແຕ້ມແຜນວາດຂອງບ້ານພ້ອມທັງຕື່ມຂໍ້ມູນໃສ່ ແບບຟອມກຳນົດທິດທາງການພັດທະນາບ້ານ (ແບບຟອມສັງລວມ ການກຳນົດທິດທາງພັດທະນາບ້ານ).

**ບົດບາດ ແລະ ໜ້າທີ່ຕົ້ນຕໍຂອງຕົວແທນບ້ານ ທີ່ຖືກຄັດເລືອກຢູ່ໃນກອງປະຊຸມກຳນົດທິດທາງການພັດທະນາບ້ານ ມີຄືຫຍັງແດ່?**

**ທ່ານຈະຕ້ອງເປັນຜູ້ຮັບຜິດຊອບ ຝຶກອົບຮົມໃຫ້ແກ່ຕົວແທນບ້ານ ເພື່ອໃຫ້ເຂົາເຈົ້າຕ້ອງຮູ້ຈັກກ່ຽວກັບ:**

- ກອງປະຊຸມວາງແຜນພັດທະນາກຸ່ມບ້ານ ຈະຈັດຂຶ້ນ ເວລາໃດ ແລະ ຢູ່ໃສ;
- ສາມາດນຳສະເໜີແຜນວາດ ຊັບພະຍາກອນຂອງບ້ານ ແລະ ລຳດັບທີ່ເປັນບູລິມະສິດຂອງບ້ານຕໍ່ກອງປະຊຸມວາງແຜນພັດທະນາກຸ່ມບ້ານ;
- ສາມາດມີສ່ວນຮ່ວມຢູ່ໃນກອງປະຊຸມວາງແຜນພັດທະນາກຸ່ມບ້ານ ຊຶ່ງກອງປະຊຸມດັ່ງກ່າວຈະໄດ້ສ້າງຕັ້ງແຜນພັດທະນາກຸ່ມບ້ານ ແລະ ສ້າງແຜນການສະເພາະ ສຳລັບການຊ່ວຍເຫລືອຂອງ ທລຍ <u>ໃນໄລຍະ 4 ປີ</u>;
- ກາຍເປັນຜູ້ສະໜັບສະໜູນຢ່າງເອົາຈິງເອົາຈັງຂອງບ້ານ ຢູ່ໃນກອງປະຊຸມວາງແຜນພັດທະນາກຸ່ມບ້ານ.

**ສິ່ງໃດແດ່ ທີ່ອາດຈະເປັນບັນຫາ ໃນເວລາດຳເນີນກອງປະຊຸມກຳນົດທິດທາງການພັດທະນາບ້ານ?**

ບັນດາຫົວຂໍ້ດັ່ງຕໍ່ໄປນີ້ ຊຶ່ງຄາດວ່າອາດຈະເກີດຂຶ້ນ ໃນເວລາດຳເນີນກອງປະຊຸມກຳນົດທິດທາງການພັດທະນາບ້ານ (ຫລື ໃນເວລາຈັດກອງປະຊຸມອື່ນໆ ພາຍໃຕ້ວຽກງານຂອງ ທລຍ). ຈົ່ງຄົ້ນຄວ້າ ແລະ ຕຶກລົງວ່າທ່ານຈະຜ່ານຜ່າບັນຫາເຫລົ່ານີ້ ຄືແນວໃດ:

1) ປະຊາຊົນຈາກຄຸ້ມອື່ນໆຂອງບ້ານ ທີ່ຢູ່ຫ່າງໄກຫລາຍ ຈະບໍ່ມາເຂົ້າຮ່ວມກອງປະຊຸມ ຫຼື ຈະບໍ່ຢູ່ເຂົ້າຮ່ວມກອງປະຊຸມໃນມື້ທີສອງ.
2) ຈຳນວນຜູ້ຍິງຈະບໍ່ເຂົ້າຮ່ວມ ຕາມຈຳນວນທີ່ໄດ້ກຳນົດ (ຢ່າງໜ້ອຍ 40%).
3) ຜູ້ເຂົ້າຮ່ວມປະຊຸມບາງຄົນ ບໍ່ສາມາດເວົ້າພາສາລາວໄດ້ຢ່າງຄ່ອງແຄ້ວ.
4) ມີຄົນມາຫລາຍໂພດ ເມື່ອທຽບກັບຂະໜາດຂອງໂຮງຮຽນ ຫຼື ສະຖານທີ່ທີ່ທ່ານວາງແຜນໃຊ້ເປັນບ່ອນປະຊຸມ.
5) ຜູ້ຍິງຫຍຸ້ງນຳການແຕ່ງກິນຮັບໃຊ້ "ພາເຂົ້າທ່ຽງສາມັກຄີ" ສະນັ້ນເຂົາເຈົ້າຈຶ່ງບໍ່ສາມາດເຂົ້າຮ່ວມກອງປະຊຸມໃນມື້ທີສອງ.
6) ຈຳນວນຄົນ ຜູ້ທີ່ຈະສະໝັກເພື່ອຄັດເລືອກເລືອກເປັນຕົວແທນບ້ານບໍ່ພຽງພໍ.
7) ນາຍບ້ານພະຍາຍາມຈະຊັກຈູງລູກບ້ານ ໃຫ້ປ່ອນບັດເອົາຜູ້ກ່ຽວເປັນຜູ້ແທນຂັ້ນບ້ານ.
8) ທ່ານ ດຳເນີນການຊ້າກວ່າກຳນົດ ແລະ ບໍ່ມີເວລາດຳເນີນການຄັດເລືອກຕົວແທນຂັ້ນບ້ານ.
9) ໃນໄລຍະດຳເນີນການຈັດລຽງລຳດັບບູລິມະສິດຄວາມຕ້ອງການນັ້ນ, ຜູ້ຊາຍມີອິດທິພົນສູງ ແລະ ແມ່ຍິງບໍ່ມີປາກສຽງໃດໆ.

## 2. ການກຳນົດທິດທາງພັດທະນາບ້ານ - ພາກທີ 2: "ບ້ານຂອງພວກເຮົາໃນປັດຈຸບັນ"

<u>ຈຸດປະສົງ</u>: ເພື່ອເຮັດໃຫ້ຊຸມຊົນເຫັນໄດ້ຢ່າງປະຈັກຕາ ແລະ ເຂົ້າໃຈກ່ຽວກັບສະຖານະພາບຂອງບ້ານຂອງເຂົາເຈົ້າ, ຊັບພະກອນອັນໃດທີ່ເຂົາເຈົ້າມີຢູ່ໃນປະຈຸບັນ ແລະ ອັນໃດທີ່ເຂົາເຈົ້າຂາດເຂີນຊຶ່ງອາດຈະເປັນສາຍເຫດຂອງຄວາມທຸກຍາກ ແລະ ຄວາມບໍ່ສະເໝີພາບຢູ່ໃນບ້ານຂອງເຂົາເຈົ້າ.

ເຕັກນິກ: ພວກເຮົາຈະໃຊ້ວິທີ "ການສ້າງແຜນວາດຊັບພະຍາກອນບ້ານ" ຊຶ່ງເປັນທັງການມີສ່ວນ ຮ່ວມ ແລະ ເຫັນປະຈັກຕາເປັນຮູບປະທຳ. ເປັນການອອກແບບ ເພື່ອຊ່ວຍໃຫ້ສາມາດຈຳແນກຊັບພະຍາກອນ ທີ່ຊຸມຊົນມີຊົມໃຊ້ຢ່າງອຸດົມສົມບູນ ແລະ ຍັງຂາດເຂີນຢູ່.

ອຸປະກອນທີ່ຕ້ອງໃຊ້: ເຈັ້ຍແຜ່ນໃຫຍ່, ເຟີດຂຽນເຈັ້ຽສີຕ່າງໆ (ຫລືວັດຖຸທຳມະຊາດທີ່ສາມາດຫາໄດ້). ສັນຍາລັກທີ່ສະແດງເຖິງຊັບພະຍາກອນ ແລະ ການບໍລິການທີ່ສຳຄັນຕ່າງໆ.

ກຳນົດເວລາ: 3-4 ຊົ່ວໂມງ (20 ນາທີ ອະທິບາຍ, 30 ນາທີ ແຕ້ມແຜນວາດ, 40 ນາທີ ສົມທຽບແຜນວາດ, 1 ຊົ່ວໂມງແບ່ງກຸ່ມຄົ້ນຄວ້າ).

ຂໍ້ແນະນຳ ແຕ່ລະບາດກ້າວ

1) ຕັດສິນໃຈວ່າ ທ່ານຈະແຕ້ມແຜນວາດຊັບພະຍາກອນ ຢູ່ບ່ອນໃດ - ຖ້າແມ່ນຢູ່ພາຍໃນຫ້ອງ (ນຳໃຊ້ເຈັ້ຍແຜ່ນໃຫ່ຍ ແລະ ເຟີດຂຽນເຈັ້ຽສີ ຕ່າງໆ) ຫລື ຖ້າຈະແຕ້ມຢູ່ຂ້າງນອກ (ນຳໃຊ້ວັດຖຸຕາມທຳມະຊາດ-ກິ່ງໄມ້, ກ້ອນຫີນ, ໃບໄມ້ ແລະ ອື່ນໆ). ທ່ານຕ້ອງຕັດສິນໃຈວ່າທ່ານ ຈະແບ່ງຈຳນວນຜູ້ເຂົ້າຮ່ວມອອກເປັນກຸ່ມຍ່ອຍ (ຕົວຢ່າງ: ເພດ, ອາຍຸ ແລະ/ຫລື ຊົນເຜົ່າ). ທັງນີ້ກໍຂຶ້ນກັບວ່າຈະມີຜູ້ອຳນວຍຄວາມສະດວກຈຳນວນຈັກຄົນ ເພື່ອອຳນວຍຄວາມສະດວກໃຫ້ແກ່ກຸ່ມຍ່ອຍ. ຫມັ້ນໃຈວ່າຜູ້ອຳນວຍຄວາມສະດວກໃຫ້ແກ່ກຸ່ມຍ່ອຍ ແມ່ນໄດ້ຮັບການແນະນຳຢ່າງຄົບຖ້ວນກ່ຽວກັບວິທີດຳເນີນການແຕ້ມແຜນວາດຊັບພະຍາກອນ.
2) ອະທິບາຍຫຍໍ້ໃຫ້ສະມາຊິກທັງຫມົດຂອງກຸ່ມວ່າ ການສ້າງແຜນວາດຊັບພະຍາກອນຈະກ່ຽວຂ້ອງກັບຫຍັງ ແລະ ຈຸດປະສົງຂອງການນຳໃຊ້ແຜນວາດເພື່ອຫຍັງ. ເຫັນດີນຳກັນ ກ່ຽວກັບເຄື່ອງຫມາຍສັນຍາລັກ ຫລື ສີທີ່ຈະໃຊ້ໃນແຜນວາດ ເພື່ອອະທິບາຍແຜນວາດ. ຖາມຜູ້ເຂົ້າຮ່ວມວ່າ ເຂົາເຈົ້າມີຄຳຖາມ ຫລື ບໍ່. ຕໍ່ມາຈຶ່ງແບ່ງເປັນກຸ່ມຍ່ອຍ-ກຸ່ມຍ່ອຍທີ່ເຫມາະສົມທີ່ສຸດບໍ່ໃຫ້ກາຍ 25 ຄົນຕໍ່ກຸ່ມ. ສະຫນອງອຸປະກອນທີ່ຈຳເປັນໃຫ້ເຂົາເຈົ້າ (ຫລື ບອກໃຫ້ເຂົາເຈົ້າໃຫ້ເກັບຫາວັດຖຸຕາມທຳມະຊາດ, ຖ້າຫາກດຳເນີນການປະຊຸມຢູ່ຂ້າງນອກ).
3) ແນະນຳໃຫ້ແຕ່ລະກຸ່ມ ແຕ້ມແຜນວາດບ້ານຂອງເຂົາເຈົ້າ ໂດຍປະຕິບັດຕາມບາດກ້າວຕໍ່ໄປນີ້:
   ກ. ແຕ້ມຂອບເຂດບໍລິເວນຂອງບ້ານ (ລວມທັງເນື້ອທີ່ຫ່າງໄກສອກຫລີກທີ່ສຸດ ທີ່ເຂົາເຈົ້າໃຊ້ປູກຝັງ ຫລື ຊອກຫາອາຫານ)
   ຂ. ແຕ້ມແຫລ່ງນ້ຳຕົ້ນຕໍ (ຫ້ວຍນ້ຳ, ບໍ່ນ້ຳ, ຄອງຊົນລະປະທານ ແລະ ອື່ນໆ)
   ຄ. ແຕ້ມເສັ້ນທາງ, ຂົວຂ້າມນ້ຳ ແລະ ເສັ້ນທາງຍ່າງທັງໝົດ.
   ງ. ແຕ້ມສິ່ງປຸກສ້າງສາທາລະນະ (ໂຮງຮຽນ, ຕະຫລາດ, ສຸກສາລາ, ວັດ, ຫ້ອງການບ້ານ ຫລື ສຳນັກງານອື່ນໆຂອງລັດ, ຮ້ານຄ້າ ແລະ ອື່ນໆ).
   ຈ. ແຕ້ມເຮືອນຢູ່ອາໄສທັງຫມົດ.
   ສ. ແຕ້ມບໍລິເວນຂອບເຂດທີ່ນຳໃຊ້ປູກພືດ (ນາເຂົ້າ, ຜັກ ແລະ ອື່ນໆ).
   ຊ. ແຕ້ມບໍລິເວນ ບ່ອນທີ່ໄປກ່ຽວຫຍ້າມາລ້ຽງສັດ ຫລື ເຮັດເປັນຄັງສັດລ້ຽງ.
   ຍ. ແຕ້ມພື້ນທີ່ປ່າໄມ້.
   ດ. ແຕ້ມບໍລິເວນເຂດສະຫງວນ ຫລື ບໍລິເວນດິນ ທີ່ບໍ່ຢູ່ພາຍໃຕ້ການຄຸ້ມຄອງຂອງບ້ານ.

ຕ. ແຕ້ມບໍລິເວນທີ່ປະຫວ່າງບໍ່ໄດ້ນຳໃຊ້ ລວມທັງດິນທີ່ບໍ່ຖືກນຳໃຊ້ ຍ້ອນການເຊາະເຈື່ອນ, ນ້ຳຖ້ວມ ຫລື ໄພທຳມະຊາດອື່ນໆ.

ຖ. ບອກໃຫ້ສຳມະນາກອນ ແຕ້ມສິ່ງໃດກໍຕາມທີ່ເຂົາເຈົ້າເຫັນວ່າມີຄວາມສຳຄັນ.



4) ເມື່ອແຕ່ລະກຸ່ມແຕ້ມແຜນວາດສຳເລັດແລ້ວ, ສະເໜີໃຫ້ແຕ່ລະກຸ່ມ ມາລວມຢູ່ຈຸດດຽວກັນ,

5) ສະເໜີໃຫ້ແຕ່ລະກຸ່ມສັງເກດເບິ່ງແຜນວາດ ທີ່ແຕ້ມໂດຍກຸ່ມອື່ນ ຕົວຢ່າງ: ແມ່ຍິງ, ຊາວໜຸ່ມ, ກຸ່ມຊົນເຜົ່າ ແລະ ອື່ນໆ).ແລະ ສັງເກດເບິ່ງ ຈຸດທີ່ມີຄວາມແຕກຕ່າງກັບແຜນວາດຂອງກຸ່ມຂອງ ຕົນ ແລ້ວຈື່ເອົາໄວ້. ສະເໜີໃຫ້ທັງສອງກຸ່ມ ເລືອກເອົາແຜນວາດໃດແຜນວາດນຶ່ງ ທີ່ເຫັນວ່າມີຄວາມຄ້າຍຄືທີ່ສຸດ ທັງນີ້ຂຶ້ນກັບການຕົກລົງຂອງຜູ້ເຂົ້າຮ່ວມ, ຂັ້ນຕອນຕໍ່ ໄປສະເໜີໃຫ້ຜູ້ເຂົ້າຮ່ວມດັດແກ້ແຜນວາດດັ່ງກ່າວ ໂດຍອີງຕາມການສັງເກດຜ່ານມາເຮັດແນວໃດໃຫ້ມັນມີຄວາມຖືກຕ້ອງທີ່ສຸດ (ໃຫ້ສັງເກດເບິ່ງວ່າ ຈຳນວນຫລັງຄາເຮືອນຢູ່ໃນບ້ານເພີ່ມ ຂຶ້ນ ຫລື ຫລຸດລົງໃນໄລຍະ 5 ປີຜ່ານມາ. ເປັນຍ້ອນຫຍັງ?. ພາຍຫລັງສຳເລັດແລ້ວ ໃຫ້ແຕ້ມແຜນວາດຂອງບ້ານດັ່ງ ກ່າວໃສ່ເຈັ້ຍແຜ່ນໃຫຍ່ ເພື່ອຈະໄດ້ນຳໃຊ້ຢູ່ໃນກອງປະຊຸມປຶກສາຫາລືໃນຕອນບ່າຍ ແລະ ໃຫ້ແຕ້ມແຜນວາດດັ່ງກ່າວໃສ່ເຈັ້ຍເອ 4 (A4) ເພື່ອຈະໄດ້ຄັດຕິດ ໃສ່ປຶ້ມສັງລວມທິດທາງການພັດທະນາບ້ານ.

6) ຖາມເຖິງຊັບພະຍາກອນ ແລະ ການບໍລິການໃດແດ່ ທີ່ມີຊົມໃຊ້ຢູ່ໃນບ້ານ ເຊິ່ງມີຢ່າງອຸດົມສົມບູນ ແລະ ທີ່ຂາດເຂີນ. ຂຽນເປັນລາຍການໃນສິ່ງເຫລົ່ານັ້ນ ວ່າອັນໃດມີຢ່າງອຸດົມສົມບູນ ແລະ ອັນໃດຍັງມີຄວາມຂາດເຂີນ. ທ່ານສາມາດປະກອບຄຳຄິດເຫັນ ຫລື ເອົາຮູບພາບໃຫ້ເຂົາເຈົ້າເບິ່ງ ເພື່ອລົງມືຄົ້ນຄວ້າ ແລະ ສົນທະນາ ເຊັ່ນ:

ກ. ດິນ

ຂ. ສະບຽງອາຫານ

ຄ, ນ້ຳ (ຊົນລະທານ ຫລື ສຳລັບບໍລິໂພກ)

ງ. ເສັ້ນທາງ ຫລື ທາງຍ່າງ

ຈ. ການຊົມສິ່ງສາທາລະນະ

ສ. ກາລະໂອກາດການມີວຽກເຮັດງານທຳ

ຊ. ການບໍລິການຮັກສາສຸຂະພາບ

ຍ. ສະຖານທີ່ສຶກສາ

ດ. ການໃຫ້ບໍລິການ ຫລື ຜະລິດຜົນດ້ານກະສິກຳ (ແນວປູກ, ຝຸ່ນປຸ໋ຍ, ການສົ່ງເສີມ/ໃຫ້ຄຳປຶກສາດ້ານວິຊາການ)

ຕ. ການລ້ຽງສັດ

ຖ. ຟືນ ຫລື ເຊື້ອໄຟອື່ນໆ

ທ. ມາດຕະການເພື່ອປ້ອງກັນໄພທຳມະຊາດ (ນ້ຳຖ້ວມ, ດິນເຈາະເຈື່ອນ ແລະ ອື່ນໆ)

ບ. ອື່ນໆ

ນຳໃຊ້ເຄື່ອງໝາຍ ຫລື ສັນຍາລັກທີ່ເປັນມາດຕະຖານດຽວກັນ ເພື່ອເປັນຕົວແທນໃຫ້ແກ່ສິ່ງຕ່າງໆ, ຊຶ່ງສັນຍາດັ່ງກ່າວ ຄວນມີລັກສະນະງ່າຍດາຍ ແນໃສ່ເພື່ອໃຫ້ຊາວບ້ານມີຄວາມເຂົ້າໃຈງ່າຍ.

ສົນທະນາກັນ ກ່ຽວກັບບັນຫາຄວາມທຸກຍາກ ຢູ່ພາຍໃນບ້ານຂອງເຂົາເຈົ້າ. ມີສ່ວນໃດຢູ່ໃນບ້ານ (ຕົວຢ່າງ: ຫນ່ວຍ, ຄຸ້ມ) ເຊິ່ງເຂົ້າເຖິງຊັບພະຍາກອນ ໄດ້ຫນ້ອຍກວ່າພາກສ່ວນອື່ນໆ ຂອງບ້ານ ຫລື ບໍ່? ຖາມວ່າຄົວເຮືອນທັງຫມົດສາມາດເຂົ້າເຖິງດິນ ຫລື ບໍ? ຄົວເຮືອນທັງຫມົດມີສະບຽງອາຫານພຽງພໍຕະຫລອດປີ ຫລື ບໍ່?.

## 3. ການກຳນົດທິດທາງພັດທະນາບ້ານ - ພາກທີ 3: "ບ້ານຂອງພວກເຮົາໃນອະນາຄົດ"

<u>ຈຸດປະສົງ:</u> ເພື່ອຊ່ວຍໃຫ້ຊຸມຊົນ ເຂົ້າໃຈເຖິງບັນຫາ ແລະ ສາເຫດຂອງຄວາມທຸກຍາກ ຢູ່ພາຍໃນບ້ານຂອງເຂົາເຈົ້າ ພ້ອມທັງມັນໄດ້ສົ່ງຜົນກະທົບ ຕໍ່ຊີວິດການເປັນຢູ່ຂອງເຂົາເຈົ້າຄືແນວໃດ. ນອກຈາກນັ້ນ ເຂົາເຈົ້າຍັງຈະຂົ້າໃຈເຖິງ ວ່າຈະແກ້ໄຂບັນຫາເຫລົ່ານັ້ນຄືແນວໃດ ໂດຍການລະດົມຊັບພະຍາກອນ ທັງໝົດທີ່ມີຢູ່ພາຍໃນບ້ານຂອງເຂົາເຈົ້າ ແລະ ເປັນການແກ້ໄຂບັນຫາຮ່ວມກັນ ຂອງປະຊາຊົນພາຍໃນບ້ານ.

<u>ເຕັກນິກ:</u> ໃນພາກນີ້ ຈະນຳໃຊ້ສອງວິທີການ ເພື່ອຊ່ວຍໃຫ້ຊຸມຊົນເຂົ້າໃຈສະຖານະພາບຂອງບ້ານຂອງເຂົາເຈົ້າ ແລະ ເຂົ້າໃຈວ່າ ຢາກໃຫ້ບ້ານຂອງເຂົາເຈົ້າເປັນແນວໃດໃນອານາຄົດ:

- ການວິເຄາະຕົ້ນໄມ້ບັນຫາ (ອີງຕາມແຜນວາດຊັບພະຍາກອນຂອງບ້ານ ທີ່ສ້າງຂຶ້ນມາກ່ອນໜ້ານີ້ແລ້ວ)
- ການຈັດລຽງລຳດັບບຸລິມະສິດຄວາມຕ້ອງການ (ເພື່ອຊ່ວຍເຂົາເຈົ້າຕັດສິນໃຈວ່າ ກິດຈະກຳໃດທີ່ຈະສາມາດປັບປຸງ ຫຼື ແກ້ໄຂບັນຫາ ຫຼື ສະຖານະພາບໃນປະຈຸບັນຂອງເຂົາເຈົ້າ ແລະ ຫລຸດພົ້ນອອກຈາກຄວາມທຸກຍາກ).

ອຸປະກອນທີ່ຕ້ອງການ: ເຈ້ຍແຜ່ນໃຫຍ່ ແລະ ບິກເຟີດສີຕ່າງໆ ສໍາລັບແຕ່ລະກຸ່ມ, ສະກ໊ອດຕິດເຈັ້ຍ, ກະຕ່າ/ຖ້ວຍ ແລະ ແກ່ນສາລີ ຫລື ກ້ອນຫີນນ້ອຍ.

ກໍານົດເວລາ: ປະມານ 3 ຊົ່ວໂມງ

- 1 ຊົ່ວໂມງ ສໍາລັບການວິເຄາະຕົ້ນໄມ້ບັນຫາ.
- 1 ຊົ່ວໂມງ ສໍາລັບການສະເຫນີ ແລະ ກໍານົດບູລິມະສິດຂອງຕົ້ນໄມ້ບັນຫາ.
- 1 ຊົ່ວໂມງ ສໍາລັບການຈັດລຽງລໍາດັບຕາມຄວາມຕ້ອງການ.

ຄໍາແນະນໍາສໍາລັບແຕ່ລະບາດກ້າວ

1) ແບ່ງເປັນກຸ່ມຍ່ອຍ ຄືດັ່ງທີ່ໄດ້ປະຕິບັດ ກ່ອນໜ້ານັ້ນ.
2) ແຕ້ມຮູບຕົ້ນໄມ້ຂະຫນາດໃຫຍ່ຫນຶ່ງຕົ້ນ (ອາດແຕ້ມໃສ່ເທິງໜ້າດິນ ຫລື ໃສ່ແຜ່ນເຈ້ຍຂະຫນາດໃຫຍ່). ເຮັດໃຫ້ມີຂະຫນາດໃຫຍ່ສົມຄວນ ເພື່ອວ່າທຸກຄົນໃນຫ້ອງປະຊຸມສາມາດເບິ່ງເຫັນໄດ້.
3) ຜູ້ເຂົ້າຮ່ວມພ້ອມກັນສັງເກດເບິ່ງແຜນວາດຊັບພະຍາກອນທີ່ແຕ້ມແລ້ວນັ້ນ ໃຫ້ເຂົາເຈົ້າເບິ່ງຄືນ ກ່ຽວກັບຊັບພະຍາກອນ ແລະ ການເຂົ້າເຖິງ ບໍລິການດ້ານຕ່າງໆຢູ່ພາຍໃນບ້ານຂອງເຂົາເຈົ້າ, ຈາກນັ້ນໃຫ້ຜູ້ເຂົ້າຮ່ວມຂຽນເປັນລາຍການບັນຫາໃຫ່ຍໆທັງຫມົດ ທີ່ສ້າງຜົນກະທົບຕໍ່ບ້ານຂອງເຂົາເຈົ້າໃນປະຈຸບັນ.




4) ຕັ້ງຄໍາຖາມຕໍ່ຜູ້ເຂົ້າຮ່ວມ ກ່ຽວກັບສາເຫດຂອງຄວາມທຸກຍາກ ຢູ່ໃນບ້ານຂອງເຂົາເຈົ້າ ຫລື ແມ່ນຫຍັງເຮັດໃຫ້ພວກເຮົາທຸກຍາກ. ອະທິບາຍເຖິງຄວາມແຕກຕ່າງລະຫວ່າງສາເຫດ ແລະ ຜົນກະທົບລວມທັງການຍົກຕົວຢ່າງບາງຢ່າງ ທີ່ມີຄວາມສອດຄ່ອງ. ຂຽນຄໍາສັບ "ຄວາມທຸກຍາກ" ລົງໃສ່ລໍາຕົ້ນ ໄມ້. ຕໍ່ມາມອບໃຫ້ ຜູ້ອໍານວຍຄວາມສະດວກ ຫລື ສະມາຊິກຂອງກຸ່ມຂຽນບັນດາບັນຫາຕົ້ນຕໍ ຫລື ແຕ້ມສັນຍາລັກຂອງບັນຫາລົງໃສ່ຕົ້ນໄມ້. ຜົນກະທົບຈະຂຽນລົງໃສ່ ກິ່ງງ່າຕົ້ນໄມ້ ແລະ ສາເຫດຈະຂຽນໃສ່

ຮາກໄມ້. ບອກໃຫ້ເຂົາເຈົ້າ ກຳນົດສາເຫດຕົ້ນຕໍ ຂອງຄວາມທຸກຍາກ ຊຶ່ງ ເປັນອຸປະສັກຕໍ່ການພັດທະນາບ້ານຂອງເຂົາເຈົ້າ. (ສິ່ງເຫລົ່າ ນີ້ຕ້ອງບັນທຶກໄວ້ໃນແບບຟອມ ການກຳນົດທິດທາງການພັດທະນາບ້ານ - ພາກ ກ)

ບາງຕົວຢ່າງ ຈຳນວນໜຶ່ງ:

| ບັນຫາຄວາມທຸກຍາກຂອງບ້ານ | ສາເຫດ | ຜົນກະທົບ | ວິທີແກ້ໄຂ | ພາກສ່ວນຮັບຜິດຊອບ ຊາວບ້ານ/ ພາຍນອກ |
|---|---|---|---|---|
| ເດັກນ້ອຍບໍ່ໄດ້ຮຽນໜັງສື | • ໂຮງຮຽນ, ເປ່ເພ<br>• ຄູສອນມາຈາກບ້ານອື່ນ<br>• ຄອບຄົວທຸກຍາກ | • ບໍ່ມີວຽກເຮັດງານທຳ<br>• ຊຸມຊົນບໍ່ມີຄວາມເຂັ້ມແຂງ<br>• ບ້ານບໍ່ໄດ້ຮັບການພັດທະນາ | • ກໍ່ສ້າງໂຮງຮຽນໃໝ່<br>• ສ້າງຄູທ້ອງຖິ່ນ<br>• ສຶກສາອົບຮົມພໍ່ແມ່ນັກຮຽນ<br>• ສົ່ງເສີມກິດຈະກຳສ້າງລາຍຮັບ | ພາຍນອກບ້ານ/ພາຍນອກບ້ານ<br><br>ພາຍນອກ |
| | | | | |
| | | | | |
| | | | | |
| | | | | |

5) ກວດກາເບິ່ງກ່ຽວກັບສາຍເຫດຂອງຄວາມທຸກຍາກ ທີ່ເຂົາເຈົ້າກຳນົດອອກມາ ແລະ ໃຫ້ຜູ້ເຂົ້າຮ່ວມມີຄຳຄິດເຫັນ ວ່າອັນໃດທີ່ຊຸມຊົນສາມາດແກ້ໄຂບັນຫາໄດ້. ເຮັດແນວນີ້ໄປເລື້ອຍໆ ໃນທີ່ສຸດພວກເຮົາຈະໄດ້ເປົ້າໝາຍໃນຕໍ່ໜ້າຂອງຊຸມຊົນ. ເຂົາເຈົ້າສາມາດຂຽນເປັນລາຍການ ບັນດາເປົ້າຫມາຍໃຫ້ຫລາຍເທົ່າທີ່ຈະຫລາຍຕາມທີ່ເຂົາເຈົ້າຕ້ອງການ, ແຕ່ຕ້ອງໃຫ້ຫມັ້ນໃຈວ່າມັນຈະເປັນຈິງໄດ້.
6) ໃຫ້ກຸ່ມຄັດເລືອກເອົາຜູ້ຫນຶ່ງ ເພື່ອເປັນຜູ້ສະເຫນີ "ຕົ້ນໄມ້ບັນຫາ" ຕໍ່ກຸ່ມອື່ນ. ຜູ້ກ່ຽວຍັງຈະເປັນຜູ້ລົງສະຫມັກໃນການເລືອກຕັ້ງຕົວແທນຂອງບ້ານ ເພື່ອໄປເຂົ້າຮ່ວມການປະຊຸມວາງແຜນພັດທະນາກຸ່ມບ້ານຕື່ມອີກ.
7) ແຕ່ລະກຸ່ມ ມາລວມຢູ່ຈຸດດຽວກັນ ຈາກນັ້ນມອບໃຫ້ຕາງໜ້າແຕ່ລະກຸ່ມຍ່ອຍ ສະເຫນີຄວາມຄິດເຫັນ ແລະ ເປົ້າຫມາຍຂອງກຸ່ມເຂົາເຈົ້າ. ໃນໄລຍະທີ່ນຳສະເຫນີນັ້ນ, ຜູ້ອຳນວຍຄວາມສະດວກ ຄວນບັນທຶກໃສ່ເຈັ້ຍ ແຕ້ມແຜນໃຫ່ຍ ຖ້າຫາກມີການສະເຫນີເປົ້າໝາຍທີ່ຄ້າຍຄືກັນແລ້ວ. (ເປົ້າຫມາຍຂອງກຸ່ມແມ່ຍິງ ແລະ ກຸ່ມ ຜູ້ຊາຍຄວນຈະບັນທຶກລົງໃສ່ແບບຟອມການກຳນົດທິດທາງ ການພັດທະນາບ້ານ - ພາກ ຂ.)
8) ເມື່ອການສະເຫນີທັງຫມົດຈາກແຕ່ລະກຸ່ມເສັດສິ້ນແລ້ວ, ຜູ້ອຳນວຍຄວາມສະດວກນຳພາການສົນທະນາ ເຮັດແນວໃດເພື່ອສ້າງເປັນລາຍການເປົ້າຫມາຍທີ່ຄ້າຍຄືກັນທີ່ສຸດ, ຖາມຜູ້ເຂົ້າຮ່ວມ ໂດຍໃຫ້ເຂົາເຈົ້າຄິດວ່າ ການບໍລິການອັນໃດ ທີ່ຕ້ອງການໃຫ້ປັບປຸງ ເຊັ່ນດຽວກັນກັບພື້ນຖານໂຄງລ່າງອັນໃດທີ່ອາດຈະຕ້ອງການໃຫ້ປຸກສ້າງໃໝ່ ເພື່ອບັນລຸເປົ້າຫມາຍຂອງເຂົາເຈົ້າ. ໃນຂະນະທີ່ສົນທະນາໃນຫົວຂໍ້ດັ່ງກ່າວນີ້ ຜູ້ເຂົ້າຮ່ວມຄິດກ່ຽວກັບວ່າ ສິ່ງໃດແດ່ທີ່ຊຸມຊົນເອງສາມາດເຮັດໄດ້ 100% ຫຼື ອັນໃດທີ່

ສາມາດປະກອບສ່ວນ ເຊັ່ນທີ່ດິນ, ແຮງງານ ຫລື ວັດຖຸ.. ເພື່ອບັນລຸເປົ້າໝາຍຂອງບ້ານເຮົານີ້ ອັນໃດທີ່ຕ້ອງການຄວາມຊ່ວຍເຫລືອຈາກພາຍນອກ. ອັນໃດແດ່ ຊຶ່ງຄາດວ່າຕ້ອງການຄວາມຊ່ວຍເຫລືອຈາກພາຍນອກ ທີ່ຈະເປັນໄປໄດ້ ແລະ ເຮັດແນວໃດຈຶ່ງຈະເຂົ້າເຖິງການຊ່ວຍເຫລືອຈາກພາຍນອກດັ່ງກ່າວນັ້ນ? ໃນຕອນທ້າຍ ຂອງການສົນທະນາຕ້ອງສ້າງລາຍ ການເປົ້າໝາຍ ຢ່າງໜ້ອຍໃຫ້ໄດ້ 8 ຫາ 10 ລາຍການ ເພື່ອແກ້ໄຂສາເຫດ ຄວາມທຸກຍາກ ຢູ່ໃນບ້ານຂອງເຂົາເຈົ້າ.

9) ມາຮອດນີ້ ທ່ານມີຄວາມພ້ອມ ທີ່ຈະຊ່ວຍຊຸມຊົນ ກຳນົດລາຍການເປົ້າໝາຍບູລິມະສິດ ໂດຍການຄັດ ເລືອກ ວ່າກິດຈະກຳໃດ ທີ່ເຂົາເຈົ້າປາດຖະໜາ ເພື່ອບັນລຸເປົ້າໝາຍບູລິມະສິດຂອງເຂົາເຈົ້າ. ເຂົາເຈົ້າຄວນກຳນົດໃຫ້ໄດ້ຢ່າງໜ້ອຍ 5 ກິດຈະກຳບູລິມະສິດ ຈາກນັ້ນ ຈັດລຽງຕາມລຳດັບ (ຕ້ອງໄດ້ບັນທຶກ ລົງໃສ່ແບບຟອມການກຳນົດທິດທາງການພັດທະນາບ້ານ ພາກ - ຄ). ເພື່ອເປັນການຍົກສູງດ້ານບົດບາດ ຍິງ-ຊາຍ ໃນການກຳນົດບູລິມະສິດຂັ້ນບ້ານນີ້ ຢ່າງໜ້ອຍ 3 ໃນ 5 ບຸລິມະສິດກິດຈະກຳທຳອິດນັ້ນຕ້ອງຄັດ ເລືອກຈະຕ້ອງມາຈາກກຸ່ມຜູ້ຍິງ.

10) ວິທີ ທີ່ນຳໃຊ້ໃນການຄັດເລືອກນີ້ ແມ່ນ "ວິທີການຈັດລຽງລຳດັບຄວາມຕ້ອງການ" ຊຶ່ງມີສອງທາງໃນການເຮັດວິທີການດັ່ງກ່າວນີ້:

ກ) ການລົງຄະແນນສຽງໂດຍການຍົກມື; ຫລື

ຂ) ການລົງຄະແນນສຽງໂດຍ "ການປ່ອນກ້ອນຫີນ ຫຼື ແກ່ນໝາກສາລີ ໃສ່ກະຕ່າ ຫຼື ຖ້ວຍ".

*ວິທີການ ຂ) ຢາຍກະຕ່າ ຫລື ຖ້ວຍແຍກໃຫ້ຢູ່ຫ່າງກັນ (ມີຈັກກິດຈະກຳ ໃຫ້ມີເທົ່ານັ້ນກະຕ່າ ຫຼື ຖ້ວຍ), ຄຽງຄູ່ກັບມີປ້າຍບອກຢ່າງຈະແຈ້ງ ເພື່ອກຳນົດກິດຈະກຳ. ຜູ້ເຂົ້າຮ່ວມແຕ່ລະຄົນຕ້ອງມີກ້ອນຫີນ ຫຼື ແກ່ນສາລີຄົນລະ 6 ແກ່ນ ໃນກຳມື ແລະ ແນະນຳໃຫ້ຜູ້ເຂົ້າຮ່ວມປ່ອນ 3 ແກ່ນລົງ ໃສ່ໃນກະຕ່າກິດຈະກຳທີ່ເຂົາ ເຈົ້າຄິດວ່າສຳຄັນທີ່ສຸດ, ປ່ອນ 2 ເມັດຖິ່ວ ລົງໃສ່ກະຕ່າກິດຈະກຳ ອັນດັບສອງ ແລະ ປ່ອນ 1 ເມັດ ໃສ່ກິດ ຈະກຳທີ່ເປັນອັນດັບສາມ. ເມື່ອກ້ອນຫີນ ຫຼື ແກ່ນສາລີ ທັງໝົດຖືກຢາຍໃສ່ກະຕ່າ ຕາມຈຸດປະສົງແລ້ວ, ຜູ້ ອຳນວຍຄວາມສະດວກກໍຈະນັບຈຳນວນເມັດຖິ່ວທັງໝົດ ໃນແຕ່ລະກະຕ່າ. ກະຕ່າທີ່ມີເມັດຖິ່ວຫລາຍທີ່ສຸດຈະເປັນຕົວແທນໃຫ້ແກ່ບູລິມະສິດສູງສຸດ ແລະ ອື່ນໆຕາມລຳດັບ.*

11) ຖ້າຫາກເຂົາເຈົ້າສະເໜີ ກ່ຽວກັບກິດຈະກຳທາງດ້ານພື້ນຖານໂຄງລ່າງ, ເຂົາເຈົ້າຄວນສະເໜີທີ່ຕັ້ງຂອງໂຄງການຢູ່ພາຍໃນບ້ານພ້ອມໂລດ, ທັງນີ້ເພື່ອໃຫ້ເຫັນເຖິງຄວາມເອົາໃຈໃສ່ຕໍ່ຜູ້ທຸກຍາກ. ໝັ້ນໃຈວ່າລາຍການບູລິມະສິດທີ່ຕ້ອງການ ແລະ ຈຸດທີ່ຕັ້ງໂຄງການ ທີ່ສະເໜີນັ້ນໄດ້ຖືກບັນທຶກຢ່າງຖືກຕ້ອງລົງໃສ່ ແບບຟອມການກຳນົດທິດທາງພັດທະນາບ້ານ. ເຕືອນຜູ້ເຂົ້າຮ່ວມຕື່ມວ່າ ເຂົາເຈົ້າຈະໄດ້ເລືອກເອົາຜູ້ແທນບ້ານເປັນຜູ້ໄປສະເໜີທິດທາງການພັດທະນາບ້ານຂອງພວກເຂົາເຈົ້າ ຢູ່ກອງປະຊຸມວາງແຜນພັດທະນາກຸ່ມບ້ານ.

## 4. *ກອງປະຊຸມກໍານົດທິດທາງການພັດທະນາບ້ານ - ພາກທີ 4 "ເອົາໃຈໃສ່ບ້ານໃກ້ຄຽງຂອງພວກເຮົາ"*



<u>ຈຸດປະສົງ:</u> ເພື່ອຮັບປະກັນວ່າ ຜູ້ເຂົ້າຮ່ວມ ມີຄວາມເຂົ້າໃຈຂັ້ນພື້ນຖານ ກ່ຽວກັບບ້ານອື່ນໆ ພາຍໃນກຸ່ມບ້ານຂອງພວກເຮົາ ແລະ ມີຄວາມອາດສາມາດ ທີ່ຈະສົມທຽບ ລະດັບຄວາມທຸກຍາກ ລະຫວ່າງບ້ານທັງໝົດ ພາຍໃນກຸ່ມບ້ານຂອງຕົນ.

<u>ເຕັກນິກ:</u> ວິທີທີ່ກະທັດຮັດ ເພື່ອຕີລາຄາ ແລະ ປຽບທຽບລະດັບຄວາມທຸກຍາກບ້ານອື່ນໆ ພາຍໃນກຸ່ມບ້ານ.

<u>ການກະກຽມ</u>: ເຈັ້ຍແຜ່ນໃຫຍ່, ເຟີດຂຽນເຈັ້ຍ ສີຕ່າງໆ ແລະ ລາຍຊື່ຂອງບ້ານ ທັງໝົດພາຍໃນກຸ່ມບ້ານ

<u>ກໍານົດເວລາ:</u> 1 ຫາ 1 ຊົ່ວໂມງເຄິ່ງ

<u>ຄໍາແນະນໍາສໍາລັບແຕ່ລະບາດກ້າວ</u>

1) ນໍາໃຊ້ແຜນວາດ ທີ່ໄດ້ສ້າງຂຶ້ນແລ້ວນັ້ນ, ຖາມຊາວບ້ານ ເພື່ອໃຫ້ເຂົາເຈົ້າບອກຊື່ ບັນດາບ້ານ ຢູ່ພາຍໃນກຸ່ມບ້ານ. ຈາກນັ້ນຂຽນຊື່ ບ້ານດັ່ງກ່າວເຫລົ່ານີ້ ລົງໃສ່ແຜ່ນວາດ ທີ່ຄິດວ່າແມ່ນຈຸດນັ້ນ ຫຼື ໃກ້ຄຽງກັບທີ່ຕັ້ງຕົວຈິງ. (ບໍ່ເປັນຫຍັງ ຖ້າຫາກວ່າມັນບໍ່ຄືຕົວຈິງແທ້ໆ ເພາະມັນບໍ່ສໍາຄັນປານໃດ.)

2) ໃຫ້ຜູ້ເຂົ້າຮ່ວມ ຄິດກ່ຽວກັບບ້ານອື່ນໆທີ່ຢູ່ໃກ້ຄຽງວ່າ ເປັນບ້ານທຸກຍາກຫຼືບໍ?. ບ້ານໃດທຸກຍາກນ້ອຍກວ່າ ຫຼື ທຸກຍາກຫລາຍກວ່າບ້ານຂອງເຂົາເຈົ້າ ໂດຍໃຫ້ເຂົາເຈົ້າສົມທຽບໃສ່ມາດຖານຄວາມທຸກຍາກ ຕາມດໍາລັດຂອງນາຍົກລັດຖະມົນຕີ ເລກທີ 285/ນຍ) ດັ່ງນີ້:
   - ຕາມປົກກະຕິ ເຂົາເຈົ້າມີເຂົ້າກິນພຽງພໍຕະຫລອດປີ ຫລື ບໍ່?
   - ເຂົາເຈົ້າມີໂຮງຮຽນປະຖົມ ທີ່ໃຊ້ເວລາຍ່າງບໍ່ເກີນ 1 ຊົ່ວໂມງ ຫລື ບໍ່?
   - ມີສຸກສາລາ ຢູ່ໃນໄລຍະການຍ່າງບໍ່ເກີນ 2 ຊົ່ວໂມງ ຫລື ບໍ່?

- ທຸກຄົນ ສາມາດເຂົ້າເຖິງນໍ້າສະອາດ ຫລື ບໍ່?
- ມີເສັ້ນທາງເຂົ້າເຖິງໄດ້ ໃນທຸກລະດູການ ຫລື ບໍ່?
- ຄອບຄົວສ່ວນໃຫຍ່ພາຍໃນບ້ານ ມີໄຟຟ້າໃຊ້ ຫລື ບໍ່?

3) ຂີດຕາຕະລາງໜຶ່ງ ທີ່ມີສອງຖັນໃຫ່ຍ  ເພື່ອຂຽນລາຍຊື່ຂອງບ້ານທີ່ຢູ່ອ້ອມຮອບລົງໃນຖັນເບື້ອງຊ້າຍມື ແລະ ລະດັບຄວາມທຸກຍາກ ລົງໃນຖັນເບື້ອງຂວາມື (ດັ່ງທີ່ມີສະແດງຢູ່ຂ້າງລຸ່ມນີ້):

| ຊື່ບ້ານ . | ມາດຖານຄວາມທຸກຍາກ (ອີງຕາມດຳລັດ ເລກທີ່ 285/ນຍ) | | | | | | ຄະແນນ ລວມ | ລະດັບ ຄວາມທຸກ ຍາກ |
|---|---|---|---|---|---|---|---|---|
| | ມີເຂົ້າກຸ້ມກິນ (ມີ = 0 ບໍ່ມີ = 1) | ໂຮງຮຽນ (ມີ = 0 ບໍ່ມີ = 1) | ສຸກສາລາ (ມີ = 0 ບໍ່ມີ = 1) | ນໍ້າສະອາດ (ມີ = 0 ບໍ່ມີ = 1) | ຫົນທາງທຽວ ໄດ້ 2 ລະດູ (ມີ = 0 ບໍ່ມີ = 1) | ມີໄຟຟ້າໃຊ້ (ມີ = 0 ບໍ່ມີ = 1) | | |
| 1. | | | | | | | | |
| 2 | | | | | | | | |
| 3. | | | | | | | | |
| 4. | | | | | | | | |
| 5. | | | | | | | | |
| . | | | | | | | | |
| . | | | | | | | | |

4) ໝັ້ນໃຈວ່າຊື່ບ້ານທັງໝົດ  ພາຍໃນກຸ່ມບ້ານ  ຖືກຂຽນລົງໃນຖັນເບື້ອງຂວາ. (ຖ້າຫາກຊຸມຊົນບໍ່ຄຸ້ນເຄີຍກັບບ້ານທັງໝົດ, ຜູ້ອຳນວຍຄວາມສະດວກ ຄວນບອກໃຫ້ຊາວບ້ານ ແລະ ຂຽນຊື່ບ້ານນັ້ນລົງໃສ່.)



5) ໃຫ້ຜູ້ເຂົ້າຮ່ວມປະຊຸມ ທົບທວນຄືນເບິ່ງຄືນບັນດາບ້ານໃກ້ຄຽງ ໂດຍທົບທວນເປັນບ້ານ ເປັນບ້ານໄປ ໃນນີ້ໃຫ້ກວດເບິ່ງຕາຕະລາງຂ້າງເທິງ ເພື່ອຢັ້ງຢືນວ່າບ້ານເຫລົ່ານັ້ນ ມີພື້ນຖານໂຄງລ່າງ ຫຼື ມີເຂົ້າກຸ້ມກິນ ຫລືບໍ່ ເພາະວ່າມັນແມ່ນການກຳນົດໄດ້ເຖິງຄວາມທຸກຍາກ

6) ຜູ້ເຂົ້າຮ່ວມປະຊຸມ ສາມາດຈັດລຳດັບຄວາມທຸກຍາກ ເປັນ 3 ລະດັບຄື:
   - ຄະແນນ 5 – 6 = ທຸກຍາກຫລາຍ
   - ຄະແນນ 3 – 4 = ທຸກຍາກປານກາງ
   - ຄະແນນ 0 – 2 = ທຸກຍາກຕ່ຳ

7) ບັນທຶກລະດັບຄວາມທຸກຍາກຂອງແຕ່ລະບ້ານ ພາຍໃນກຸ່ມບ້ານ. ສະຫລຸບ:
   ໂດຍການຕັ້ງຄຳຖາມຕໍ່ຜູ້ເຂົາຮ່ວມກອງປະຊຸມ ວ່າກິດຈະກຳປະເພດໃດ ຈະເຮັດໃຫ້ບ້ານໃກ້ຄຽງໄດ້ຮັບຜົນປະໂຫຍດນຳ. ປະເພດກິດຈະກຳໃດ ຈະສ້າງຜົນປະໂຫຍດໃຫ້ແກ່ທັງໝົດກຸ່ມບ້ານ.

8) ມາຮອດນີ້ ຖືວ່າພວກເຮົາພ້ອມແລ້ວ ທີ່ຈະດຳເນີນຂັ້ນຕອນການເລືອກຕົວທນຂອງບ້ານ ເພື່ອໄປຮ່ວມກອງປະຊຸມວາງແຜນພັດທະນາກຸ່ມບ້ານ.

## 5. ກອງປະຊຸມກຳນົດທິດທາງການພັດທະນາບ້ານ - ພາກທີ 5 " ການຄັດເລືອກຕົວແທນບ້ານ"

<u>ຈຸດປະສົງ</u>- ເພື່ອເລືອກເອົາຕົວແທນບ້ານ ຈຳນວນ 6 ຄົນ (ຊາຍ 3 ແລະ ຍິງ 3) ຊຶ່ງຈະເປັນຜູ້ໄປຮ່ວມກອງປະຊຸມການວາງແຜນ ພັດທະ ນາກຸ່ມບ້ານ.

<u>ການກະກຽມ</u> - ເຈັ້ຍແຜ່ນໃຫ່ຍ/ບິກເຟີດຊຽນເຈັ້ຽ ຖ້ວຍ/ແກ່ນສາລີ/ກ້ອນຫີນ (ອີງຕາມແຕ່ວ່າຈະເລືອກເອົາອັນໃດ)

<u>ການກະກຽມ</u> - ຈົ່ງຄຳນຶງກ່ຽວກັບ ຈຳນວນພົລະເມືອງທີ່ເປັນຊົນເຜົ່າຢູ່ໃນບ້ານ. ຖ້າຫາກວ່າມີຫລາຍກວ່າ 10% ຂອງພົນລະເມືອງທັງໝົດ, ສະນັ້ນ ຢ່າງໜ້ອຍ ຕົວແທນບ້ານ 1 ຄົນ ຈະຕ້ອງມາຈາກກຸ່ມຊົນເຜົ່າ, ຖ້າຫາກຫລາຍກວ່າ 25% ຢ່າງໜ້ອຍ ຕົວແທນບ້ານ 2 ຄົນ ຈະຕ້ອງມາຈາກກຸ່ມຊົນເຜົ່າ.

<u>ກຳນົດເວລາ</u> - ປະມານ 3 ຊົ່ວໂມງ

<u>ຄຳແນະນຳ**ສຳລັບ**ແຕ່ລະບາດກ້າວ</u>

ໄລຍະປະຊຸມດັ່ງກ່າວນີ້ ສາມາດແບ່ງອອກ ເປັນສອງຂັ້ນຕອນ: 1) ສະເໜີລາຍຊື່ຜູ້ສະໝັກຄັດເລືອກ; ແລະ 2) ການຄັດເລືອກ

## ການຄັດເລືອກ:

1) ເລີ່ມຕົ້ນຂະບວນການຄັດເລືອກ ໂດຍການອະທິບາຍບົດບາດ ແລະ ໜ້າທີ່ຮັບຜິດຊອບ ຂອງ ຕົວແທນບ້ານ ທີ່ຈະຖືກມອບໝາຍໃຫ້ເຮັດ ເຊັ່ນ: ໄປເຂົ້າ ຮ່ວມກອງປະຊຸມວາງແຜນພັດທະນາກຸ່ມບ້ານເປັນເວລາ 2 ມື້ ຢູ່ຫ້ອງການຂອງກຸ່ມບ້ານ. ອະທິບາຍວ່າ ທາງກຸ່ມເພີ່ນຈະຮັບຜິດຊອບເລື່ອງອາຫານການກິນ ເວລາໄປເຂົ້າ ຮ່ວມກອງປະຊຸມວາງແຜນພັດທະນາກຸ່ມບ້ານ
2) ອະທິບາຍກົດລະບຽບຄື ທີ່ກໍານົດວ່າ ຢ່າງໜ້ອຍຕົວແທນບ້ານ ຈໍານວນເຄິ່ງໜຶ່ງ ຈະຕ້ອງເປັນແມ່ຍິງ (ເພື່ອໃຫ້ໝັ້ນໃຈວ່າ ສິດຂອງແມ່ຍິງຈະໄດ້ຮັບພິຈາລະນາ ໃນເວລາມີການຕັດສິນໃຈ). ຖ້າຫາກບ່ອນໃດ ມີຄວາມຮຽກຮ້ອງຕ້ອງການ ກໍໃຫ້ແຕ່ງຕັ້ງຊົນເຜົ່າ ເພື່ອເປັນຕົວແທນບ້ານ.
3) ຖາມຜູ້ເຂົ້າຮ່ວມປະຊຸມວ່າ ຕົວແທນບ້ານ ຄວນມີຄຸນສົມບັດແນວໃດແດ່ ຈຶ່ງຈະປະຕິບັດໜ້າທີ່ໄດ້ດີ?. ຂຽນລາຍການຄຸນສົມບັດທີ່ຕ້ອງການໃສ່ເຈັ້ຍແຜ່ນໃຫ່ ຫຼື ກະດານດໍາ. ຄຸນສົມບັດທີ່ຕ້ອງການບາງເທື່ອອາດຈະແມ່ນ: ເປັນຄົນຊື່ສັດ, ເຊື່ອຖືໄດ້, ເປັນມິດ, ມີອາລົມດີ, ເປັນຄົນທີ່ມີຄວາມເຄົາລົບນັບຖື, ກ້າເວົ້າກ້າວ່າຢູ່ຕໍ່ໜ້າມະຫາຊົນ, ຮູ້ຈັກລາຍລະອຽດຂອງບ້ານເຮົາເປັນຢ່າງດີ ແລະ ອື່ນໆ. ຕໍ່ໄປໃຫ້ຜູ້ເຂົ້າຮ່ວມປະຊຸມສະ ເໜີຊື່ບຸກຄົນ ທີ່ມີຄຸນສົມບັດເຫລົ່ານີ້ ຫລາຍເທົ່າທີ່ຈະຫລາຍໄດ້. ຜູ້ທີ່ຈະສະເໜີຊື່ນັ້ນບໍ່ຈໍາເປັນວ່າຈະແມ່ນຜູ້ໜ້າທີ່ຮັບຜິດຊອບວຽກຫລາຍຢູ່ໃນບ້ານ (ຕົວຢ່າງ: ນາຍບ້ານ ຫຼື ອື່ນໆ).
4) ການຄັດເລືອກແບບເປີດເຜີຍ ໂດຍອາດຈະປະຕິບັດດັ່ງນີ້:
   - ອາສາສະໝັກຂານຊື່ ດ້ວຍຕົນເອງ; ຫລື
   - ຜູ້ເຂົ້າຮ່ວມ ສະໜີຊື່ຜູ້ທີ່ເຫັນວ່າມີຄວາມເໝາະສົມ.
5) ເພື່ອເຮັດໃຫ້ເປັນການຄັດເລືອກເປັນໄປດ້ວຍດີ, ສະນັ້ນ ຕ້ອງໃຫ້ຜູ້ສະໝັກ ຫລາຍກວ່າ ຈໍານວນຕົວແທນບ້ານທີ່ຕ້ອງການ. ໝາຍຄວາມວ່າ ທີ່ປະຊຸມ ຕ້ອງໄດ້ສະເໜີຜູ້ຊາຍ 5 ຄົນ ແລະ ຍິງ 5 ຄົນ ເພື່ອຄັດເລືອກເປັນຕົວແທນຂອງບ້ານ.
6) ຜູ້ອໍານວຍຄວາມສະດວກ ອ່ານຊື່ຂອງຜູ້ສະເໜີເພື່ອຄັດເລືອກທັງໝົດ, ຕໍ່ມາ ຖາມຜູ້ຖືກແຕ່ງຕັ້ງແຕ່ລະຄົນວ່າເຂົາເຈົ້າ ຍິນດີທີ່ຈະເປັນຕົວແທນບ້ານ ຫລື ບໍ່ ຖ້າເລືອກຕັ້ງໄດ້.
7) ຜູ້ສະໝັກແຕ່ລະຄົນ ກ່າວປາໄສ ຫຼື ສະແດງຄໍາເຫັນແບບສັ້ນໆ ເພື່ອອະທິບາຍວ່າເປັນຫຍັງເຂົາເຈົ້າຈຶ່ງເປັນຜູ້ສະໝັກທີ່ດີ ເພື່ອທີ່ຈະຮັບ ໜ້າທີ່ ເປັນຕົວແທນບ້ານ ຖ້າເລືອກຕັ້ງໄດ້.

## ການເລືອກຕັ້ງ

8) ສົມມຸດວ່າ ມີຜູ້ສະໝັກ ໃນຈໍານວນທີ່ພຽງພໍ (ຫລາຍກວ່າ ແມ່ຍິງ 3 ແລະ ຊາຍ 3)*, ທ່ານສາມາດດໍາເນີນການເລືອກຕັ້ງ ໂດຍວິທີແບບເປີດ ເຜີຍ ຫລື ແບບວົງແຄບ. ຜູ້ເຂົ້າຮ່ວມກອງປະຊຸມ ລົງຄະແນນສຽງ ເລືອກເອົາ ທັງຜູ້ສະໝັກ ຍິງ ແລະ ຊາຍ.
9) ວິທີການເລືອກຕັ້ງແບບເປີດເຜີຍ ແມ່ນໂດຍການຍົກມື. ອ່ານຊື່ແຕ່ລະຄົນດ້ວຍສຽງດັງ ພ້ອມຈໍານວນຜູ້ເຂົ້າຮ່ວມປະຊຸມທີ່ເລືອກເອົາເຂົາເຈົ້າ ໂດຍການຍົກມືໃຫ້. ຜູ້ເຂົ້າຮ່ວມປະຊຸມແຕ່ລະຄົນ ສາມາດຍົກມືໄດ້ພຽງແຕ່ຄັ້ງດຽວ ໃຫ້ຜູ້ສະໝັກທີ່ເປັນຂວັນໃຈຂອງເຂົາເຈົ້າ. ນັບຈໍານວນ ຄະແນນໃຫ້ຜູ້ສະໝັກເພດຍິງກ່ອນ ແລະ

ຕໍ່ມາຈຶ່ງນັບເພດຊາຍ. ໃຫ້ຜູ້ບັນທຶກ ເປັນຜູ້ນັບຄະແນນສຽງ ແລະ ຂຽນຈຳນວນລົງໃສ່ເຈັ້ຍແຜ່ນໃຫຍ່ ຊຶ່ງຜູ້ໃດກໍສາມາດເບິ່ງເຫັນ. ເມື່ອການນັບຄະແນນສຽງທັງໝົດ ເສັດສິ້ນລົງແລ້ວ, ບັນດາແມ່ຍິງທັງ 3 ແລະ ຊາຍທັງ 3 ທີ່ມີຄະແນນ ສຽງຫລາຍ ກວ່າໝູ່ ຈະຖືກ ຮັບຮອງເອົາເປັນຕົວແທນບ້ານ.

*ໃຫ້ຈື່ຈຳນວນທີ່ຕ້ອງການ ສຳລັບຊົນເຜົ່າ ແລະ ໝັ້ນໃຈ ວ່າມີຜູ້ສະໝັກຈາກກຸ່ມຊົນເຜົ່າ ເພື່ອເປັນຕົວແທນບ້ານ ກໍລະນີຫລາຍ 10% ປະຊາກອນຂອງບ້ານ.




10) ການເລືອກຕັ້ງແບບວົງແຄບດຳເນີນການແບບປິດລັບ ເພື່ອວ່າຜູ້ສະໝັກຈະບໍ່ຮູ້ວ່າ ໃຜສະໜັບສະໜູນ ໃຜ. ວິທີນີ້ເຮັດດ້ວຍການປ່ອນບັດລົງຄະແນນ ຫລື ຢາຍກ້ອນຫີນ ຫລື ບັດລົງຄະແນນໃສ່ໃນຖ້ວຍ ຫລື ກະຕ່າຈັດວາງຢູ່ຂ້າງຫລັງຜູ້ສະໝັກແຕ່ລະຄົນ (ຈັດວາງແບບບໍ່ໃຫ້ຜູ້ສະໝັກສາມາດຮູ້ເຫັນວ່າ ໃຜລົງຄະແນນໃຫ້ຕົນ). ນັບຈຳນວນບັດ ຫລື ກ້ອນຫີນ ຕໍ່ໜ້າມະຫາຊົນ ແລະ ຂຽນຜົນການ ນັບຄະແນນສຽງ ລົງໃສ່ເຈັ້ຍ ຫລື ກະດານດຳ. ປະກາດໃຫ້ຮູ້ວ່າໃຜເປັນຜູ້ຊະນະ ເມື່ອຄະແນນສຽງທັງໝົດຖືກນັບແລ້ວ.
11) ເມື່ອການເລືອກຕັ້ງເສັດສິ້ນແລ້ວ, ຕົວແທນຂອງບ້ານຄວນຕົກລົງກັນວ່າ ໃຜຄວນເປັນຫົວໜ້າຄະນະ ຜູ້ແທນດັ່ງກ່າວ. ຈາກນັ້ນ ຕ້ອງໄດ້ເຮັດຂໍ້ຕົກລົງໃນການຄັດເລືອກຕົວແທນບ້ານ ໂດຍເຊັນຢັ້ງຢືນ ແລະ ປະທັບການາຍບ້ານ.
12) ພາຍຫລັງຈາກຄາບອາຫານທ່ຽງ ຈົ່ງຢ່າລືມເຮັດການແນະນຳຫຍໍ້ໃຫ້ແກ່ຜູ້ທີ່ຖືກເລືອກຕັ້ງເປັນຕົວທນ ບ້ານດັ່ງນີ້.
    - ວັນທີ, ເວລາ ແລະ ສະຖານທີ່ ຂອງ ກອງປະຊຸມວາງແຜນພັດທະນາກຸ່ມບ້ານ
    - ວິທີການອະທິບາຍແຜນວາດບ້ານ ທີ່ສ້າງຂຶ້ນໃນໄລຍະກອງປະຊຸມກຳນົດທິດທາງພັດທະນາບ້ານ
    - ວິທີນຳສະເໜີແຜນ ທິດທາງການພັດທະນາບ້ານຂອງເຂົາເຈົ້າ ໂດຍອີງຕາມແບບຟອມທີ່ມີແລ້ວ
    - ວິທີການເຈລະຈາ ຫຼື ປຶກສາຫາລື ກັບບ້ານອື່ນໆ ເພາະວ່າຢູ່ກອງປະຊຸມວາງແຜນພັດທະນາກຸ່ມບ້ານ ຈະສ້າງແຜນການພັດທະນາກຸ່ມບ້ານ ໃນໄລຍະ 5 ປີ ລວມທັງການສ້າງແຜນຂອງ ທລຍ ໃນໄລຍະ 4 ປີ ຕໍ່ໜ້າ.

    <u>ໝາຍເຫດ:</u> ແຜນທິດທາງການພັດທະນາບ້ານ ແລະ ແຜນພັດທະນາກຸ່ມບ້ານ ຈະໄດ້ມີການທົບທວນຄືນໃນແຕ່ລະປີ, ສະນັ້ນ ສຳລັບຕົວແທນບ້ານ ຖ້າມີຄວາມຈຳເປັນຕ້ອງຄັດເລືອກໃໝ່ກໍສາມາດດຳເນີນການໄດ້ ໃນໄລຍະເວລາດັ່ງກ່າວນັ້ນ.

# ຈ. ການວາງແຜນພັດທະນາກຸ່ມບ້ານ

## 1. ການວາງແຜນພັດທະນາກຸ່ມບ້ານ – ພາກທີ່ 1: ເຂົ້າໃຈບັນຫາ ແລະ ເປົ້າໝາຍໃນການພັດທະນາກຸ່ມບ້ານຂອງພວກເຮົາ

ການວາງແຜນການພັດທະນາກຸ່ມບ້ານ ແມ່ນສຳຄັນທີ່ສຸດໃນຂັ້ນຕອນການວາງແຜນຂອງ ທລຍ. ຊຶ່ງຈະເປັນການສ້າງແຜນພັດທະນາກຸ່ມບ້ານ ໂດຍລວມ/ແບບຮອບດ້ານ ແລະ ຍັງຈະໄດ້ກຳນົດບັນໂຄງການຍ່ອຍທີ່ ທລຍ ຈະຈັດຕັ້ງປະຕິບັດໃນໄລຍະ 4 ປີ ຂ້າງໜ້າ. ກອງປະຊຸມນີ້ຈະຈັດຂຶ້ນປະມານສອງອາທິດ ຫລັງຈາກກອງປະຊຸມກຳນົດທິດທາງການພັດທະນາບ້ານຢູ່ທຸກໆບ້ານ ພາຍໃນກຸ່ມບ້ານສຳເລັດລົງແລ້ວ.

**ຕາຕະລາງເວລາ ສຳລັບ ກອງປະຊຸມວາງແຜນພັດທະນາກຸ່ມບ້ານ ມີຄືດັ່ງຕໍ່ໄປນີ້:**

| ເວລາ | ມື້ທີ 1 | ເວລາ | ມື້ທີ 2 |
|---|---|---|---|
| 0800-0900 | - ເປົ້າໝາຍ, ຈຸດປະສົງ ແລະ ຜົນທີ່ຈະໄດ້ຮັບ ຈາກກອງປະຊຸມວາງແຜນພັດທະນາກຸ່ມບ້ານ<br>- ທົບທວນ ເນື້ອໃນຫລັກໆ ຂອງ ທລຍ | 0800-1100 | "ສ້າງແຜນພັດທະນາກຸ່ມບ້ານຂອງພວກເຮົາ" ວິທີການແຕ້ມວາດໃນຝັນ |
| 0900-1200 | "ເຂົ້າໃຈບັນຫາ ແລະ ເປົ້າໝາຍທີ່ຈະພັດທະນາກຸ່ມບ້ານ" ນຳໃຊ້ເຕັກນິກການວິເຄາະບັນຫາ, ທ່າແຮງ, ກາລະໂອກາດ, ຄວາມມຸ້ງມາດປາຖະໜາ | 1100-1200 | ສະເໜີຂໍ້ມູນ-ຂ່າວສານຫຍໍ້ກ່ຽວກັບ ທລຍ 2 - ການຈັດສັນງົບປະມານ ໃນໄລຍະ 4 ປີ ຂ້າງໜ້າ; 66% ຕ້ອງໄປຫາບ້ານທຸກຍາກທີ່ສຸດ; ສຳເລັດການຕື່ມແບບຟອມ ສັງລວມບັນທຶກ ແຜນການພັດທະນາກຸ່ມບ້ານ; ການປະກອບສ່ວນຂອງຊຸມຊົນ; ລາຍການກິດຈະກຳທີ່ ທລຍ ບໍ່ສະໜັບສະໜູນ. |
| 1200-1330 | ພັກຮັບປະທານອາຫານທ່ຽງ | 1200-1300 | ພັກຮັບປະທານອາຫານທ່ຽງ |
| 1330-1630 | ສ້າງແຜນພັດທະນາກຸ່ມບ້ານ ຂອງພວກເຮົາ" ການສ້າງແຜນ ວາດຂອງກຸ່ມບ້ານ ແລະ ການຈັດລະດັບຄວາມທຸກຍາກ ຂອງແຕ່ລະບ້ານພາຍໃນກຸ່ມບ້ານ | 1300-1600 | ແຜນການລົງທຶນຂອງ ທລຍ - ກຳນົດບູລິມະສິດໂຄງການຍ່ອຍ ສະເພາະຂອງ ທລຍ (ດ້ານພື້ນຖານໂຄງລ່າງ ແລະ ການຝຶກອົບຮົມທີ່ກ່ຽວຂ້ອງກັບດ້ານພື້ນ ຖານໂຄງລ່າງດັ່ງກ່າວນີ້) ລວມທັງສະເໜີ ຈຸດທີ່ຕັ້ງໂຄງການຍ່ອຍ |
| | | 1600-1700 | • ຄູ່ມືປ້ອງກັນທາງສັງຄົມ<br>• ສ້າງຕັ້ງຄະນະກຳມະການໄກ່ເກ່ຍ ແລະ ແກ້ໄຂບັນຫາຂັ້ນກຸ່ມບ້ານ |

| | | | |
|---|---|---|---|
| | | | • ຮັບຮອງເອົາຜູ້ປະສານງານກຸ່ມບ້ານ<br>• ກະກຽມກອງປະຊຸມໃນຕໍ່ໜ້າ (ກອງປະຊຸມປະສານການວາງແຜນພັດທະນາກຸ່ມບ້ານ ຢູ່ຂັ້ນເມືອງ ແລະ ກອງປະຊຸມລາຍງານກ່ຽວກັບ ແຜນພັດທະນາກຸ່ມບ້ານ ທີ່ຈະຈັດຂຶ້ນຢູ່ແຕ່ລະບ້ານ) |

ຈຸດປະສົງ - ເພື່ອຕົກລົງຮ່ວມກັນ ຢ່າງເປັນເອກະພາບ ກ່ຽວກັບບັນຫາຂໍ້ຫຍຸ້ງຍາກ ແລະ ເປົ້າໝາຍໃນການພັດທະນາກຸ່ມບ້ານຂອງພວກເຮົາ.

ເຕັກນິກ: - ການວິເຄາະແບບ ບັນຫາ, ທ່າແຮງ, ກາລະໂອກາດ ແລະ ຄວາມມຸ້ງໝາດປາຖະໜາ.

ບ່ອນປະຊຸມ: - ໂຮງຮຽນ, ບ່ອນອື່ນໆ ທີ່ເຫັນວ່າໃຫຍ່ສົມຄວນ ພໍທີ່ຈະຮອງຮັບຜູ້ປະຊຸມ ປະມານ 60 ຄົນໄດ້, ໂດຍປົກກະຕິ ສະເໜີຈັດຢູ່ ຫ້ອງການກຸ່ມບ້ານ ທີ່ເປັນຈຸດໃຈກາງຂອງແຕ່ລະບ້ານ.

ການກະກຽມ : - ໝັ້ນໃຈວ່າ ຜູ້ເຂົ້າປະຊຸມທັງໝົດ ຮູ້ລ່ວງໜ້າ ກ່ຽວກັບ ວັນ, ເວລາ ແລະ ສະຖານທີ່ ໆ ແນ່ນອນ ຂອງກອງປະຊຸມວາງແຜນພັດທະນາກຸ່ມບ້ານ:

- ໝັ້ນໃຈ ວ່າຜູ້ບັນທຶກກອງປະຊຸມແມ່ນໄດ້ກຽມພ້ອມແລ້ວ ເພື່ອຈະເກັບກໍາຈຸດສໍາຄັນໆຂອງການດໍາເນີນທະນາ.
- ຢ່າລືມອຸປະກອນເຊັ່ນ ເຈັ້ຍແຜ່ນໃຫຍ່/ເຟີດຂຽນເຈັ້ຍ/ສະກ໊ອດຕິດເຈັ້ຍ

ກໍານົດເວລາ: - ປະມານ 3 ຊົ່ວໂມງ

ຄໍາແນະນໍາ ແຕ່ລະບາດກ້າວ:

1) ການປະຊຸມ ໃນຂັ້ນຕອນນີ້, ບໍ່ຈໍາເປັນຈະແບ່ງອອກເປັນກຸ່ມຍ່ອຍ (ບໍ່ຈໍາເປັນແຍກກຸ່ມແມ່ຍິງ ແລະ ກຸ່ມຜູ້ຊາຍ).
2) ຢູ່ເທິງເຈັ້ຍແຜ່ນໃຫຍ່ ຫລື ກະດານດໍາ, ຈົ່ງແຕ້ມ ຮູບສີ່ແຈສາກ ດັ່ງຂ້າງລຸ່ມນີ້:

| | |
|---|---|
| ທ່າແຮງ | ກາລະໂອກາດ |
| ບັນຫາ | ຄວາມມຸ້ງໝາດປາຖະໜາ |

3) ອະທິບາຍ ວ່າແຕ່ລະຫ້ອງສີ່ແຈສາກ ມີຄວາມໝາຍຄືແນວໃດ:

- ທ່າແຮງ - ແມ່ນຫຍັງ ທີ່ເປັນລັກສະນະທາງບວກກາດຳລົງຊີວິດຢູ່ໃນກຸ່ມບ້ານຂອງເຂົາເຈົ້າ; ອັນໃນທີ່ພໍ່ແມ່ປະຊາຊົນຢູ່ໃນກຸ່ມບ້ານຂອງເຂົາເຈົ້າສາມາດເຮັດເອງໄດ້, ຊັບພະຍາກອນຊະນິດໃດທີ່ເຂົາເຈົ້າມີຢ່າງອຸດົມສົມບູນ....
- ບັນຫາ - ຂໍ້ຈຳກັດ ຫຼື ອຸປະສັກອັນໃດ ທີ່ຊຸມຊົນປະເຊີນຢູ່ໃນປະຈຸບັນ;
- ກາລະໂອກາດ - ສິ່ງໃດທີ່ພາຍນອກ ຈະມາຈັດຕັ້ງປະຕິບັດ ຢູ່ພາຍໃນກຸ່ມບ້ານຂອງຕົນເອງ (ຕົວຢ່າງ ລັດຈະມາສ້າງແຫລ່ງທ່ອງ ທ່ຽວຢູ່ກຸ່ມບ້ານພວກເຮົາ, ເມືອງເພີ່ຮຈະຕັ້ງຕະລາດຢູ່ກຸ່ມບ້ານຂອງພວກເຮົາ, ຈະມີໂຄງການສ້າງທາງປູຢາງ ຜ່ານໃຈກາງຂອງບ້ານ ດັ່ງນີ້ເປັນຕົ້ນ...)
- ຄວາມມຸ່ງໝາດປາຖະໜາ-ໝາຍເຖິງເປັນກິດຈະກຳທີ່ເຂົາເຈົ້າຄິດວ່າ ເມື່ອຖືກຈັດຕັ້ງປະຕິບັດແລ້ວ ຈະສາມາດແກ້ໄຂບັນຫາຫຍຸ້ງຍາກ ທີ່ເຂົາເຈົ້າປະເຊີນຢູ່ໃນປະຈຸບັນໄດ້.

4) ຕົວແທນແຕ່ລະບ້ານ ຈະຕ້ອງແຕ່ງຕັ້ງໜຶ່ງຄົນ ເພື່ອນຳສະເໜີຜົນຂອງກອງປະຊຸມກຳນົດທິດທາງພັດທະນາບ້ານ. ການສະເໜີຄວນເນັ້ນໃສ່ຂໍ້ມູນທີ່ໄດ້ເກັບກຳ ລົງໃນແບບຟອມກອງປະຊຸມກຳນົດທິດທາງພັດທະນາບ້ານ (ບັນຫາຄວາມຫຍຸ້ງຍາກ, ສາເຫດຂອງບັນຫາ, ຜົນກະທົບ, ວິທີແກ້ໄຂ, ໃຜຈະເປັນຜູ້ຮັບຜິດຊອບ). ການສະເໜີຂອງແຕ່ລະບ້ານນັ້ນ ຄວນໃຊ້ເວລາປະມານ 15 ຫາ 20 ນາທີ.

5) ພາຍຫລັງການສະເໜີຂອງແຕ່ລະບ້ານສຳເລັດລົງ, ຜູ້ອຳນວຍຄວາມສະດວກ ຄວນໃຊ້ເວລາບັນທຶກຜົນການວິເຄາະ (ທ່າແຮງ, ບັນຫາ, ກາລະໂອກາດ ແລະ ຄວາມມຸ້ງໝາດປາຖະໜາ) ທີ່ເຫັນວ່າເປັນບັນຫາລວມຂອງຫລາຍກບ້ານ. ສິ່ງສຳຄັນແມ່ນເພື່ອຊອກຫາວ່າ ອັນໃດແມ່ນຄວາມຕ້ອງການ ຫຼື ມີເປົ້າໝາຍ ຄືກັນລະຫວ່າງບ້ານອື່ນໆພາຍໃນກຸ່ມບ້ານ. ຖ້າຫາກວ່າເປັນບັນຫາອັນດຽວກັນ ຫລື ແມ່ນກິດຈະກຳອັນດຽວກັນກັບຫລາຍບ້ານ ໃຫ້ແຕ້ມເຄື່ອງໝາຍດາວໃສ່ (ຈຳນວນເຄື່ອງໝາຍດາວມີເທົ່າໃດກໍໝາຍເຖິງມີ ເທົ່ານັ້ນບ້ານມີສ່ວນກ່ຽວຂ້ອງ).

6) ກວດກາຄືນ ແລະ ເປັນເອກະພາບ ພ້ອມທັງທຳຄວາມເຂົ້າໃຈນຳກັນວ່າ ອັນໃດທີ່ເປັນບັນຫາ, ອັນໃດແມ່ນສິ່ງທ້າທາຍ ຫຼື ອັນໃດແມ່ນຄວາມ ຕ້ອງການຂອງຫລາຍບ້ານ. ອັນໃດທີ່ເຂົາເຈົ້າສາມາດເຮັດໄດ້ ເພື່ອແກ້ ໄຂສິ່ງທ້າທາຍເຫລົ່ານັ້ນ.

## 2. ການວາງແຜນພັດທະນາກຸ່ມບ້ານ ພາກທີ 2 – "ພັດທະນາກຸ່ມບ້ານຂອງພວກເຮົາ"

<u>ຈຸດປະສົງ:</u> - ເພື່ອໃຫ້ຕົວແທນບ້ານ ມີຄວາມເຂົ້າໃຈເປັນເອກະພາບນຳກັນ ກ່ຽວກັບຄວາມທຸກຍາກ ແລະ ຜົນກະທົບຂອງມັນ ຢູ່ໃນກຸ່ມບ້ານຂອງເຂົາເຈົ້າ. ຈາກນັ້ນສ້າງເປັນແຜນວາດ ເພື່ອສະແດງໃຫ້ເຫັນວ່າ ຄວາມທຸກຍາກຂອງກຸ່ມບ້ານຢູ່ໃສ ແລະ ກຳນົດວ່າບ້ານໃດມີຄວາມທຸກຍາກລະດັບໃດທັງນີ້ເພື່ອຮັບປະກັນວ່າ ການພັດທະນາຖືກຕ້ອງຕາມເປົ້າໝາຍ.

<u>ເຕັກນິກ:</u> - ສອງເຕັກນິກ ຖືກນຳມາໃຊ້:

- ການສ້າງແຜນວາດຄວາມທຸກຍາກຂອງກຸ່ມບ້ານ
- ການຈັດລະດັບຄວາມທຸກຍາກ

ການກະກຽມ: - ແຜນວາດບ້ານ (ຖືກສ້າງຂຶ້ນຢູ່ໃນກອງປະຊຸມກຳນົດທິດທາງພັດທະນາບ້ານ) ເຈ້ຍແຜ່ນໃຫຍ່, ເຟີດຊຽນເຈັ້ງສີຕ່າງໆ, ເຈ້ຍສີການຈັດລະດັບຄວາມທຸກຍາກ (ຖືກສ້າງຂຶ້ນໃນພາກ "ເອົາໃຈໃສ່ບ້ານ ໃກ້ຄຽງຂອງພວກເຮົາ" ຜົນຂອງການວິເຄາະທ່າແຮງ, ບັນຫາ, ກາລະໂອກາດ ແລະ ຄວາມມຸ່ງມາດປາດຖະໜາ

ກຳນົດເວລາ: - 3 ຫາ 4 ຊົ່ວໂມງ (ໃນຕອນບ່າຍຂອງມື້ທຳອິດ ຂອງກອງປະຊຸມວາງແຜນພັດທະນາກຸ່ມບ້ານ)

ຄຳແນະນຳ ແຕ່ລະບາດກ້າວ -

1) ນຳເອົາແຜນວາດບ້ານ ຂອງແຕ່ລະບ້ານ ມາຕິດຈອກໃສ່ກັນ. ຈັດໃຫ້ຢູ່ໃນຕຳແໜ່ງ ທີ່ເຂົ້າກັນພໍດີ (ບ້າໃກ້ຄຽງກັນຈະຢູ່ຕິດຈອດກັນ).
2) ມອບໃຫ້ຜູ້ເຂົ້າປະຊຸມໜຶ່ງ ຫລື ສອງຄົນແຕ້ມແຜນວາດຂະໜາດໃຫຍ່ຂອງທັງໝົດກຸ່ມບ້ານ (ໃຊ້ເຈ້ຍແຜ່ນໃຫຍ່ 4 ແຜ່ນຕິດຕໍ່ກັນ ທັງນີ້ເພື່ອໃຫ້ຜູ້ເຂົ້າຮ່ວມທັງໝົດໄດ້ເຫັນງ່າຍ ) ແຜນວາດຂອງກຸ່ມບ້ານບໍ່ຕ້ອງການ ໃຫ້ມີລາຍລະອຽດເທົ່າກັບແຜນທີ່ບ້ານແຕ່ຄວນຈະປະກອບດ້ວຍ:
   - ຊາຍແດນບ້ານ ແລະ ຊື່ຂອງແຕ່ລະບ້ານ
   - ເສັ້ນທາງທີ່ປູຢາງ ຫຼື ຫີນແຮ່
   - ຫ້ວຍນ້ຳ
   - ລະບົບຊົນລະປະທານ
   - ເນື້ອທີ່ ທຳການຜລິດກະສິກ (ອັນໃດແມ່ນເນື້ອທີ່ນາ ຫລື ອັນໃດແມ່ນເນື້ອທີ່ປູກພືດເສດຖະກິດ ໂດຍໃຫ້ໃຊ້ສີຕ່າງກັນ)
   - ສຸກສາລາ
   - ໂຮງຮຽນ



3) ນຳໃຊ້ເຄື່ອງໝາຍ ຫລື ສີ ທີ່ແຕກຕ່າງກັນ ສຳລັບແຕ່ລະລາຍການຢູ່ຂ້າງເທິງນັ້ນ. ມອບໃຫ້ຫົວໜ້າຕົວແທນຂອງແຕ່ລະບ້ານແຕ້ມເຄື່ອງໝາຍ ເຫລົ່ານີ້ລົງໃສ່ແຜນວາດຂອງກຸ່ມບ້ານ. ຂຽນ ຄຳອະທິບາຍບັນດາເຄື່ອງຫມາຍຢູ່ແຈດ້ານລຸ່ມຂອງແຜນວາດ.
4) ອີງໃສ່ບັນຫາຈາກຜົນຂອງການວິເຄາະ ທ່ານແຮງ, ບັນຫາ, ກາລະໂອກາດ ແລະ ຄວາມມຸ່ງມາດປາຖະໜາທີ່ເຮັດຜ່ານມາ. ສຳລັບແຕ່ລະບັນຫານັ້ນ, ໃຫ້ເອົາມາແຕ້ມໃສ່ແຜນວາດ ໂດຍໃຫ້ຖືກກັບບ້ານທີ່ກ່ຽວຂ້ອງຈາກນັ້ນໃຫ້ຂີດວົງມົນສີແດງອ້ອມໄວ້.
5) ພາຍຫລັງສຳເລັດການສົນທະນາແລ້ວ ແລະ ໝາຍບັນຫາທັງໝົດ ໃສ່ແຜນວາດກຸ່ມບ້ານແລ້ວ, ບອກໃຫ້ຜູ້ເຂົ້າປະຊຸມແລກປ່ຽນຄວາມເຫັນຊຶ່ງກັນ ແລະ ກັນ ໂດຍອີງຕາມການສັງເກດແຜນວາດຂອງເຂົາເຈົ້າ. ແມ່ນ ແທ້ບໍ່ທີ່ວ່າ ບ້ານທີ່ມີບັນຫາຫລາຍທີ່ສຸດ ແມ່ນບ້ານທຸກຍາກທີ່ສຸດໃນ ກຸ່ມບ້ານ?
6) ຜູ້ເຂົ້າຮ່ວມປະຊຸມ ເບິ່ງຄືນກ່ຽວກັບການຈັດລະດັບຄວາມທຸກຍາກ ທີ່ເຂົາເຈົ້າໄດ້ຈັດມາແລ້ວ ໃນເວລາດຳເນີນກອງປະຊຸມກຳນົດທິດທາງພັດທະນາບ້ານພາກ: “ເອົາໃຈໃສ່ບ້ານໃກ້ຄຽງ” ແມ່ນແທ້ບໍ່ວ່າ ບ້ານທີ່ເຂົາເຈົ້າຈັດຢູ່ໃນລະດັບວ່າ “ທຸກຍາກ”, ບ້ານເຫລົ່ານັ້ນ ມີບັນຫາຫລາຍກວ່າໝູ່ບໍ່? ທັງໝົດເຫລົ່ານີ້ຈຶ່ງຢັ້ງຢືນວ່າບ້ານເຫລົ່ານີ້ເປັນບ້ານທຸກຍາກທີ່ສຸດໃນກຸ່ມບ້ານ?
7) ຜູ້ເຂົ້າປະຊຸມຈັດລະດັບລະດັບຄວາມທຸກຍາກ. ໂດຍ ນຳໃຊ້ວິທີທີ່ງ່າຍດາຍ ຫຼື ນຳໃຊ້ຕາຕະລາງດຽວກັນກັບ ທີ່ໄດ້ນຳໃຊ້ຢູ່ກອງປະຊຸມກຳນົດ ທິດທາງພັດທະນາບ້ານ:

| ຊື່ບ້ານ<br>. | ມາດຖານຄວາມທຸກຍາກ<br>(ອີງຕາມດຳລັດ ເລກທີ່ 285/ນຍ) | | | | | | ຄະແນນລວມ | ລະດັບຄວາມທຸກຍາກ |
|---|---|---|---|---|---|---|---|---|
| | ມີເຂົ້າກຸ້ມກິນ<br>(ມີ = 0<br>ບໍ່ມີ = 1) | ໂຮງຮຽນ<br>(ມີ = 0<br>ບໍ່ມີ = 1) | ສຸກສາລາ<br>(ມີ = 0<br>ບໍ່ມີ = 1) | ນ້ຳສະອາດ<br>(ມີ = 0<br>ບໍ່ມີ = 1) | ຫົນທາງຫຽວໄດ້ 2 ລະດູ<br>(ມີ = 0<br>ບໍ່ມີ = 1) | ມີໄຟຟ້າໃຊ້<br>(ມີ = 0<br>ບໍ່ມີ = 1) | | |
| 1. | | | | | | | | |
| 2 | | | | | | | | |
| 3. | | | | | | | | |
| 4. | | | | | | | | |
| 5. | | | | | | | | |
| . | | | | | | | | |
| . | | | | | | | | |
| . | | | | | | | | |

ໝາຍເຫດ: ຖ້າຫາກຄະແນນລວມ = 5-6 ຄະແນນ ເອີ້ນວ່າ "ທຸກຫລາຍ"
= 3-4 ຄະແນນ ເອີ້ນວ່າ "ປານກາງ",
= 0-2 ຄະແນນ ເອີ້ນວ່າ “ບໍ່ທຸກ”.

8) ໃຫ້ຜູ້ເຂົ້າຮ່ວມປະຊຸມສົມທຽບລະຫວ່າງ ການຈັດລຽງລຳດັບຄວາມທຸກຍາກດັ່ງກ່າວນີ້ ໃສ່ກັບແຜນວາດຄວາມທຸກຍາກຂອງກຸ່ມບ້ານທີ່ແຕ້ມຂຶ້ນມານັ້ນ ວ່າມີຄວາມຄ້າຍຄືກັນແລ້ວບໍ່? ບັນດາບ້ານທີ່ຖືກຈັດຢູ່ໃນລະດັບຄວາມທຸກຍາກຫລາຍນັ້ນ ສອດຄ່ອງກັບບັນດາບ້ານ ທີ່ມີບັນຫາຫລາຍທີ່ສຸດ ດັ່ງທີ່ໄດ້ລະບຸໄວ້ໃນແຜນວາດຂອງກຸ່ມນັ້ນ ຫຼື ບໍ? ຖ້າຫາກຄ້າຍຄືກັນແລ້ວ ກໍໝາຍຄວາມວ່າ ຂັ້ນຕອນດັ່ງກ່າວນີ້ ແມ່ນສຳເລັດລົງ. ຕົວແທນບ້ານສາມາດນຳໃຊ້ຜົນຂອງການຈັດລະດັບບ້ານທຸກຍາກດັ່ງກ່າວນີ້ ເພື່ອປຶກສາຫາລືຢູ່ໃນກອງປະຊຸມວາງແຜນພັດທະນາກຸ່ມບ້ານໃນຂັ້ນຕອນຕໍ່ໄປ.

## 3. ການວາງແຜນພັດທະນາກຸ່ມບ້ານ ພາກທີ 3 – "ສ້າງແຜນພັດທະນາກຸ່ມບ້ານຂອງພວກເຮົາ "

ຈຸດປະສົງ - ພາກນີ້ ຈະເປັນການສ້າງແຜນການພັດທະນາກຸ່ມໂດຍທົ່ວໄປ. ໂດຍຜູ້ເຂົ້າຮ່ວມປະຊຸມ ຈະຕັດສິນໃຈ ກ່ຽວກັບເປົ້າໝາຍໃນການພັດທະນາ, ນອກຈາກນີ້ເຂົາເຈົ້າຍັງຈະໄດ້ຈັດລຽງບຸລິມະສິດທີ່ຕ້ອງການພັດທະນາ ແລະ ແຜນການລົງທຶນຕ່າງໆທີ່ຈຳເປັນ ເພື່ອບັນລຸເປົ້າໝາຍຫລຸດຜ່ອນຄວາມທຸກຍາກຢູ່ໃນກຸ່ມບ້ານຂອງເຂົາເຈົ້າ.

ເຕັກນິກ - ສ້າງແຜນວາດໃນຝັນ ການຈັດລຽງລຳດັບບຸລິມະສິດຄວາມຕ້ອງຕາມຮູບແບບອີງໃສ່ລະດັບຄວາມທຸກຍາກ

ການກະກຽມ - ໝັ້ນໃຈວ່າຜູ້ເຂົ້າປະຊຸມ ມີແບບຟອມກຳນົດທິດທາງພັດທະນາບ້ານ (ໂດຍສະເພາະພາກ ຄ ທີ່ເຂົາເຈົ້າໄດ້ບັນທຶກລາຍການ "ບູລິມະສິດຄວາມຕ້ອງການພັດທະນາບ້ານ")

ກຳນົດເວລາ - 3 ຊົ່ວໂມງ (1 ຊົ່ວໂມງ ສຳລັບລະດົມຄຳຄິດເຫັນ ກ່ຽວກັບເປົ້າໝາຍຫລຸດຜ່ອນຄວາມທຸກຍາກ; 1 ຊົ່ວໂມງ ສ້າງແຜນການທີ່ຕ້ອງການລົງທຶນ, 1 ຊົ່ວໂມງ ສຳລັບກຳນົດບູລິມະສິດຄວາມຕ້ອງການລົງທຶນ)

ຄຳແນະນຳສຳລັບແຕ່ລະບາດກ້າວ -

1) ວິທີການສ້າງແຜນວາດໃນຝັນແມ່ນນຳມາໃຊ້ ເພື່ອຊຸກຍູ້ຊາວບ້ານ (ຜູ້ໄດ້ຮັບປະໂຫຍດໃນອະນາຄົດ) ໃຫ້ຄິດໄກອອກໄປສູ່ອະນາຄົດ ແລະ ເຊື່ອມໂຍງສະຖະພາບຂອງເຂົາເຈົ້າໃນປັດຈຸບັນເຂົ້າກັບທິດທາງການພັດທະນາບ້ານໃນອະນາຄົດຂອງເຂົາເຈົ້າ.
2) ແບ່ງຜູ້ເຂົ້າຮ່ວມອອກຢ່າງໜ້ອຍເປັນສອງກຸ່ມ: ຊາຍ ແລະ ຍິງ. (ຖ້າຫາກທ່ານມີຜູ້ອຳນວຍຄວາມສະດວກຫລາຍຄົນ. ທ່ານສາມາດຈັດແບ່ງເປັນກຸ່ມຍ່ອຍ, ລວມທັງກຸ່ມຊາວໜຸ່ມ ແລະ ອີກກຸ່ມສຳລັບຊົນເຜົ່າທັງນີ້ເພື່ອໃຫ້ມີການສົນທະນາໄດ້ດີຂຶ້ນ.)
3) ໃຫ້ພິຈາລະນາເບິ່ງແຜນວາດຂອງກຸ່ມບ້ານ, ບອກໃຫ້ແຕ່ລະກຸ່ມນຶກວາດພາບວ່າ ເຂົາເຈົ້າຢາກໃຫ້ກຸ່ມບ້ານຂອງເຂົາເຈົ້າເປັນຄື ແນວໃດໃນອີກຫ້າປີຕໍ່ໜ້າ. ໃນແຕ່ລະກຸ່ມໃຫ້ແຕ່ງຕັ້ງຜູ້ນຶ່ງເປັນຜູ້ບັນທຶກຜົນການປະກອບຄຳຄິດເຫັນຂອງສະມາຊິກກຸ່ມ. ອັນໃດທີ່ເຂົາເຈົ້າຫວັງຢາກໃຫ້ມີການປ່ຽນແປງ? ພວກເຂົາເຈົ້າຄວນຈະສົນທະນາໃນປະເດັນ "ຄວາມມຸ້ງໝາດປາຖະໜາ" ທີ່ນອນໃນຕາຕະລາງວິເຄາະທ່າແຮງ, ບັນຫາ, ກາລະໂອກາດ,.... ເຂົາເຈົ້າຍັງສາມາດໃຊ້ບູລິມະສິດຄວາມຕ້ອງການຂອງບ້ານມາ

ອ້າງອີງນຳອີກ. ແຕ່ລະ ກຸ່ມຄວນປະກອບຄຳຄິດເຫັນຢ່າງເປີດເຜີຍຕໍ່ເປົ້າໝາຍພັດທະນາ ທີ່ຈະຊ່ວຍໃນການຫລຸດຜ່ອນຄວາມທຸກຍາກ. ຜູ້ເຂົ້າຮ່ວມປະຊຸມຄວນສຸມໃສ່ການແກ້ໄຂຄວາມທຸກຍາກໂດຍລວມໃນກຸ່ມບ້ານຂອງເຂົາເຈົ້າ.

4) ຕໍ່ມາແຕ່ລະກຸ່ມ ດຳເນີນການສົນທະນາໃນສິ່ງທີ່ຕ້ອງການ ເພື່ອເຮັດໃຫ້ບັນລຸເປົ້າໝາຍການພັດທະນາເຫລົ່ານີ້. ສິ່ງໃດເປັນກິດຈະກຳສະເພາະ ເພື່ອບັນລຸເປົ້າໝາຍ? ສິ່ງເຫລົ່ານີ້ ອາດປະກອບດ້ວຍການກໍ່ສ້າງພື້ນຖານໂຄງລ່າງ, ກິດຈະກຳປັບປຸງຊີວິດການເປັນຢູ່, ກິດຈະກຳເພື່ອດຳເນີນທຸລະກິດ ແລະ ການຝຶກອົບຮົມດ້ານທັກສະຕ່າງໆ...
5) ໃນແຕ່ລະກຸ່ມ ຢ່າງໜ້ອຍຕ້ອງຄັດເລືອກເອົາ 5 ບູລິມະສິດຄວາມຕ້ອງການລົງທຶນແລ້ວ (ຈາກນັ້ນບັນທຶກລົງໃສ່ແບບຟອມ ສັງລວມແຜນບ້ານພັດທະນາກຸ່ມບ້ານ), ຈາກນັ້ນແຕ່ລະກຸ່ມກັບມາເຕົ້າໂຮມກັນເປັນກຸ່ມໃຫຍ່ ໂດຍອ້ອມຢູ່ແຜນອາດກຸ່ມບ້ານ ທີ່ເຂົາເຈົ້າໄດ້ແຕ້ມໃນກ່ອນໜ້ານັ້ນ.
6) ກຸ່ມແມ່ຍິງ ຄວນສະເໜີຄຳຄິດເຫັນຂອງເຂົາເຈົ້າ, ຕິດຕາມມາໂດຍກຸ່ມຜູ້ຊາຍ (ແລະ ກຸ່ມອື່ນໆ ຖ້າຫາກມີ). ມາຮອດນີ້ ເຂົາເຈົ້າຈຳເປັນຕ້ອງກຳນົດບູລິມະສິດ ທີ່ຕ້ອງການລົງທຶນຂອງກຸ່ມບ້ານ.
7) ໃຊ້ວິທີລົງປະຊາມະຕິ ຫຼື ຍົກມືເອົາ ເພື່ອຄັດເລືອກເອົາ ຢ່າງນ້ອຍ 8 ລາຍການທີ່ຕ້ອງການລົງທຶນໃນໄລຍະ 5 ປີ ໃນຕໍ່ໜ້າຂອງກຸ່ມບ້ານ. ໃນນັ້ນໃຫ້ອີງໃສ່ລະດັບຄວາມທຸກຍາກຂອງແຕ່ລະບ້ານພາຍໃນກຸ່ມບ້ານ ແລະ ເພື່ອຮັບປະກັນຄວາມດຸ່ນດ່ຽງດ້ານບົດບາດຍິງ-ຊາຍ, ທ່ານຕ້ອງໝັ້ນໃຈວ່າ ຢ່າງໜ້ອຍ 3 ໃນ 5 ບູລິມະສິດທຳອິດ ຕ້ອງຄັດເລືອກມາຈາກແມ່ຍິງ. ບັນທຶກຄວາມຕ້ອງການລົງທຶນຕາມລຳດັບບູລິມະສິດໃສ່ແບບຟອມ, ມາຮອດນີ້ຖືວ່າພວກເຮົາໄດ້ແຜນພັດທະນາກຸ່ມບ້ານຂອງພວກເຮົາ.
8) ສ້າງລາຍການທີ່ຕ້ອງການລົງທຶນ ໂດຍເອົາຈາກແຕ່ລະກຸ່ມ. ສຳລັບແຕ່ລະຫ້ອງໃນຕາຕະລາງ, ດຳເນີນການລົງຄະແນນ ເພື່ອຕັດສິນໃຈວ່າກິດຈະກຳໃດເປັນທາງເລືອກ. ໃນຕອນທ້າຍທ່ານຈະຮູ້ກ່ຽວກັບສິ່ງທີ່ຕ້ອງການລົງທຶນອັນໃດເປັນບູລິມະສິດອັນດັບທຳອິດ.
9) ເພື່ອສະຫລຸບມ້ວນທ້າຍພາກນີ້, ເວົ້າໃຫ້ຜູ້ເຂົ້າຮ່ວມປະຊຸມ ວ່າແຜນພັດທະນາກຸ່ມບ້ານນີ້ຍັງສາມາດນຳໃຊ້ເຂົ້າໃນການວາງແຜນຂອງແຕ່ລະຂະແໜງການເບື້ອງລັດ ຫລື ສຳລັບຜູ້ໃຫ້ທຶນອື່ນໆ ເພາະແຜນດັ່ງ ກ່າວນີ້ແມ່ນຄວາມຕ້ອງການ ສຳລັບລົງທຶນໃນ ຢູ່ກຸ່ມບ້ານຂອງພວກເຮົາ ໂດຍໄດ້ຜ່ານການຄັດເລືອກ ແລະ ມີສ່ວນຮ່ວມຂອງແຕ່ລະບ້ານ. ອະທິບາຍວ່າ ທລຍ ຈະສະໜັບສະໜູນຈັດຕັ້ງປະຕິບັດແຜນພັດທະນາກຸ່ມບ້ານໃນສ່ວນໃດນຶ່ງເທົ່ານັ້ນ, ທັງນີ້ຂຶ້ນກັບນະໂຍບາຍຂອງໂຄງການ ແລະ ຂຶ້ນກັບງົບປະມານທີ່ໄດ້ຈັດສັນໃຫ້. ມາຮອດນີ້ທ່ານພ້ອມທີ່ຈະດຳເນີນການໃນພາກກອງປະຊຸມຕໍ່ໄປ.

## 4. ການວາງແຜນພັດທະນາກຸ່ມບ້ານ ພາກທີ 4 – "ການສ້າງແຜນການຂອງ ທລຍ ເພື່ອສະໜັບສະໜູນ ການຈັດຕັ້ງປະຕິບັດແຜນພັດທະນາກຸ່ມບ້ານ ໃນໄລຍະ 5 ປີ"



ຈຸດປະສົງ: ເພື່ອສ້າງແຜນການຂອງ ທລຍ ສໍາລັບສະໜັບສະໜູນ ການປະຕິບັດແຜນພັດທະນາກຸ່ມບ້ານ. ແຜນຂອງ ທລຍ ດັ່ງກ່າວນີ້ ຈະສ້າງເປັນແຜນ 4 ປີ . ແຜນການດັ່ງກ່າວນີ້ ຈະສະແດງໃຫ້ເຫັນບູລິມະສິດໂຄງການຍ່ອຍ, ງົບປະມານທີ່ຕ້ອງການໂດຍຄາດຄະເນ ທີ່ຕ້ອງການລົງທຶນ, ສະຖານທີ່ກໍ່ສ້າງໂຄງການຍ່ອຍຢູ່ພາຍໃນກຸ່ມບ້ານ.

ເຕັກນິກ: ຈັດການປະຊຸມປຶກສາຫາລື ໂດຍຕົວແທນບ້ານຂອງແຕ່ລະບ້ານເຂົ້າຮ່ວມ

ການກະກຽມ: ໝັ້ນໃຈວ່າ ຜູ້ເຂົ້າຮ່ວມປະຊຸມໄດ້ຮັບການແນະນໍາແລ້ວ ກ່ຽວກັບເນື້ອໃນຫລັກໆ ຂອງ ທລຍ 2.

ກໍານົດເວລາ: 3 ຊົ່ວໂມງເປັນຢ່າງໜ້ອຍ: ປະມານ 45 ນາທີ ສໍາລັບແນະນໍາກ່ຽວກັບລະບຽບຫລັກການຂອງ ທລຍ ແລະ 2 ຫາ 2 ຊົ່ວໂມງເຄິ່ງ ສໍາລັບສ້າງແຜນການຂອງ ທລຍ ໃນໄລຍະ 4 ປີ ເພື່ອສະໜັບສະໜູນແຜນການພັດທະນາກຸ່ມບ້ານ.

ຄໍາແນະນໍາສໍາລັບແຕ່ລະບາດກ້າວ:

ແນະນໍາຜູ້ເຂົ້າຮ່ວມ ກ່ຽວກັບນະໂຍບາຍ, ລະບຽບຫລັກການຂອງ ທລຍ 2:

1) ແຈ້ງໃຫ້ຜູ້ເຂົ້າຮ່ວມປະຊຸມ ຮັບຮູ້ກ່ຽວກັບ ການຈັດແບ່ງງົບປະມານໄລຍະ 4 ປີສໍາລັບກຸ່ມບ້ານ ແລະ ອະທິບາຍວ່າການຈ່າຍງົບປະມານຈະເປັນແບບປີຕໍ່ປີ. ສູດການຈັດແບ່ງມີຄືດັ່ງນີ້:

| ຈໍານວນປະຊາກອນທັງໝົດຂອງກຸ່ມບ້ານ | ງົບປະມານ ທີ່ຈັດແບ່ງໃຫ້ກຸ່ມ ຕໍ່ປີ |
|---|---|
| < 2,000 ຄົນ | 30,000 ໂດລາສະຫະລັດ ຕໍ່ປີ (ປະມານ 240,000,000 ກີບ ຕໍ່ປີ |
| 2,000 ຫາ 4,000 ຄົນ | 40,000 ໂດລາສະຫະລັດ ຕໍ່ປີ (ປະມານ 320,000,000 ກີບ ຕໍ່ປີ) |
| >4,000 ຄົນ | 50,000 ໂດລາສະຫະລັດ ຕໍ່ປີ (ປະມານ 400,000,000 ກີບ ຕໍ່ປີ) |

ໝາຍເຫດ: ການຈັດແບ່ງງົບປະມານໃນແຕ່ລະປີສາມາດ ມີການຍືດຍຸ່ນໄດ້ ຫຼື ສາມາດຈັດແບ່ງສູງກວ່າ ຕົວເລກທີ່ເຖິງ 50% ຍົກເວັ້ນປີທໍາອິດ, ແຕ່ງົບປະມານສໍາລັບ 4 ປີແມ່ນຍັງເທົ່າເດີມ.

2) ຢໍ້າຄືນວ່າ ເຂົາເຈົ້າຈະໄດ້ສ້າງແຜນການໃນໄລຍະ 4 ປີ, ໃນນັ້ນ ຈະໄດ້ສະແດງໃຫ້ເຫັນວ່າ ບັນດາໂຄງການຍ່ອຍທັງໝົດ ທີ່ເຂົາເຈົ້າຄາດຫວັງວ່າຈະໄດ້ຈັດຕັ້ງປະຕິບັດ. ເອົາແບບຟອມສັງລວມແຜນພັດທະນາກຸ່ມບ້ານໃຫ້ເຂົາເຈົ້າເບິ່ງ (ພາກທ້າຍສຸດຂອງແບບຟອມ ແມ່ນແຜນການລົງທຶນດ້ານພື້ນຖານໂຄງລ່າງຂອງ ທລຍ ເພື່ອສະໜັບສະໜູນ ແຜນພັດທະນາກຸ່ມບ້ານໃນໄລຍະ 5 ປີ) ແລະ ຍົກຕົວຢ່າງໃດໜຶ່ງໃນການແນະນໍາວິທີການຕື່ມລາຍລະອຽດໃສ່ແບບຟອມ.
3) ແຈ້ງໃຫ້ຜູ້ເຂົ້າຮ່ວມປະຊຸມວ່າ ກິດຈະກໍາ ຫລື ການລົງທຶນ ທີ່ເຂົາເຈົ້າຢາກສະເໜີມານັ້ນ ແມ່ນເພື່ອສ້າງຜົນປະໂຫຍດໃຫ້ແກ່ຊຸມຊົນໂດຍລວມ, ແຕ່ບໍ່ແມ່ນເພື່ອຜົນປະໂຫຍດສະເພາະບຸກຄົນແຕ່ຢ່າງໃດ.
4) ການກໍ່ສ້າງໂຄງການຍ່ອຍໃດໆກໍຕາມ ຄວນໃຫ້ສໍາເລັດພາຍໃນປີດັ່ງກ່າວນັ້ນ .
5) ອະທິບາຍລາຍການທີ່ ທລຍ ບໍ່ສະໜັບສະໜູນປະເພດກິດຈະກໍາທີ່ບໍ່ຄວນບັນຈຸເຂົ້າເປັນໂຄງການຍ່ອຍຂອງ ທລຍ 2 ມີດັ່ງຕໍ່ໄປນີ້:

- ການສ້າງເສັ້ນທາງໃໝ່ ອີງຕາມມາດຖານໃໝ່ ພາຍໃຕ້ຂໍ້ກໍານົດການຈັດລະດັບເສັ້ນທາງ ຂອງກະຊວງໂຍທາທິການ ແລະ ຂົນສົ່ງໃນປັດຈຸບັນ.
- ເຂື່ອນໄຟຟ້ານໍ້າຕົກ
- ສະໂມສອນກຸ່ມບ້ານ;
- ເລື່ອຍຈັກຕັດໄມ້, ຢາປາບສັດຕູພືດ, ຢາຂ້າແມງໄມ້, ຢາຂ້າຫຍ້າ; ເສັ້ນໃຍຊະນິດນຶ່ງ ເພື່ອປະສົມເຮັດໃຫ້ວັດຖຸສິ່ງຂອງມີຄວາມແຂງແຮງ ແລະ ທົນທານຕໍ່ຄວາມຮ້ອນ, ຫລື ການລົງທຶນອື່ນໆ ທີ່ສ້າງຜົນກະທົບຕໍ່ທໍາມະຊາດ;
- ກິດຈະກໍາສິ່ງເສີມຊີວິດການເປັນຢູ່ສ່ວນບຸກຄົນ, ລວມທັງການຊ່ວຍເຫລືອລ້າ, ສິນເຊື່ອ, ກູ້ຢືມ, ອຸປະກອນ ແລະ ປັດໄຈນໍາເຂົ້າ ສໍາລັບການລົງທຶນຂອງຄົວເຮືອນ;
- ທໍ່ນໍ້າ, ເພື່ອຮັບໃຊ້ການຕໍ່ນໍ້າເຂົ້າເຮືອນສ່ວນບຸກຄົນ;
- ວັດຖຸ ຫຼື ອຸປະກອນ ທີ່ສ້າງຜົນປະໂຫຍດ ໃຫ້ພຽງແຕ່ຄົວເຮືອນດຽວ;
- ການປຸກສ້າງອາຄານ ຫລື ຫ້ອງການຂອງລັດ;
- ການຈ່າຍເງິນເດືອນໃຫ້ພະນັກງານລັດ ຫລື ເງິນເດືອນຂອງອົງການຈັດຕັ້ງ ທີ່ໄດ້ຮັບເງິນອຸດໜູນຈາກລັດຖະບານແລ້ວ;
- ການຍົກຍ້າຍຖິ່ນຖານ ຫລື ການຂະຫຍາຍບ້ານໃໝ່ ອອກໄປຫາເຂດພື້ນທີ່ຫລໍ່ແຫລມ, ເຂດປ່າສະຫງວນ ຫລື ເຂດທີ່ສະເໜີໃຫ້ເປັນເຂດສະຫງວນ;
- ໂຄງການຍ່ອຍ ຫລື ກິດຈະກໍາ ທີ່ກ່ຽວພັນ ຫລື ນໍາໄປສູ່ການຂູດຮີດແຮງງານເດັກ ຫລື ການຄ້າມະນຸດ
- ການສ້າງເສັ້ນທາງ ຫລື ຟື້ນຟູທາງປະເພດໃດໆ ພາຍໃນບໍລິເວນພື້ນທີ່ຫລໍ່ແຫລມ ຫລື ເຂດພື້ນທີ່ສະເໜີໃຫ້ເປັນເຂດສະຫງວນ;
- ອາຄານ ຫລື ສິ່ງອໍານວຍຄວາມສະດວກ ທີ່ນໍາໃຊ້ສໍາລັບຈຸດປະສົງທາງສາສະໜາ;
- ການຍຶດຄອງທີ່ດິນ ແລະ ການຍົກຍ້າຍບ້ານແບບບໍ່ສະໝັກໃຈ.

ໝາຍເຫດ: ທລຍ 2 ບໍ່ສະໜັບສະໜູນແຜນການທ້ອນໂຮມບ້ານ ແລະ/ຫລື ການຍົກຍ້າຍບ້ານ ຊຶ່ງບໍ່ສອດຄ່ອງກັບນະໂຍບາຍຂອງທະນະຄານໂລກ.

6) ແຈ້ງໃຫ້ຜູ້ເຂົ້າຮ່ວມປະຊຸມຊາບວ່າ ກ່ຽວກັບສິ່ງທີ່ຊຸມຊົນວາງເປົ້າໝາຍວ່າຈະຈັດຕັ້ງປະຕິບັດນັ້ນ ຊຸມຊົນຈະຕ້ອງໄດ້ປະກອບສ່ວນຢ່າງໜ້ອຍ 10% ຂອງມູນຄ່າໂຄງການຍ່ອຍທັງໝົດ, ໃນນີ້ແມ່ນການປະກອບສ່ວນທາງດ້ານ ຫລື ວັດຖຸ ໃນຮູບແບບສະໝັກໃຈ.
7) ຊຸມຊົນຍັງຈະຕ້ອງໄດ້ມີຄວາມຮັບຜິດຊອບ ໃນການຄຸ້ມຄອງນໍາໃຊ້ ແລະ ບົວລະບັດຮັກສາໂຄງການຍ່ອຍທີ່ຈະຖືກສ້າງຂຶ້ນ.
8) ສະໜອງ "ລາຄາຫົວໜ່ວຍ" ສໍາລັບໂຄງການຍ່ອຍ. ຊີ້ບອກວ່າ ເຂົາເຈົ້າຄວນກະກຽມງົບປະມານທີ່ຄາດຄະເນ ຊຶ່ງເປັນສ່ວນໜຶ່ງ ຂອງແຜນການລົງທຶນ ແລະ ໂຄງການຍ່ອຍທີ່ສະເໜີ ໃນແຕ່ລະປີ ຄວນບໍ່ເກີນຈໍານວນເງິນທີ່ ທລຍ ຈັດແບ່ງໃຫ້ໃນແຕ່ລະປີ. ໝັ້ນໃຈວ່າທ່ານກຽມພ້ອມທີ່ຈະສະໜັບສະໜູນເຂົາເຈົ້າໃນການຄິດໄລ່ງົບປະມານ.
9) ແຈ້ງເຕືອນໃຫ້ຜູ້ເຂົ້າຮ່ວມປະຊຸມ ວ່າເປົ້າໝາຍຂອງ ທລຍ ແມ່ນຫລຸດຜ່ອນຄວາມທຸກຍາກ ແລະ ຫລັກການຕົ້ນຕໍຂອງ ທລຍ ແມ່ນເລັງໃສ່ຊ່ວຍເຫຼືອຜູ້ທຸກຍາກ. ສະນັ້ນ, ຢ່າງໜ້ອຍ 60% ຂອງງົບປະມານທັງໝົດ ແລະ 66% ຂອງຈໍານວນໂຄງການຍ່ອຍທັງໝົດ ຕ້ອງນໍາຜົນປະໂຫຍດໂດຍກົງໄປຫາບ້ານທຸກຍາກໃນກຸ່ມບ້ານຂອງເຂົາເຈົ້າ.
10) ອີກອັນນຶ່ງທີ່ສໍາຄັນກວ່າໝູ່ ກ່ຽວກັບໂຄງການຍ່ອຍ ແມ່ນການເຂົ້າເຖິງ ແລະ ຜູ້ຊົມໃຊ້. ໝາຍຄວາມວ່າຊຸມຊົນຈະຕ້ອງຕົກລົງກ່ຽວກັບຜູ້ທີ່ຈະໄດ້ຊົມໃຊ້ໂຄງການຍ່ອຍໂດຍຫລາຍເທົ່າທີ່ຈະຫລາຍໄດ້. ຖ້າຫາກວ່າມັນຈະປັບປຸງການເຂົ້າເຖິງ ແລະ ເພີ່ມຜູ້ຊົມໃຊ້ໃຫ້ຫລາຍຂຶ້ນ, ຜູ້ເຂົ້າຮ່ວມປະຊຸມຕ້ອງໄດ້ຊຸກຍູ້ໃຫ້ໂຄງການຍ່ອຍໄປຕັ້ງຢູ່ຈຸດໃຈກາງ ຫຼື ຢູ່ໃນລະຫວ່າງບ້ານ(ເພື່ອວ່າຈະມີຫລາຍບ້ານສາມາດເຂົ້າ ເຖິງ).
11) ເພື່ອປັບປຸງການເຂົ້າເຖິງ ຫລື ຮັບປະກັນໃຫ້ແກ່ການຊົມໃຊ້ໂຄງການຍ່ອຍ, ຊຸມຊົນຈໍາຕ້ອງໄດ້ຄໍານຶງເຖິງການຝຶກອົບຮົມທີ່ກ່ຽວຂ້ອງກັບໂຄງການຍ່ອຍນັ້ນໆ. ການຝຶກອົບຮົມດັ່ງກ່າວນັ້ນ ເປັນສ່ວນໜຶ່ງຂອງໂຄງການຍ່ອຍດ້ານພື້ນຖານໂຄງລ່າງ. ຕົວຢ່າງຫົວຂໍ້ການຝຶກອົບຮົມທີ່ຕິດພັນກັບແຕ່ລະປະເພດໂຄງການຍ່ອຍມີດັ່ງນີ້:

| ປະເພດ ໂຄງການ | ຕົວຢ່າງ ປະເພດໂຄງການຍ່ອຍ | ຕົວຢ່າງ ຫົວຂໍ້ຝຶກອົບຮົມທີ່ກ່ຽວຂ້ອງ |
|---|---|---|
| ນໍ້າສະອາດ | ນໍ້າສ້າງ, ນໍ້າລິນ, ວິດຖ່າຍ, ແລະ *ອື່ນໆ* | ການປ້ອງກັນແຫລ່ງນໍ້າ, ການຝຶກອົບຮົມ ສຸຂະອະນາໄມ, ການລະບາຍນໍ້າເສຍຈາກ ຄົວເຮືອນ / ບ້ານ |
| ການສຶກສາ ສ້າງໂຮງຮຽນ | ໂຮງຮຽນ ແລະ ໂຮງລ້ຽງເດັກ (ອາຄານ, ວິດຖ່າຍ, ເບ້ຍລ້ຽງຊົ່ວຄາວສໍາລັບຄູສັນຍາຈ້າງ, ວັດສະດຸ, ອຸປະກອນ, ໂຕະຕັ່ງ, ຝຶກອົບຮົມ, ທຶນການສຶກສາ, ຕໍາລາການຮຽນການສອນ, ເຄື່ອງດົນຕີ). | ການຝຶກອົບຮົມຄູສອນ; ສະໜອງອຸປະກອນການສຶກສາ (ປຶ້ມ, ອຸປະກອນການຮຽນການສອນ); ການສ້າງຕັ້ງ/ເຄື່ອນໄຫວສະມາຄົມພໍ່ແມ່ນັກຮຽນ ເພື່ອແລກປ່ຽນຂໍ້ມູນຂ່າວສານເພື່ອເພີ່ມທະວີອັດຕາການ ເຂົ້າຮຽນ/ການຂຶ້ນຫ້ອງຢູ່ໂຮງຮຽນ. |

12) ເມື່ອການແນະນຳຫຍໍ້ກ່ຽວກັບ ທລຍ ຈົບລົງແລ້ວ, ຜູ້ເຂົ້າຮ່ວມປະຊຸມ ຄວນເຈລະຈາຮ່ວມກັນ ແລະ ສຳເລັດລົງລາຍລະອຽດສະເພາະ ຂອງແຜນການລົງທຶນຕາມພື້ນຖານປີຕໍ່ປີ. ຜູ້ເຂົ້າຮ່ວມປະຊຸມຄວນໃຊ້ແຜນວາດໃນຝັນ ເພື່ອອ້າງອີງ ແລະ ການວິເຄາະທີ່ເບິ່ງຈາກ ຄວາມມຸ້ງມາດປາດຖະໜາ, ບັນຫາ, ທ່າແຮງ ແລະ ກາລະໂອກາດ ເພື່ອໃຫ້ໝັ້ນໃຈວ່າເຂົາເຈົ້າກຳລັງຮ່ວມກັນກ້າວໄປ ເປົ້າໝາຍທີ່ເຫັນດີເປັນເອກະພາບນຳກັນ.




13) ໝັ້ນໃຈວ່າ ຜູ້ເຂົ້າຮ່ວມປະຊຸມຮັບຮູ້ ວ່າແຜນການລົງທຶນທີ່ເຂົາເຈົ້າໄດ້ສ້າງຂຶ້ນ ໃນໄລຍະກອງປະຊຸມວາງແຜນພັດທະນາກຸ່ມບ້ານຈະມີການທົບທວນ ແລະ ສາມາດແກ້ໄຂ ຫລື ດັດປັບອີກ (ກອງປະຊຸມກຳນົດທິດທາງພັດທະນາບ້ານ ແລະ ການວາງແຜນພັດທະນາກຸ່ມບ້ານ ຈະດຳເນີນອີກໃນແຕ່ລະປີ).

14) ເຕືອນໃຫ້ຜູ້ເຂົ້າຮ່ວມປະຊຸມວ່າ ໂຄງການຍ່ອຍໜຶ່ງ ຈະບໍ່ຖືກຮັບຮອງຈົນກວ່າການສຳຫລວດ ອອກແບບທາງດ້ານເຕັກນິກ ຈະເສັດສິ້ນລົງ ແລະ ຈະຖືກຮັບຮອງເອົາຈົນກວ່າໄດ້ຢັ້ງຢືນວ່າ ໂຄງການດັ່ງກ່າວນັ້ນບໍ່ໄດ້ລະເມີດຕໍ່ນະໂຍບາຍການປ້ອງກັນຜົນກະທົບທາງສັງຄົມ ແລະ ສິ່ງແວດລ້ອມ (ໂດຍສະເພາະ ນະໂຍບາຍການທົດແທນທີ່ດິນ).

15) ກ່ອນທີ່ການປະຊຸມຈະອັດລົງ, ຜູ້ເຂົ້າຮ່ວມປະຊຸມຄວນຄັດເລືອກຕົວແທນກຸ່ມບ້ານ ດັ່ງນີ້:

- ຄັດເລືອກເອົາ 4 ຄົນ (ຍິງ 2 ແລະ ຊາຍ 2) ເພື່ອເປັນຕົວແທນຂອງກຸ່ມບ້ານ ໄປຮ່ວມກອງປະຊຸມປະສານງານການວາງແຜນພັດທະນາກຸ່ມບ້ານ ທີ່ຈະຂຶ້ນຢູ່ຂັ້ນເມືອງ.

## 5. ກອງປະຊຸມປະສານງານການວາງແຜນພັດທະນາກຸ່ມບ້ານ

ສະຖານທີ່ຈັດກອງປະຊຸມ:

ຫ້ອງປະຊຸມ ຂອງຫ້ອງວ່າການປົກຄອງເມືອງ

ປະທານກອງປະຊຸມ:

ທ່ານເຈົ້າເມືອງ ຫລື ທ່ານຮອງເຈົ້າເມືອງ

ຜູ້ດຳເນີນກອງປະຊຸມ:

ພະນັກງານ ທລຍ ຂັ້ນເມືອງ ແລະ ຜູ້ປະສານງານກຸ່ມບ້ານ

ຜູ້ເຂົ້າຮ່ວມ:

ຕົວແທນກຸ່ມບ້ານ ແລະ ຜູ້ປະສານງານກຸ່ມບ້ານ, ຜູ້ຕາງໜ້າຈາກຫ້ອງການກໍ່ສ້າງຮາກຖານຂັ້ນເມືອງ, ຕາງໜ້າພະແນກ ແລະ ຫ້ອງການ ຈາກຂະແໜງການຕ່າງໆ ທີ່ກ່ຽວຂ້ອງຂັ້ນເມືອງ, ອົງການຈັດຕັ້ງສາກົນ ຫຼື ໂຄງການພັດທະນາອື່ນໆ ທີ່ກຳລັງເຮັດວຽກຢູ່ໃນເມືອງດັ່ງກ່າວ, ພາກເອກະຊົນ ແລະ ພະນັກງານ ທລຍ ທຸກໆຂັ້ນ

ຈຸດປະສົງຂອງກອງປະຊຸມ:

- ນຳສະເໜີ ແລະ ສົນທະນາ ກ່ຽວກັບແຜນພັດທະນາກຸ່ມບ້ານໃນໄລຍະຍາວ ໂດຍຕົວແທນແຕ່ລະກຸ່ມບ້ານ,
- ນຳສະເໜີ ແລະ ສົນທະນານຳຫ້ອງການວິຊາການທີ່ກ່ຽວຂ້ອງຂັ້ນເມືອງ ກ່ຽວກັບການການບໍລິການຕ່າງໆ ທີ່ຈະສະໜັບສະໜູນໃຫ້ແກ່ກຸ່ມບ້ານ,
- ທົບທວນແຜນການລົງທຶນຂອງ ທລຍ, ໂດຍສະເພາະ ຢູ່ໃນບົດສະເໜີໂຄງການຍ່ອຍສຳລັບປີທຳອິດ ແລະ ປີທີ່ສອງ ຂອງ ທລຍ ໄລຍະ 2,
- ສົນທະນາ ຮ່ວມກັບຫ້ອງການວິຊາການທີ່ກ່ຽວຂ້ອງຂັ້ນເມືອງ ກ່ຽວກັບຄວາມສາມາດ ແລະ ຄວາມເປັນໄປໄດ້ ໃນການສະໜັບສະໜຸນການຄຸ້ມຄອງນຳ້ໃຊ້ ໂຄງການຍ່ອຍໃນໄລຍະຍາວ,
- ຕົກລົງ ກ່ຽວກັບຈຳນວນໂຄງການຍ່ອຍ ຈາກນັ້ນຈະໄດ້ດຳເນີນການອອກແບບ (ສຳຫຼວດ ແລະ ຂຽນລາຍລະອຽດ ບົດສະເໜີໂຄງການຍ່ອຍ)
- ຕົກລົງ ກ່ຽວກັບຄວາມເປັນໄປໄດ້ ໃນການເຮັດໂຄງການຮ່ວມກັນ (ເຊັ່ນ: ໂຄງການຮ່ວມກັນລະຫວ່າງບ້ານ ຫຼື ລະຫວ່າງກຸ່ມບ້ານ ທີ່ເຫັນວ່າຈະເປັນການປະຢັດ ຫຼື ມີການຄຸ້ມຄ່າກວ່າ)

- ມີຄວາມຄິດຄວາມເຫັນໃດແດ່ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ທລຍ ໃນຮອບວຽນ ຜ່ານມາ ທີ່ໄດ້ຮັບຈາກກົນໄກສະແດງຄໍາຄິດຄໍາເຫັນ ແລະ ແກ້ໄຂບັນຫາ ຫຼື ອື່ນໆ

<u>ລະດັບຄາດໝາຍ ທີ່ຈະໄດ້ຮັບ:</u>

- ມີການຕົກລົງ ກ່ຽວກັບການລວມເອົາແຜນການລົງທຶນ ຂອງ ທລຍ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ຂອງເມືອງ,
- ມີການຕົກລົງ ກ່ຽວກັບການສໍາຫລວດ-ອອກແບບ ບັນດາໂຄງການຍ່ອຍ ທີ່ຄັດເລືອກວ່າຈະຈັດຕັ້ງປະຕິບັດຢູ່ໃນປີທີ 1 ແລະ ປີທີ 2 ໂດຍມີການຮັບຮອງເອົາຄວາມຮຽກຮ້ອງຕ້ອງການໆຊ່ວຍເຫລືອທາງດ້ານວິຊາການ,
- ມີການໃຫ້ຄໍາໝັ້ນສັນຍາໃນຫຼັກການ ຂອງຫ້ອງການວິຊາການຂັ້ນເມືອງ ແລະ ຂະແໜງການທີ່ກ່ຽວຂ້ອງ ໃນການສະໜັບສະໜູນການບໍລິການໂຄງການຍ່ອຍ (ຕົວຢ່າງ: ການສະໜອງຄູສອນ ຫຼື ພະນັກງານແພດ ທີ່ຈະໄປປະຈໍາຢູ່ໂຮງຮຽນ ຫຼື ສຸກສາລາ ທີ່ຈະກໍ່ສ້າງໂດຍ ທລຍ),
- ມີການໃຫ້ຄໍາໝັ້ນສັນຍາໃນຫຼັກການ ຂອງຫ້ອງການວິຊາການຂັ້ນເມືອງ ແລະ ຂະແໜງການທີ່ກ່ຽວຂ້ອງ ຕໍ່ກັບຄວາມຍືນຍົງຂອງໂຄງການ.

<u>ໜ້າວຽກ ແລະ ຄວາມຮັບຜິດຊອບ:</u>

- ຢັ້ງຢືນຄືນ ກ່ຽວກັບຂັ້ນຕອນການເຮັດວຽກ ຂອງ ທລຍ: ລະບຽບຫຼັກການ, ຮອບວຽນ, ທຶນຮອນຕົວຈິງທີ່ມີ ແລະ ຂໍ້ຈໍາກັດດ້ານງົບປະມານ, ລາຍການກິດຈະກໍາທີ່ສະໜັບສະໜູນ ແລະ ບໍ່ສະໜັບສະໜູນ, ຂໍ້ແນະນໍາໃນການປ້ອງກັນຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ (ການເວນຄືນ/ການປະກອບສ່ວນທີ່ດິນແບບສະໝັກໃຈ, ລະບົບການທົດແທນ, ແຫລ່ງຮີດຄອງປະເພນີວັດທະນະທໍາລວມທັງກຸ່ມຊົນເຜົ່າຜູ້ດ້ອຍໂອກາດ)
- ນໍາສະເໜີ ແຜນພັດທະນາກຸ່ມບ້ານ,
- ທົບທວນຄືນແຜນການຄາດຄະເນງົບປະມານ ສໍາລັບໂຄງການຍ່ອຍໃນປີທີ 1 ແລະ ປີທີ 2 ໂດຍທຽບໃສ່ງົບປະມານຂອງກຸ່ມບ້ານ,
- ອໍານາດການປົກຄອງຂັ້ນເມືອງ ( ແລະ ໂຄງການພັດທະນາອື່ນໆ, ຖ້າຫາກມີ) ໃຫ້ຄໍາແນະນໍາ ຖ້າຫາກວ່າມີໂຄງການທີ່ຊໍ້າຊ້ອນກັນ ຫລື ມີແຜນທີ່ຈະດໍາເນີນ ຫລື ຖ້າມີແຫລ່ງທຶນອື່ນ ທີ່ຈະສະໜັບສະໜູນແຜນພັດທະນາກຸ່ມບ້ານ,
- ຢືນຢັນວ່າໂຄງການຍ່ອຍ ຂອງ ທລຍ ໃນປີທີນຶ່ງ 1 ແລະ ປີທີ 2 ທີ່ຈະດໍາເນີນການອອກແບບກໍ່ຈະຕ້ອງໄດ້ຮັບຮອງສຸດທ້າຍອີກ ກ່ຽວກັບການສະໜັບສະໜູນດ້ານວິຊາການ.

ໝາຍເຫດ:

- ກ່ອນຈັດກອງປະຊຸມ, ພະແນກວິຊາການ ຈະຕ້ອງໄດ້ຢັ້ງຢືນຕົວເລກງົບປະມານ ທີ່ຄາດຄະເນໃສ່ແຜນພັດທະນາກຸ່ມບ້ານ (ນຳໃຊ້ຂໍ້ມູນລາຄາຫົວໜ່ວຍ ໃນຖານຂໍ້ມູນ),
- ກ່ອນຈັດກອງປະຊຸມ, ພະນັກງານ ທລຍ ຂັ້ນເມືອງ ຈະຕ້ອງໄດ້ຢືນຢັນວ່າ ໂຄງການຍ່ອຍໃນປີທີ 1 ຕ້ອງໃຫ້ສອດຄ່ອງກັບເງື່ອນໄຂໃນການຄັດເລືອກ (ເຊັ່ນ: 66% ຂອງຈຳນວນໂຄງການຍ່ອຍ ຕ້ອງຕົກໃສ່ບ້ານທີ່ທຸກຍາກທີ່ສຸດ),
- ໂຄງການຍ່ອຍ ທີ່ກຳນົດໄວ້ຢູ່ໃນແຜນພັດທະນາກຸ່ມບ້ານ ຈະຕ້ອງພິຈາລະນາ ແລະ ຮັບຮອງວ່າໂຄງການດັ່ງກ່າວບໍ່ມີການຊັບຊ້ອນ ກັບແຜນພັດທະນາຢູ່ເມືອງ, ໂຄງການດັ່ງກ່າວເປັນໄປໄດ້, ສະນັ້ນ, ອຳນາດການປົກຄອງຂັ້ນເມືອງ ຕ້ອງໃຫ້ການຮັບຮອງເອົາແຜນການດັ່ງກ່າວ,
- ໃນກໍລະນີທີ່ ໂຄງການຍ່ອຍທີ່ສະເໜີຖືກໂຈະດ້ວຍເຫດຜົນໃດກໍຕາມ ຢູ່ໃນກອງປະຊຸມ (ຕົວຢ່າງ: ລັດຖະບານ ຫລື ຜູ້ໃຫ້ທຶນອື່ນໆ ມີແຜນການລົງທຶນແລ້ວ) ຕົວແທນກຸ່ມບ້ານອາດຈະສະເໜີບຸລິມະສິດຢູ່ໃນປີທີ 2 ເພື່ອໃຫ້ ທລຍ ສະໜັບສະໜູນ. ບາງໂຄງການຍ່ອຍສາມາດຮວມເຂົ້າກັນໄດ້ ຖ້າຫາກເຮັດໃຫ້ບ້ານອື່ນ ຫຼື ກຸ່ມບ້ານອື່ນ ໄດ້ຮັບຜົນປະໂຫຍດ ໃນກໍລະນີທີ່ເຂົາເຈົ້າສະເໜີໂຄງການຍ່ອຍທີ່ຄ້າຍຄືກັນ, ແນວໃດກໍ່ຕາມຈຳນວນງົບປະມານໂຄງການຍ່ອຍນຶ່ງ ບໍ່ໃຫ້ເກີນ 60,000 ໂດລາ. ເຖິງຢ່າງໃດກໍ່ຕາມ ແນວຄວາມຄິດໃນການສະເໜີໂຄງການຍ່ອຍໃໝ່ ກໍ່ບໍ່ສາມາດເກີດຂື້ນ ຢູ່ໃນກອງປະຊຸມນີ້,
- ຕົວແທນບ້ານ ແລະ ຜູ້ປະສານງານກຸ່ມບ້ານ ຈະມີຄວາມຮັບຜິດຊອບ ໃນການເຜີຍແຜ່ຜົນຂອງກອງປະຊຸມຄັ້ງນີ້ ໃຫ້ທຸກໆບ້ານໄດ້ຮັບຮູ້ (ເບິ່ງໃນຫົວຂໍ້ທີ 6) ແລະ ໂດຍການຕິດຂ່າວຜົນຂອງກອງປະຊຸມລົງໃສ່ໃນກະດານຂ່າວ ທລຍ ປະຈຳກຸ່ມບ້ານ
- ພິຈາລະນາກ່ຽວກັບ ການຄຸ້ມຄອງນຳໃຊ້ ແລະ ບູລະນະສ້ອມແປງ ຈະຕ້ອງມີການທົບທວນ ແລະ ສົນທະນາກັນຢູ່ໃນກອງປະຊຸມດັ່ງກ່າວນີ້. ຖ້າຄິດວ່າຄວາມຍືນຍົງຂອງໂຄງກາຍ່ອຍດັ່ງກ່າວມີຄວາມຈຳກັດຫລາຍ, ຕົວແທນກຸ່ມບ້ານຄວນໂຈະໂຄງການດັ່ງກ່າວໄວ້. ຢູ່ໃນໄລຍະກອງປະຊຸມດັ່ງກ່າວນີ້ ຕົວແທນກຸ່ມບ້ານຄວນທົບທວນຄືນ ກັບຂະແໜງການທີ່ກ່ຽວຂ້ອງກ່ຽວກັບແຜນການຄຸ້ມຄອງນຳໃຊ້ໃນໄລຍະຍາວ ໂດຍສະເພາະໃນດ້ານພະນັກງານ ທີ່ຈະໃຫ້ບໍລິການ (ຄູສອນ, ແພດປະຈຳສຸກສາລາ) ແລະ ງົບປະມານທີ່ຈະນຳໃຊ້ (ເງິນເດືອນພະນັກງານ, ອຸປະກອນຮັບໃຊ້ ແລະ ຄ່າສິ້ນເປືອງອື່ນໆ ເຊັ່ນ ຢາປົວພະຍາດຕ່າງໆ)

ກຳນົດເວລາຈັດກອງປະຊຸມ

- 1 ມື້, ຈັດຂື້ນຫລັງກຈາກ ກອງປະຊຸມປະສານງານການວາງແຜນພັດທະນາກຸ່ມບ້ານ ສຳເລັດແລ້ວ 2 ອາທິດ.

## 6. ກອງປະຊຸມແຈ້ງການ ແຜນການພັດທະນາກຸ່ມບ້ານ

ເປົ້າໝາຍ - ເພື່ອຮັບປະກັນວ່າ ພໍ່ແມ່ປະຊາຊົນແຕ່ລະບ້ານ ຮັບຮູ້ກ່ຽວກັບແຜນການພັດທະນາກຸ່ມບ້ານ. ເພື່ອແຈ້ງໃຫ້ເຂົາເຈົ້າຊາບຕື່ມ ແຜນການລົງທຶນຂອງ ທລຍ, ໂດຍສະເພາະບັນດາໂຄງການຍ່ອຍ ທີ່ຖືກຮັບຮອງແລ້ວ ຈະດຳເນີນການສຳຫລວດໃນເດືອນຕໍ່ມາ. ເພື່ອຮັບຮອງເອົາແຜນການພັດທະນາກຸ່ມຢ່າງເປັນທາງການ ໂດຍພໍ່ແມ່ປະຊາຊົນແຕ່ລະບ້ານ.

ກຳນົດເວລາ - ກອງປະຊຸມຄວນດຳເນີນພາຍໃນ 2 ອາທິດ ຫລັງຈາກກອງປະຊຸມປະສານງານການວາງພັດທະນາກຸ່ມບ້ານ. ນາຍບ້ານ ແລະ ຜູ້ປະສານງານກຸ່ມບ້ານ ຈະເປັນຜູ້ກະກຽມກອງປະຊຸມ. ການ ນຳສະເໜີຜົນຂອງການວາງແຜນພັດທະນາກຸ່ມບ້ານ ແລະ ແຜນການລົງທຶນ ຂອງ ທລຍ ແມ່ນຕົວແທນບ້ານເປັນຜູ້ນຳສະເໜີ.

ຄຳແນະນຳ: ເຊັ່ນດຽວກັນກັບ ກອງປະຊຸມອື່ນໆຂອງບ້ານ, ຜູ້ໃຫຍ່ຈຳນວນ 50% ຂອງປະຊາກອນຈະຕ້ອງມີໜ້າເຂົ້າຮ່ວມປະຊຸມ.

ຕົວແທນບ້ານ ສະເໜີຜົນຂອງການວາງແຜນພັດທະນາກຸ່ມບ້ານ ແລະ ລາຍງານວ່າໂຄງການຍ່ອຍໃດໆທີ່ໄດ້ສະເໜີ ແລະ ບໍ່ໄດ້ສະເໜີສຳ ລັບບ້ານຂອງເຂົາເຈົ້າ. ພ້ອມດຽວກັນ ຕ້ອງຊີ້ໃຫ້ເຫັນວ່າ ໂຄງການຍ່ອຍພື້ນຖານໂຄງລ່າງປະເພດໃດ, ກຳ ນົດເວລາຈັດຕັ້ງປະຕິບັດ (ປີໃດໃນໄລຍະແຜນການ 4 ປີ) ເຊັ່ນດຽວກັບ ສະຖານທີ່ກໍ່ສ້າງໂຄງການ ແລະ ງົບປະມານສຳລັບໂຄງການຍ່ອຍ. ພວກເຂົາເຈົ້າຄວນໃຫ້ຄວາມກະຈ່າງແຈ້ງຕື່ມ. ນອກຈາກນັ້ນອີກຈະຕ້ອງໄດ້ແຍກໃຫ້ເຫັນ ວ່າຊຸມຊົນຈະສາມາດປະກອບສ່ວນເຂົ້າໄດ້ໃນການກໍ່ສ້າງໂຄງການ.

ສືບຕໍ່ຈາກການສະເໜີ ຄວນໃຫ້ມີພາກ ການຕັ້ງຄຳຖາມ-ຕອບ ແລະ ສົນທະນາ ທີ່ເປັນກ



ຕໍ່ຈາກການ ນຳສະເໜີຂອງຕົວແທນບ້ານນັ້ນ, ຈະມີການຕັ້ງຄຳຖາມຂອງຜູ້ເຂົ້າຮ່ວມ ແລະ ມີການປຶກສາຫາລື ຫຼື ການສະເໜີຕ່າງໆ. ສະນັ້ນ ຜູ້ປະສານງານກຸ່ມບ້ານ ຕ້ອງໄດ້ບັນທຶກເອົາບັນຫາດັ່ງກ່າວນັ້ນ.

ຖາມຄວາມເຫັນ ນຳຜູ້ເຂົ້າຮ່ວມປະຊຸມ ເພື່ອ ຮັບຮອງເອົາແຜນພັດທະນາກຸ່ມບ້ານຢ່າງເປັນທາງການ ໂດຍການລົງຄະແນນສຽງ (ອາດຈະໃຊ້ ເປັນແບບຍົກມື ຫລື ປ່ອນບັດ). ໃນກໍລະນີທີ່ແຜນພັດທະນາກຸ່ມ ບ້ານບໍ່ຖືກຮັບຮອງເອົາ, ຜູ້ປະສານງານກຸ່ມບ້ານ ແລະ ພະນັກງານ ທລຍ ເມືອງຈະຕ້ອງເຮັດບົດລາຍງານ ເພື່ອຊີ້ແຈງຜົນຂອງການລົງຄະແນນສຽງ ແລະ ໃຫ້ເຫດຜົນວ່າຍ້ອນຫຍັງ ຊຸມຊົນຈຶ່ງບໍ່ຮັບຮອງເອົາຜົນຂອງການວາງແຜນພັດທະນາກຸ່ມບ້ານ.

ໝາຍເຫດ: ຖ້າຫາກສຽງສ່ວນໃຫຍ່ຂອງບ້ານໃນກຸ່ມບ້ານ ບໍ່ຮັບຮອງເອົາແຜນພັດທະນາກຸ່ມບ້ານ, ບັນຫານີ້ຈະຕ້ອງຍົກຂຶ້ນສະເໜີຕໍ່ ທີມງານບໍລິຫານ. ອາດເປັນໄປໄດ້ວ່າ ທີມງານບໍລິຫານ ທລຍ ຂັ້ນສູນກາງ ຈະຕ້ອງໄດ້ແນະນຳໃຫ້ເຮັດກອງປະຊຸມວາງແຜນພັດ ທະນາກຸ່ມບ້ານຄືນໃໝ່ອີກຄັ້ງ.

<u>ການກະກຽມສຳລັບໄລຍະຈັດຕັ້ງປະຕິບັດ</u>

ສຳລັບບ້ານທີ່ຜ່ານການຮັບຮອງເອົາໂຄງການຍ່ອຍໃນຮອບວຽນ 1 ຂອງ ທລຍ 2, ກອງປະຊຸມນີ້ ຍັງຈະເຮັດບາດກ້າວ ເພື່ອເລີ່ມຕົ້ນການກະກຽມ, ສຳລັບການຈັດຕັ້ງປະຕິບັດປະກອບດ້ວຍ:

- ແຈ້ງໃຫ້ຊຸມຊົນຊາບກ່ຽວກັບ ຄວາມຕ້ອງການ ທີ່ຈະຕ້ອງໄດ້ສ້າງຕັ້ງທີມງານຈັດຕັ້ງປະຕິບັດຂັ້ນບ້ານ, ຈຳນວນສະມາຊິກທີ່ຕ້ອງການສຳລັບທີມນີ້ ລວມທັງແຈ້ງພາລະບົດບາດ ແລະ ຄວາມຮັບຜິດຊອບສະມາຊິກໃນທີມ ຊຶ່ງເປັນສິ່ງທີ່ຄວນອະທິບາຍໃຫ້ຊຸມຊົນໄດ້ຮັບຮູ້. ຄວນແຈ້ງເຕືອນໃຫ້ຊຸມຊົນຮັບຊາບອີກວ່າທີມງານນີ້ ຈະເປັນຜູ້ຮັບຜິດຊອບສຳລັບການລະດົມການປະກອບສ່ວນທີ່ຊຸມຊົນໄດ້ຕົກ ລົງໄວ້ແລ້ວນັ້ນ.
- ຄວນແຈ້ງໃຫ້ຊຸມຊົນຊາບ ກ່ຽວກັບຕາຕະລາງຂອງການລົງມາສຳຫລວດ ແລະ ອອກແບບໂຄງການຕົວຈິງ.
- ແຈ້ງເຕືອນໃຫ້ຊຸມຊົນຊາບ ກ່ຽວກັບຄະນະກຳມະການຮັບຜິດຊອບກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ, ພ້ອມນີ້ ຊຸມຊົນຍັງສາມາດເຂົ້າເຖິງ ຄະນະກຳມະການດັ່ງກ່າວນີ້ໄດ້ໃນກໍລະນີ ທີ່ເຂົາເຈົ້າມີຄຳຮ້ອງຮຽນໃດນຶ່ງ ຊຶ່ງກ່ຽວຂ້ອງກັບໂຄງການຍ່ອຍຂອງ ທລຍ ຫລື ແຜນພັດທະນາກຸ່ມບ້ານພັດທະນາ.

# ເອກະສານຄັດຕິດ

# ຂໍ້ແນະນຳ ໃນການອະທິບາຍ ແຜ່ນໂຄສະນາ

## *ວິໄສທັດຂອງ ທລຍ*



ຖາມ: ຮູບນີ້ແມ່ນຮູບຫຍັງ ແລະ ທ່ານເຂົ້າໃຈແນວໃດ?

ຮູບທີ່ພວກເຮົາເຫັນຢູ່ນີ້ແມ່ນຕົ້ນ ໄມ້ຕົ້ນໜຶ່ງທີ່ງອກງາມ ແລະ ແຂງແຮງ ຊຶ່ງໝາຍເຖິງສັງຄົມຂອງພວກເຮົາ ຫຼື ປະເທດຊາດຂອງພວກເຮົາ.

ສາເຫດທີ່ມັນແຂງແຮງ ກໍ່ຍ້ອນມີຮາກມີເຫງົ້າຫລາຍຍຶດ ເກາະກັບພື້ນດິນຢ່າງໜຽວແໜ້ນ. ໝາຍເຖິງພໍ່ແມ່ປະ ຊາຊົນ ຫຼື ຊຸມຊົນຂອງພວກເຮົາ.

ສາເຫດທີ່ຮາກເຫງົ້າ ແລະ ຕົ້ນໄມ້ ຕົ້ນນີ້ມີຄວາມແຂງ ແຮງກໍ່ຍ້ອນການເອົາໃຈໃສ່ທົດນ້ຳ ແລະ ໃສ່ຝຸ່ນຢ່າງ ເປັນປົກກະຕິ.

ສະນັ້ນ ວິໄສທັດ ຫຼື ທິດທາງການພັດທະນາຂອງ ທລຍ ກໍ່ປຽບເໝືອນຕົ້ນໄມ້ຕົ້ນນີ້ ໂດຍສະເພາະ ເພື່ອໃຫ້ເກີດ ມີການພັດທະນາທີ່ຍືນຍົງນັ້ນ ທລຍ ຈະຕ້ອງເອົາໃຈໃສ່ ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ຈົນເຮັດໃຫ້ເຂົາເຈົ້າສາ ມາດດຳເນີນການພັດທະນາ ໂດຍເຂົາເຈົ້າເອງໄດ້. ໃນເມື່ອຊຸມຊົນມີຄວາມເຂັ້ມແຂງ ແລ້ວ ຫຼື ສາມາດຈັດຕັ້ງປະຕິບັດເອງໄດ້ແລ້ວກໍ່ຈະເຮັດໃຫ້ບ້ານຂອງເຂົາເຈົ້າໄດ້ມີການພັດທະນາໄປໃນທາງ ທີ່ດີຂຶ້ນ, ໃນເມື່ອບ້ານໄດ້ຮັບການພັດ ທະນາ ກໍ່ໝາຍຄວາມວ່າກຸ່ມບ້ານ, ເມືອງ, ແຂວງກໍ່ຄືປະເທດຊາດໄດ້ ການພັດທະນາເຊັ່ນ ດຽວກັນ..

# ຂໍ້ແນະນຳ ໃນການອະທິບາຍ 10 ລະບຽບການພັດທະນາຊຸມຊົນ





## *ລະບຽບທີ 1: ຄວາມສາມັກຄີ*

**ຖາມ: ຮູບນີ້ແມ່ນຮູບຫຍັງ ແລະ ທ່ານເຂົ້າໃຈແນວໃດ?**

ຄວາມສາມັກຄີ ແມ່ນລະບຽບອັນທຳອິດ ກ່ຽວກັບການພັດທະນາຊຸມຊົນ ຂອງກອງທຶນຫຼຸດຜ່ອນຄວາມທຸກຍາກໄລຍະທີ 2 .

ຄວາມສາມັກຄີ ແມ່ນການຮ່ວມໄມ້ຮ່ວມມືກັນ ລະຫວ່າງ ພໍ່ແມ່ປະຊາຊົນໝົດທຸກຄົນພາຍໃນບ້ານຂອງພວກເຮົາ ເຂົ້າໃນການອອກແຮງງານລວມໝູ່ ເພື່ອສ້າງສາບ້ານເມືອງຂອງພວກເຮົາ ໃຫ້ໄດ້ຮັບການພັດທະນາ ແລະຫລຸດພົ້ນອອກຈາກຄວາມທຸກຍາກ. ເວົ້າລວມແລ້ວ ເພື່ອເຮັດໃຫ້ບ້ານຂອງພວກເຮົາມີຄວາມ ກ້າວໜ້າສີວິໄລໃນອະນາຄົດ.

ສອງຮູບທີ່ທ່ານກຳລັງເຫັນຢູ່ນີ້ ຮູບດ້ານເທິງ ແລະ ຮູບດ້ານລຸ່ມ ທ່ານວ່າມັນມີຄວາມ ແຕກຕ່າງກັນບໍ? ຮູບດ້ານເທິງແມ່ນຮູບຫຍັງ? ແລະ ຮູບດ້ານລຸ່ມ ແມ່ນຫຍັງ?

ຮູບຂ້າງເທິງ ພວກເຮົາສັງເກດເຫັນວ່າ 3 ຄົນ ຕ່າງຝ່າຍຕ່າງດຶງຄວາຍໄປຄົນລະທິດທາງ, ໃຜກໍຢາກດຶງຄວາຍໄປທາງໂຕເອງ ໃນທີ່ສຸດຄວາຍໂຕນີ້ບໍ່ຮູ້ຈະໄປ ທາງໃດ ຈຶ່ງຈໍ້ງຢູ່ບ່ອນເກົ່າ. ອັນນີ້ມັນໝາຍຄວາມວ່າ ຖ້າບໍ່ມີຄວາມສາມັກຄີແລ້ວເຮັດຫຍັງກໍບໍ່ໄດ້ເຮັດຫຍັງກໍ່ບໍ່ ມີຜົນສຳເລັດ.

ກົງກັນຂ້າມຮູບຂ້າງລຸ່ມ ເຫັນວ່າທຸກຄົນ ພ້ອມໃຈກັນຈູງ ຫຼື ຍູ້ໄປໃນທິດ ທາງດຽວກັນ, ຄວາຍມັນກໍໄປຊື່ໆ ອັນນີ້ ມັນໝາຍຄວາມວ່າ ຖ້າຫາກພໍ່ແມ່ປະຊາຊົນ ແລະ ໝົດທຸກຄົນພາຍໃນບ້ານຂອງພວກເຮົາມີຄວາມສາມັກຄີກັນ ແລ້ວຈະເຮັດອັນໃດ ມັນກໍ່ໄດ້ຮັບຜົນສຳເລັດ ດັ່ງຄຳສຸພາສິດລາວເຮົາ ເວົ້າວ່າ: "ຄວາມສາມັກຄີເປັນບໍ່ເກີດແຫ່ງຜົນສຳເລັດ" ແລະ ອັນນີ້ ມັນແມ່ນລະບຽບ ການຈັດຕັ້ງປະຕິບັດວຽກງານ ທລຍ ກໍ່ຄືການພັດທະນາຊຸມຊົນ ເພື່ອແກ້ໄຂຄວາມທຸກຍາກ. ສະຫລຸບແລ້ວວ່າ: ການພັດທະຊົນຊົນພາຍໃຕ້ວຽກງານຂອງ ທລຍຕ້ອງເຮັດໃຫ້ຊຸມຊົນມີສ່ວນຮ່ວມ ແລະ ເຮັດໃຫ້ໝົດທຸກຄົນ ພາຍໃນບ້ານ ມີຄວາມສາມັກຄີ.

ສະເໜີໃຫ້ຜູ້ອຳນວຍຄວາມສະດວກ ຍົກຕົວຢ່າງ ທີ່ທ່ານພົບເຫັນຜ່ານມາ: 1 ຫາ 2 ຕົວຢ່າງ.

# ລະບຽບທີ 2: ຄວາມໂປ່ງໃສ



ຖາມ: ຮູບນີ້ແມ່ນຮູບຫຍັງ ແລະ ທ່ານເຂົ້າໃຈ ແນວໃດ?

ຄວາມໝາຍ ແລະ ຄວາມສຳຄັນຂອງ "ຄວາມໂປ່ງໃສ" ລະບຽບນີ້ ແມ່ນລະບຽບສຳຄັນທີ່ສຸດຂອງ ທລຍ ເພາະວ່າແມ່ນການຕັດສິນ ກ່ຽວກັບການສືບຕໍ່ໂຄງການ ຫຼື ບໍ່? ວິທີການເຮັດວຽກຂອງ ທລຍ ແມ່ນທຸກອັນຕ້ອງມີຄວາມໂປ່ງໃສ, ຂາວສະອາດ, ບໍ່ເຮັດແບບລັບໆລີ້ໆ, ເງິນຂອງໂຄງການຍ່ອຍກໍ່ຕ້ອງສະແດງໃຫ້ທຸກຄົນໄດ້ຮູ້, ປະຊາຊົນເອງເປັນຜູ້ບໍລິຫານ ຄຸ້ມຄອງ ແລະ ຕອ້ງເປີດເຜີຍໃຫ້ທຸກຄົນໄດ້ຮັບຮູ້, ທຸກຄົນຕ້ອງຮັບຮູ້ຂໍ້ ມູນ-ຂ່າວສານຕ່າງໆຢ່າງເທົ່າທຽມກັນ ແລະ ທຸກອັນຕ້ອງມີການກວດສອບໄດ້ເຊັ່ນດຽວກັບ ການຈັດຊື້-ຈັດຈ້າງໂຄງການຍ່ອຍຕ້ອງແມ່ນຊຸມຊົນ ຫຼື ທີມງານຂັ້ນກຸ່ມບ້ານເປັນຜູ້ຮັບຜິດຊອບດຳເນີນການທັງໝົດ.

ດັ່ງທ່ານເຫັນຢູ່ໃນຮູບນີ້ ຜູ້ຮັບຜິດຊອບເງິນໂຄງການຂອງກຸ່ມບ້ານ ໄດ້ລັກ ເອົາເງິນຂອງໂຄງການໄປນຳໃຊ້ເພື່ອຈຸດປະສົງສ່ວນຕົວ. ນອກຈາກນີ້ອາດຈະມີພຶດຕິກຳອື່ນໆອີກທີ່ຊີ້ສະແດງໃຫ້ເຫັນເຖິງຄວາມບໍ່ໂປ່ງໃສໃນການຈັດຕັ້ງປະຕິບັດວຽກງານ ທລຍ 2 ເຊັ່ນ: ຄັດເລືອກບໍລິສັດຜູ້ຮັບເໝົາມາຈັດຕັ້ງປະຕິບັດໂຄງການໂດຍບໍ່ຜ່ານຂະບວນການປະມູນ ຫຼື ບໍ່ຜ່ານຂັ້ນຕອນການຈັດຊື້-ຈັດຈ້າງທີ່ຖືກຕ້ອງເຊັ່ນ: ຄັດເລືອກເອົາບໍລິສັດທີ່ຕົນຮູ້ຈັກ ຫຼື ເປັນຍາດຕິພີ່ນ້ອງທັງໆທີ່ບໍ່ມີປະສົບການ, ບໍ່ມີເຄື່ອງອຸປະກອນຈັດຕັ້ງປະຕິບັດທີ່ເໝາະສົມ. ຮັບເງິນຈາກບໍລິສັດໃດໜຶ່ງ ເພື່ອໃຫ້ຄັດເລືອກເອົາບໍລິສັດດັ່ງກ່າວຊະນະການປະມູນ. ລັກເອົາວັດສະດຸກໍ່ສ້າງໂຄງການເຊັ່ນ: ແຮ່ຊາຍ, ໄມ້, ຊີເມັນ ແລະ ອື່ນໆໄປນຳໃຊ້ເພື່ອຄອບຄົວຂອງຕົນ.

ການກໍ່ສ້າງໂຄງການບໍ່ໄດ້ມາດຕະຖານ ຫຼື ບໍ່ມີຄຸນນະພາບ. ສະນັ້ນ, ຖ້າຫາກພໍ່ແມ່ປະຊາຊົນ ຫຼື ຊາວບ້ານ ເຮົາພົບເຫັນພຶດຕິກຳດັ່ງ ກ່າວທ່ານສາມາດໂທຫາເບີ 161 ໂດຍບໍ່ໄດ້ເສຍເງິນ ເພື່ອລາຍງານຫ້ອງການກອງທຶນຫຼຸດຜ່ອນຄວາມທຸກຍາກຢູ່ວຽງຈັນໄດ້ໂດຍກົງ ຫຼື ລາຍງານໃຫ້ຄະນະໄກ່ເກ່ຍຢູ່ພາຍໃນບ້ານຂອງທ່ານ. ຈາກນັ້ນ, ພວກເຮົາຈະມາກວດສອບ. ສະນັ້ນ, ຖ້າບໍ່ຢາກໃຫ້ໂຄງການຖືກໂຈະຢູ່ບ້ານ ແລະ ຢູ່ກຸ່ມບ້ານຂອງພວກເຮົາ, ພວກ ເຮົາຕ້ອງເປັນຫູ ເປັນຕານຳກັນເພື່ອກວດສອບພຶດຕິກຳດັ່ງກ່າວ. ຖ້າມີການຕິດຕາມ ແລະ ກວດສອບຢ່າງຄັ້ງແນ່ຕະຫຼອດຂອງການຈັດຕັ້ງປະຕິບັດໂຄງການແລ້ວ ມັນກໍ່ຈະເຮັດໃຫ້ພວກເຮົາຫລຸດ ພົ້ນອອກຈາກຄວາມທຸກຍາກ ເພາະວ່າເງິນຄຳທີ່ພັກ-ລັດນຳມາລົງທຶນພັດທະນາສ້າງສາບ້ານ ແລະ ກຸ່ມບ້ານຂອງພວກເຮົາຈຶ່ງບໍ່ຮົ່ວໄປ ແລະ ຖືກນຳມາພັດທະນາບ້ານ ແລະ ກຸ່ມບ້ານຂອງພວກເຮົາໄດ້ຫລາຍ ແລະ ໄວຂຶ້ນກວ່າເກົ່າ.

ສະເໜີໃຫ້ຜູ້ອຳນວຍຄວາມສະດວກ ຍົກຕົວຢ່າງ ທີ່ທ່ານພົບເຫັນຜ່ານ ມາ:.............

# *ລະບຽບທີ 3: ໃຫ້ສິດແກ່ແມ່ຍິງ*

ຖາມ: ຮູບນີ້ແມ່ນຮູບຫຍັງ ແລະ ທ່ານເຂົ້າໃຈແນວໃດ?



ຜູ້ຊາຍໄປຮ່ວມວຽກບ້ານການເມືອງແມ່ນບໍ່? ສ່ວນຫລາຍມີແຕ່ຜູ້ຊາຍເປັນຜູ້ຕັດສິນບັນຫາ ແມ່ນບໍ່? ທັງໝົດເຫຼົ່ານີ້ມັນໄດ້ບົ່ງບອກວ່າ ຜູ້ທີ່ຮູ້ຈັກກ່ຽວກັບບັນຫາຊີວິດ ຄອບຄົວດີທີ່ສຸດພັດບໍ່ໄດ້ເຂົ້າຮ່ວມການຕັດສິນບັນຫາ, ບໍ່ໄດ້ເຂົ້າຮ່ວມໃນການປຶກສາຫາລື ເພື່ອວາງແຜນພັດທະນາຄອບ ຄົວກໍ່ຄືເພື່ອພັດທະນາບ້ານຂອງເຂົາເຈົ້າ, ນັ້ນກໍ່ໝາຍຄວາມວ່າ ແຜນພັດທະນາລ້ວນແລ້ວແຕ່ ແມ່ນ ຜູ້ຊາຍເທົ່ານັ້ນເປັນຜູ້ສ້າງ ຂຶ້ນແຕ່ເຂົາເຈົ້າພັດເປັນຜູ້ທີ່ບໍ່ຮູ້ເລື່ອງດີເທົ່າກັບຜູ້ຍິງສະນັ້ນ ກໍ່ໝາຍຄວາມວ່າ ແຜນການທີ່ຖືກສ້າງຂຶ້ນມານັ້ນບໍ່ສອດຄ່ອງກັບຄວາມຕ້ອງການຂອງຜູ້ຢາກພັດທະນາແທ້ໆ ຫລື ຖ້າຈັດຕັ້ງປະຕິບັດໄປກໍ່ບໍ່ແມ່ນເພື່ອແກ້ໄຂບັນຫາຄອບຄົວ.

ໃນເມື່ອຜູ້ຍິງ ຊຶ່ງເປັນຜູ້ຮັບພາລະສ່ວນໃຫ່ຍຂອງຄອບຄົວໄດ້ຮັບການພັດທະນາ ເທົ່າກັບວ່າ ຄອບຄົວກໍ່ໄດ້ຮັບການພັດທະນາ, ຖ້າຫາກຄອບຄົວໄດ້ຮັບການພັດທະນາ ກໍ່ເທົ່າກັບວ່າບ້ານຂອງເຂົາເຈົ້າໄດ້ຮັບການພັດທະນາ ພ້ອມດຽວກັນສັງຄົມ ແລະ ປະເທດຊາດກໍ່ໄດ້ຮັບການພັດທະນາເຊັ່ນດຽວກັນ. ດັ່ງນັ້ນການມອບສິດໃຫ້ແກ່ຜູ້ຍິງ ດັ່ງໃນຮູບນີ້ ຈຶ່ງມີຄວາມຈຳເປັນ ແລະ ຈຶ່ງແມ່ນລະບຽບ ຫຼື ວິທີການຂອງ ທລຍ ເພື່ອສົ່ງເສີມໃຫ້ເຂົາເຈົ້າມີຄວາມເຂັ້ມແຂງມີຄວາມກ້າຫານໃນການອອກຄຳຄິດຄຳເຫັນຢູ່ໃນກອງປະຊຸມຕ່າງໆ ແລະ ຊຸກຍູ້ໃຫ້ເຂົາເຈົ້າກາຍເປັນຜູ້ນຳ ຫຼື ເປັນຜູ້ຮັບຜິດຊອບວຽກງານໂດຍກົງໃນການພັດທະນາ.

ເພື່ອສະແດງເຖິງບົດບາດຄວາມສຳຄັນຂອງຜູ້ຍິງ, ສະນັ້ນ ທຸກໆກອງປະ ຊຸມພາຍໃຕ້ວຽກງານ ທລຍ ທີ່ຈັດຂຶ້ນຢູ່ຂັ້ນບ້ານຖ້າຫາກຈຳນວນຜູ້ຍິງທີ່ມີອາຍຸແຕ່ 14 ປີຂຶ້ນໄປ ບໍ່ໄດ້ເຂົ້າຮ່ວມຫລາຍກວ່າ 40% ແມ່ນໃຫ້ໂຈະກອງປະຊຸມ ດັ່ງກ່າວນັ້ນໄວ້, ນອກຈາກນັ້ນ ໃນເວລາຈັດລຽງບຸລິມະສິດຄວາມຕ້ອງການຢູ່ ຂັ້ນບ້ານນັ້ນຢ່າງໜ້ອຍ 3 ໃນບຸລິມະສິດທຳອິດ ຕ້ອງຄັດເລືອກມາຈາກກຸ່ມແມ່ຍິງ.

ສະເໜີໃຫ້ຜູ້ອຳນວຍຄວາມສະດວກ ຍົກຕົວຢ່າງ ທີ່ທ່ານ ພົບເຫັນຜ່ານມາ:.....

# ລະບຽບທີ 4: ຄວາມສະເໝີພາບ

ຖາມ: ຮູບນີ້ ແມ່ນຮູບຫຍັງ ແລະ ທ່ານເຂົ້າໃຈ ແນວໃດ?



1. ຄວາມສະເໝີພາບແມ່ນຫຍັງ (ຮູບຂວາມື)? ຮູບດ້ານຂວາມື ຖ້າຫາກມີສຽງສ່ວນໜ້ອຍ ຫຼື ບໍ່ມີຄວາມສະເໝີພາບແມ່ນບໍ່ເອົາ: ສຳລັບກອງທຶນຫຼຸດຜ່ອນຄວາມທຸກຍາກ ແລ້ວຄວາມສະເໝີພາບ ແມ່ນການເປີດໂອ ກາດໃຫ້ທຸກຄົນ (ບໍ່ວ່າຈະເປັນຄົນທຸກ, ຄົນຮັ່ງ, ເຖົ້າແກ່ເດັກນ້ອຍ ຫຼື ແມ່ຍິງຜູ້ຊາຍ) ໄດ້ເວົ້າໄດ້ວ່າ ໄດ້ປຶກສາຫາລື ສະແດງຄຳຄິດຄຳເຫັນໃນສິ່ງທີ່ຕົນຕ້ອງການ ແລະ ຍົກໄມ້ຍົກມືໃນສິ່ງທີ່ເຫັນດີເຫັນພ້ອມ. ໃນການຕັດສິນບັນຫາໃດໜຶ່ງນັ້ນ, ພວກເຮົາຕ້ອງການຈຳນວນຜູ້ສະໜັບສະໜູນຫຼາຍກວ່າເຄິ່ງໜຶ່ງ ຈຶ່ງສາມາດເວົ້າໄດ້ວ່າການຕັດສິນບັນຫາແມ່ນມີຄວາມສະເໝີພາບ.

2. ອັນໃດທີ່ບໍ່ແມ່ນຄວາມສະເໝີພາບ (ຮູບຊ້າຍມື) ?
ບັນຫາທີ່ຕັດສິນໂດຍຄົນສ່ວນໜ້ອຍ ທັງໆທີ່ຄົນສ່ວນຫຼາຍພາຍໃນບ້ານບໍ່ເຫັນດີ. ບັນຫາທີ່ບໍ່ໄດ້ນຳມາປຶກສາຫາລືກັບໝົດທຸກຄົນພາຍໃນບ້ານ. ບັນຫາທີ່ບໍ່ເປີດໂອກາດໃຫ້ຜູ້ທຸກຍາກ ແລະ ຜູ້ດ້ອຍໂອກາດ ເຊັ່ນ: ແມ່ຍິງ, ຊົນເຜົ່າ, ແມ່ຮ້າງນາງໝ້າຍ, ຜູ້ເສັຽອົງຄະ....ໄດ້ເວົ້າໄດ້ວ່າ ແລະ ສະເໜີໃນສິ່ງທີ່ເຂົາເຈົ້າຕ້ອງການ.

3. ເປັນຫຍັງຈິ່ງຕ້ອງມີຄວາມສະເໝີພາບກັນໃນການຕັດສິນບັນຫາ? ເພື່ອໃຫ້ໝົດທຸກຄົນ ເຫັນໄດ້ໃນສິ່ງທີ່ຈະເກີດຂຶ້ນພາຍໃນບ້ານເຮົາ.

ເພື່ອຫຼີກລ້ຽງບໍ່ໃຫ້ເກີດການຜິດຖຽງກັນຕາມພາຍຫຼັງ ຍ້ອນອ້າງວ່າ "ຂ້ອຍບໍ່ຮູ້?, ຂ້ອຍບໍ່ໄດ້ເຂົ້າຮ່ວມ ແລະ ຂ້ອຍບໍ່ຮັບຜິດຊອບນຳ." ດັ່ງນີ້ເປັນຕົ້ນ.

ເພື່ອໃຫ້ທຸກຄົນໃນບ້ານ ໄດ້ຮັບຜົນປະໂຫຍດສູງສຸດຮ່ວມກັນ. ສະນັ້ນ, ການຕັດສິນບັນຫາຢ່າງສະເໝີພາບ ຄືການນຳສັນຕິສຸກ ແລະ ປະໂຫຍດສູງສຸດມາສູ່ໝົດທຸກຄົນພາຍໃນບ້ານເຮົາ.

ສະເໜີໃຫ້ຜູ້ອຳນວຍຄວາມສະດວກ ຍົກຕົວຢ່າງ ທີ່ທ່ານ ພົບເຫັນຜ່ານມາ:.....

# ລະບຽບທີ 5: ການວາງແຜນແຕ່ຂັ້ນບ້ານ

ຖາມ: ຮູບນີ້ແມ່ນຮູບຫຍັງ ແລະ ທ່ານເຂົ້າໃຈແນວໃດ?



ພວກເຮົາມາຕັ້ງຄຳຖາມນຳກັນວ່າ ເປັນຫຍັງກອງທຶນຫຼຸດຜ່ອນຄວາມທຸກຍາກ ຈິ່ງມີລະບຽບທີ່ວ່າ ການວາງແຜນຕ້ອງເລີ່ມຈາກຂັ້ນບ້ານຂຶ້ນມາ? ກ່ອນທີ່ຈະຕອບຄຳຖາມດັ່ງ ກ່າວນີ້, ກ່ອນອື່ນໝົດ ພວກເຮົາມາທຳຄວາມເຂົ້າໃຈນຳກັນວ່າ ການພັດທະນາຊົນນະບົດແມ່ນຫຍັງ?

ຕອບ: ການພັດທະນາຊົນນະບົດ ແມ່ນການພັດທະນາຢູ່ຂັ້ນກຸ່ມບ້ານ ແລະ ຂັ້ນບ້ານ. ການພັດທະນາແມ່ນການເຮັດໃຫ້ດີຂຶ້ນແມ່ນການພັດທະນາພື້ນຖານໂຄງລ່າງ ແລະ ການພັດທະນາຄົນໄປພ້ອມໆກັນ ຄຳວ່າຄົນກໍ່ແມ່ນພໍ່ແມ່ປະຊາຊົນເຮົາເອງ. ພໍ່ແມ່ປະຊາຊົນເຮົາເປັນຜູ້ຮູ້ດີກວ່າໝູ່ ກ່ຽວກັບສະພາບຕົວຈິງຂອງບ້ານພວກເຮົາວ່າ ອັນໃດແມ່ນທ່າແຮງຢູ່ພາຍໃນບ້ານ? ອັນໃດແມ່ນສາເຫດຂອງຄວາມທຸກຍາກ? ອັນໃດແມ່ນກາລະໂອກາດ? ອັນໃດແມ່ນຄວາມມຸ່ງໝາດປາດຖະໜາໃນການພັດທະນາບ້ານຂອງພວກເຮົາ?. ສະນັ້ນ, ຖ້າຫາກການວາງແຜນໄດ້ມີການລິເລີ່ມຈາກຂັ້ນ ບ້ານຂຶ້ນມາ, ພໍ່ແມ່ປະຊາຊົນ ພາຍໃນບ້ານໄດ້ມີສ່ວນຮ່ວມ ແລະ ເປັນຜູ້ກຳນົດທິດ ທາງການພັດທະນາໃນ ແຕ່ລະໄລຍະ ບ້ານຂອງເຂົາເຈົ້າເອງຈາກນັ້ນ ຈະເຮັດໃຫ້ແຜນການດັ່ງກ່າວແທດເໝາະກັບສະພາບຕົວເປັນຈິງ, ສອດຄ່ອງກັບຄວາມມຸ່ງໝາດປາຖະໜາ ແລະ ບຸລິມະສິດຄວາມຕ້ອງທີ່ແທ້ຈິງ ຂອງພໍ່ແມ່ປະຊາຊົນແຕ່ລະບ້ານ. ຈາກນັ້ນຈະ ເຮັດໃຫ້ພໍ່ແມ່ປະຊາຊົນເປັນເຈົ້າການໃນການຈັດຕັ້ງປະຕິບັດໂຄງການ, ເປັນເຈົ້າການໃນການປົກປັກຮັກສາໂຄງການ ແລະ ເຮັດໃຫ້ໂຄງການມີການນຳໃຊ້ໄດ້ຢ່າງຍາວນານ.

ຫລັງຈາກການວາງແຜນຂັ້ນບ້ານສຳເລັດແລ້ວ ຕົວແທນແຕ່ລະບ້ານ ພາຍໃນກຸ່ມບ້ານຂອງເຮົາ ຈະໄດ້ໄປ ຮ່ວມການວາງແຜນພັດທະນາກຸ່ມບ້ານ.

ຜ່ານຂັ້ນຕອນຕ່າງໆທີ່ໄດ້ກ່າວມານີ້ຈະໄດ້ແຜນການທີ່ມີຄວາມເປັນເອງກະພາບ ແລະ ມີຄວາມແທດເໝາະກັບຄວາມເປັນຈິງ ນອກຈາກນັ້ນ ຍັງເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ແລະ ອຳນາດການປົກຄອງຂັ້ນບ້ານ ແລະ ຂັ້ນກຸ່ມບ້ານມີຄວາມຮູ້ໃນການວາງແຜນ, ມີຄວາມຮູ້ໃນການກຳນົດທິດທາງການພັດທະນາບ້ານ, ກຳນົດທິດທາງການພັດທະນາກຸ່ມບ້ານຂອງເຂົາເຈົ້າໃນອານາຄົດ. ຈາກນັ້ນຈຶ່ງສາມາດເຮັດໃຫ້ບ້ານກາຍເປັນຫົວໜ່ວຍພັດທະນາຕາມເນື້ອໃນຈິດໃຈມະຕິກອງປະຊຸມໃຫຍ່ຄັ້ງທີ່ 9 ຂອງພັກ .

ການວາງແຜນໃນແຕ່ລະຂັ້ນ ແມ່ນຢາກໄດ້ໝາກຜົນລຸ່ມນີ້:

ການວາງແຜນຂັ້ນບ້ານ ແມ່ນເພື່ອຕອບຄຳຖາມວ່າ ບ້ານເຮົາທຸກຍາກຍ້ອນ ຫຍັງ?, ສາເຫດແມ່ນຫຍັງ? ຈະແກ້ໄຂສາຍເຫດຂອງບັນຫາຄືແນວໃດ? ບ້ານຂອງພວກເຮົາຈະສາມາດເຮັດອັນໃດໄດ້ກ່ອນ ໂດຍບໍ່ລໍຖ້າກາຍຊ່ວຍເຫລືອ ຈາກພາຍນອກ.ການວາງແຜນພັດທະນາກຸ່ມບ້ານຈະເປັນການເບິ່ງບັນຫາລວມຂອງ

ການພັດທະນາກຸ່ມບ້ານ ແມ່ນຈະໄດ້ຮູ້ວ່າບ້ານໃດມີຄວາມຈຳເປັນກ່ອນ, ໂຄງການອັນໃດຈະນຳຜົນປະໂຫຍດມາ ສູ່ຫລາຍບ້ານ, ຈະໄດ້ແຜນພັດທະນາກຸ່ມບ້ານໂດຍລວມ ສຳລັບ 5 ປີ.

ກອງປະຊຸມປະສານງານການວາງແຜນຂັ້ນເມືອງແມ່ນຈະໄດ້ແຜນພັດທະນາຂັ້ນກຸ່ມບ້ານຖືກບັນຈຸເຂົ້າໃນແຜນພັດທະນາຂອງເມືອງ, ຈະໄດ້ປຶກສາຫາລືນຳຂະແໜງການທີ່ກ່ຽວຂ້ອງ ແລະ ໂຄງການພັດທະນາອື່ນໆວ່າ ຈະຮ່ວມໄມ້ຮ່ວມມືກັນຄືແນວໃດ? ໃຜຈະຮັບຜິດ ຊອບອັນໃດ.

ສະເໜີໃຫ້ຜູ້ອຳນວຍຄວາມສະດວກ ຍົກຕົວຢ່າງ ທີ່ທ່ານ ພົບເຫັນຜ່ານມາ:....

## *ລະບຽບທີ 6: ໃຫ້ໂອກາດແກ່ຜູ້ທຸກຍາກ*

ຖາມ: ຮູບນີ້ແມ່ນຮູບຫຍັງ ແລະ ທ່ານເຂົ້າໃຈແນວໃດ?



ຄວາມໝາຍ ແລະ ຄວາມສຳຄັນຂອງການ "ໃຫ້ໂອກາດແກ່ຜູ້ທຸກຍາກ" ແມ່ນເພື່ອສົ່ງເສີມໃຫ້ຜູ້ທຸກຍາກໄດ້ມີໂອກາດສະເໜີຄວາມຄິດຂອງຕົນ ຕໍ່ການພັດທະນາຂອງບ້ານ. ສຳລັບໂຄງການ ທລຍ, ຜູ້ທຸກຍາກ, ຜູ້ດ້ອຍໂອກາດ ແລະ ຊົນເຜົ່າ ຖືໄດ້ວ່າ ແມ່ນກຸ່ມເປົ້າໝາຍຕົ້ນຕໍສຳລັບໃຫ້ການຊ່ວຍເຫຼືອ. ພວກເຂົາເປັນບຸກຄົນສຳຄັນກໍ່ເພາະວ່າ ເປັນຜູ້ທີ່ພົບກັບສະພາບຄວາມທຸກຍາກກ່ອນໝູ່ໝົດ ເຊິ່ງເປັນຄວາມທຸກຍາກທີ່ເກີດຈາກການບໍລິການດ້ານສັງຄົມ ແລະ ເສດຖະກິດບໍ່ເຂົ້າເຖິງພວກເຂົາ. ຕົວຢ່າງ: ພວກເຂົາຕ້ອງໄປຕັກນ້ຳໃນໄລຍະທາງທີ່ໄກຫຼາຍກິໂລແມັດ, ຫຼື ບ້ານບໍ່ມີສູນປິ່ນປົວສຸຂະພາບ, ຫຼື ບໍ່ມີຖະໜົນຫົນທາງເຂົ້າເຖິງບ້ານ ແລະ ອື່ນໆ.

ດັ່ງທີ່ທ່ານເຫັນຢູ່ໃນຮູບພາບນີ້, ບ້ານທີ່ຢູ່ເບື້ອງຊ້າຍມືຂອງທ່ານແມ່ນ ບ້ານຂອງຜູ້ທຸກຍາກເຮັດແນວໃດບ້ານຂອງເຂົາເຈົ້າ ຈຶ່ງຈະໄດ້ຮັບການພັດທະນາ ຫຼື ມີຄວາມສີວິໄລຄືກັນກັບບ້ານທີ່ຢູ່ເບື້ອງຂວາມືຂອງທ່ານ, ແຕ່ວ່າເຂົາເຈົ້າບໍ່ສາມາດຂ້າມຜ່ານໄປໄດ້ຍ້ອນມີອຸປະສັກກີດຂວາງ (ກ້ອນຫີນ). ຕ້ອງມາຕັ້ງຄຳຖາມວ່າເຮັດແນວໃດ ເຂົາເຈົ້າຈຶ່ງຈະຍົກຍ້າຍອຸປະສັກດັ່ງກ່າວນີ້ອອກດ້ວຍໂຕເຂົາເຈົ້າເອງ ໂດຍປາສະຈາກການຊ່ວຍເຫລືອຈາກພາກສ່ວນອື່ນ ເພາະວ່າ ຖ້າຫາກລໍຖ້າແຕ່ການຊ່ວຍເຫລືອຈາກພາກສ່ວນອື່ນ ບໍ່ຮູ້ວ່າເວລາໃດເຂົາເຈົ້າຈະມາຊ່ວຍ . ສະນັ້ນ, ພວກເຮົາຕ້ອງສ້າງໃຫ້ເຂົາເຈົ້າມີຄວາມເຂັ້ມແຂງຈົນເຮັດໃຫ້ເຂົາເຈົ້າສາມາດຍົກກ້ອນຫີນທີ່ກີດຂວາງຢູ່ນີ້ອອກໄດ້.

ສະເໜີໃຫ້ຜູ້ອຳນວຍຄວາມສະດວກ ຍົກຕົວຢ່າງ ທີ່ທ່ານພົບເຫັນຜ່ານມາ:....

# ລະບຽບທີ 7: ກຸ້ມຕົນເອງ

ຖາມ: ຮູບນີ້ ແມ່ນຮູບຫຍັງ ແລະ ທ່ານເຂົ້າໃຈ ແນວໃດ?



ການກຸ້ມຕົນເອງ, ເພິ່ງຕົນ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງແມ່ນຄວາມປາດຖະໜາດີຂອງພັກ-ລັດຖະບານເຮົາ. ດັ່ງນັ້ນ ທລຍ 2 ຈຶ່ງເອົາມາເປັນລະບຽບໜຶ່ງໃນການຈັດຕັ້ງປະຕິບັດວຽກງານ ທລຍ ໂດຍຈະເລີ່ມການຊັກຊວນ ໃຫ້ທຸກໆຄົນພາຍໃນບ້ານເຊັ່ນ: ຜູ້ທຸກຍາກ, ຜູ້ດ້ອຍໂອກາດອື່ນໆ (ຜູ້ເສຍອົງຄະ, ຜູ້ເຖົ້າຜູ້ແກ່, ແມ່ຮ້າງນາງ ໝ້າຍ, ອື່ນໆ) ແລະ ຊົນເຜົ່າໃຫ້ເຂົາເຈົ້າສາມາດເພິ່ງພາໂຕເອງໄດ້.

ໃນເບື້ອງຕົ້ນ ແມ່ນເລີ່ມຈາກເຊີນໃຫ້ຊາວບ້ານເຂົ້າຮ່ວມກ່ອນ, ຈາກນັ້ນຊຸກຍູ້ໃຫ້ເຂົາເຈົ້າຮູ້ຈັກປະກອບຄຳຄິດຄຳເຫັນໃສ່ໃນວຽກງານຕ່າງໆຂອງບ້ານ, ເຂົ້າຮ່ວມໃນການຕັດສິນບັນຫາຕ່າງໆຂອງບ້ານ ຫຼື ຖ້າທຽບໃສ່ລະດັບບ້ານກໍ່ເຊັ່ນດຽວກັນ ຖ້າຢາກໃຫ້ບ້ານມີການພັດທະນາບ້ານເຂົາເຈົ້າຕ້ອງເປັນເຈົ້າຕົນເອງ, ຮູ້ຈັກຊ່ວຍເຫລືອຕົນເອງ ຫລີກເວັ້ນການຄອງຄອຍຖ້າຮັບເອົາແຕ່ການ ຊ່ວຍ ເຫລືອຈາກຜູ້ອື່ນ ຫຼື ຈາກພັກ-ລັດຂັ້ນເທິງ. ຖ້າເປັນແນວນັ້ນພວກເຮົາຈະບໍ່ມີ ໂອກາດພັດທະນາຈັກເທື່ອ.

ສະນັ້ນ, ກອງທຶນຫລຸດຜ່ອນຄວາມທຸກຍາກ ໄລຍະທີ່ 2 ຈຶ່ງມີວິທີໃໝ່ດັ່ງທີ່ໄດ້ອະທິບາຍໃນສອງຮູບນີ້: ຮູບຢູ່ເບື້ອງຂວາມືຂອງທ່ານ ແມ່ນວິທີເກົ່າໃນການພັດທະນາ ກໍ່ຄືຜູ້ໃດຢາກກິນປາ ແມ່ນເອົາປາໃຫ້, ເທື່ອໜ້າຢາກກິນປາກໍ່ເອົາປາໃຫ້ຕື່ມ ແລະ ເຮັດແນວນີ້ຕະລອດໄປ. ໝາຍຄວາມວ່າບໍ່ສິ້ນສຸດຈັກເທື່ອ ແລະ ໃນທີ່ສຸດເຂົາເຈົ້າກໍ່ຕົກຢູ່ໃນສະພາບຄືເກົ່າກໍ່ຄືລໍຖ້າແຕ່ການຊ່ວຍເຫລືອ ຊຶ່ງເຫັນວ່າເປັນວິທີທີ່ບໍ່ຖືກຕ້ອງ.

ສຳລັບ ທລຍ 2 ນີ້ ໄດ້ນຳໃຊ້ວິທີການຄືກັບຮູບຢູ່ເບື້ອງຊ້າຍມືຂອງທ່ານ ກໍ່ຄືສອນວິທີຕຶກເບັດ, ໃຫ້ສອນວິທີ ວ່າເຮັດແນວໃດຈຶ່ງຈະໄດ້ປາ. ຈາກນັ້ນ, ຈະໄດ້ ກິນປາຫຼືບໍ່ແມ່ນເຮົາເອງ. ສະນັ້ນ, ຖ້າຢາກໄດ້ປາພວກເຮົາກໍ່ຕ້ອງມີຄວາມພະຍາຍາມ ແລະ ອົດທົນ ເພື່ອວ່າໃນຕໍ່ໜ້າພວກເຮົາຈະສາມາດກຸ້ມຕົນເອງ, ສາມາດເພິ່ງຕົນເອງ ແລະ ຢືນຢູ່ລຳແຄ່ງຂອງຕົນເອງໄດ້.

1. ຄວາມໝາຍ ແລະ ຄວາມສຳຄັນຂອງຄຳວ່າ "ກຸ້ມຕົນເອງ"

ກຸ້ມຕົນເອງ ແມ່ນການຄົ້ນຄິດຄວາມຝັນ ແລ້ວເຮັດໃຫ້ຄວາມຝັນດັ່ງກ່າວປະກົດຜົນເປັນຈິງ. ສະຫຼຸບແລ້ວ ມັນແມ່ນ "ການຄິດ ແລະ ລົງມືປະຕິບັດ". ກຸ້ມຕົນເອງ ແມ່ນປັດໃຈພື້ນຖານອັນສຳຄັນໜຶ່ງຂອງການແກ້ໄຂຄວາມທຸກຍາກ ເພາະວ່າການຊ່ວຍເຫຼືອຈາກຄົນອື່ນ ແມ່ນເກີດຂຶ້ນເປັນບາງຄັ້ງຄາວ ແລະບໍ່ເຂົ້າໃຈຢ່າງເລິກ

ເຊິ່ງຕໍ່ບັນຫາຂອງພວກເຮົາ. ສະນັ້ນ, ຮຽນຮູ້ກຸ້ມຕົນເອງ ຫຼື ຊ່ວຍຕົນເອງໄປເທື່ອລະກ້າວຕາມທ່າແຮງຂອງຕົນ ຈຶ່ງເປັນທາງເລືອກທີ່ດີທີ່ສຸດໃນການແກ້ໄຂບັນຫາຢ່າງທັນການ ແລະ ຖາວອນ.

2. ອັນໃດຈຶ່ງເອີ້ນວ່າ ບໍ່ກຸ້ມຕົນເອງ?

ມີແຕ່ຄິດຢາກໄດ້ແຕ່ບໍ່ລົງມືເຮັດ ຫຼື ລົງມືເຮັດໃນໄລຍະໜຶ່ງ ແລ້ວຍົກເລີກ. ບໍ່ມີຫົວຄິດປະດິດສ້າງຫາສິ່ງໃໝ່ໆທີ່ດີກວ່າ ໝາຍວ່າ ລົງມືເຮັດແຕ່ອັນ ເກົ່າເປັນເວລາຫຼາຍ 10-20 ປີ ໂດຍບໍ່ມີການປ່ຽນແປງ.

ບໍ່ມີຄວາມອົດທົນຕໍ່ການແກ້ໄຂຄວາມຫຍຸ້ງຍາກ. ຍົກຕົວຢ່າງ: ບ້ານກໍຢາກປຸກສ້າງໂຮງຮຽນ, ແຕ່ວ່າພາຍໃນບ້ານບໍ່ມີວັດສະດຸກໍ່ສ້າງພຽງພໍ. ສະນັ້ນ, ທຸກຄົນພາຍໃນບ້ານຈຶ່ງຍົກເລີກຄວາມຕັ້ງໃຈ. ອັນນີ້ຖືໄດ້ວ່າຂາດແນວຄິດກຸ້ມຕົນເອງ. ອັນທີ່ຈິງ ບ້ານກໍມີຫຼາຍຊ່ອງທາງແກ້ໄຂບັນຫາດັ່ງ ກ່າວເຊັ່ນ: ອາດຈະໄປເຈລະຈາກັບບ້ານໃກ້ຄຽງທີ່ສາມາດໜອງວັດຖຸໄດ້ ຫຼື ອາດຈະໄປປຶກສາຫາລືກັບຫ້ອງການເມືອງ ແລະ ອື່ນໆກໍ່ໄດ້.

ມີແນວຄິດເອື່ອຍອີງ ແລະ ລໍຖ້າການຊ່ວຍເຫຼືອຄົນອື່ນ.

## *ລະບຽບທີ 8: ຄວາມເປັນເຈົ້າຂອງໂຄງການ*

ຖາມ: ຮູບນີ້ແມ່ນຮູບຫຍັງ ແລະ ທ່ານເຂົ້າໃຈແນວໃດ?




ຄຳວ່າຄວາມເປັນເຈົ້າຂອງໂຄງການ ໝາຍເຖິງການພັດທະນາທີ່ຂັບເຄື່ອນ ໂດຍຊຸມຊົນເອງ ຫຼື ການຈັດຕັ້ງປະຕິບັດໂຄງການຕ້ອງແມ່ນພໍ່ແມ່ປະຊາ ຊົນເອງເປັນຜູ້ເຮັດ ຊຶ່ງການຈັດຕັ້ງປະຕິບັດໂຄງການນີ້ລວມມີການວາງແຜນເອງ, ການຕັດສິນໃຈເອງ, ການຄຸ້ມຄອງເງິນໂຄງການຍ່ອຍຂອງກຸ່ມບ້ານເອງ, ດຳເນີນຂັ້ນຕອນການຈັດຊື້-ຈັດຈ້າງເອງທັງໝົດ. ແຕ່ຖ້າຫາກມີກໍລະນີທີ່ພະນັກງານຂອງ ກອງທຶນຫລຸດຜ່ອນຄວາມທຸກຍາກ ມາເຮັດແທນຊຸມຊົນແລ້ວ ຄຳວ່າຄວາມເປັນເຈົ້າຂອງໂຄງການ ແມ່ນບໍ່ຖືກຕ້ອງຕໍ່ກັບລະບຽບຂອງ ທລຍ. ຄືດັ່ງສອງຮູບດ້ານເທິງແມ່ນພໍ່ແມ່ປະຊາຊົນກຳລັງພ້ອມກັນດຳເນີນການກໍ່ສ້າງໂຮງຮຽນ ແລະ ການກໍ່ສ້າງທໍ່ລອດທາງເຂົ້າບ້ານ, ສ່ວນຮູບຊ້າຍມືດ້ານລຸ່ມ ແມ່ນພໍ່ແມ່ປະຊາຊົນ ກຳລັງອອກແຮງງານຮ່ວມກັນໃນການປັດກວາດອານາໄມ ເພື່ອໃຫ້ໂຮງຮຽນສະອາດງາມຕາ ແລະ ຮູບຂວາມືດ້ານລຸ່ມແມ່ນຄະຮັບຜິດຊອບຄຸ້ມຄອງ ແລະ ປົກປັກຮັກສານ້ຳລິນຂອງບ້ານກຳລັງແປງທໍ່ນ້ຳຮົ່ວດ້ວຍໂຕເຂົາເຈົ້າເອງ.

ຈຸດປະສົງຂອງການສ້າງລະບຽບນີ້ຂຶ້ນມາ ແມ່ນເພື່ອໃຫ້ຊຸມຊົນ ຫຼື ພໍ່ແມ່ປະຊາຊົນພວກເຮົາມີຄວາມເຂັ້ມແຂງ ແລະ ໃນຕໍ່ໜ້າກໍຈະສາມາດຮັບຜິດຊອບການ ພັດທະນາຊຸມຊົນຂອງພວກເຮົາໄດ້ ແລະ ສາມາດແກ້ໄຂຄວາມທຸກຍາກ ໄດ້ດ້ວຍໂຕເອງ.

ສະເໜີໃຫ້ຜູ້ອຳນວຍຄວາມສະດວກ ຍົກຕົວຢ່າງ ທີ່ທ່ານພົບເຫັນຜ່ານມາ:....

# ລະບຽບທີ 9: ການລົງທຶນຕ້ອງຄຸ້ມຄ່າ

ຖາມ: ຮູບນີ້ແມ່ນຮູບຫຍັງ ແລະ ທ່ານ ເຂົ້າໃຈແນວໃດ?




ໃນຮູບດັ່ງກ່າວນີ້ ພວກເຮົາຈະສັງເກດເຫັນໄດ້ວ່າເປັນການລົງທຶນທີ່ແຕກຕ່າງກັນ. ສົມມຸດວ່າມີການສ້າງໂຮງຮຽນສອງຫລັງ. ຫລັງທຳອິດທີ່ທ່ານເຫັນຢູ່ເບື້ອງຊ້າຍມືຂອງທ່ານຈະເຫັນວ່ານຳໃຊ້ງົບປະມານສູງ, ຄຸນນະພາບກໍ່ຕ່ຳ, ຜູ້ໄດ້ຮັບຜົນປະໂຫຍດຈາກໂຄງການນີ້ (ນັກຮຽນ) ກໍ່ມີພຽງບ້ານດຽວໄດ້ຊົມໃຊ້ໂຮງຮຽນ. ຖ້າທຽບໃສ່ໂຮງຮຽນທີ່ຢູ່ໃນຮູບເບື້ອງຂວາມືຂອງທ່ານນຳໃຊ້ງົບປະມານເທົ່າກັນໄດ້ທັງໂຮງຮຽນ, ຄຸນນະພາບກໍ່ດີກວ່າສາມາດກໍ່ສ້າງໄດ້ຮອດສອງໂຄງການທັງກໍ່ສ້າງໂຮງຮຽນແຕ່ໄດ້ຂົວຂ້າມນ້ຳພ້ອມ ແລະ ຜູ້ໄດ້ຮັບຜົນປະໂຫຍດ ຫຼື ນັກຮຽນກໍ່ມາຈາກຫລາຍບ້ານ. ສະນັ້ນ, ລະບຽບການດັ່ງກ່າວນີ້ ຈຶ່ງເປັນລະບຽບໜຶ່ງທີ່ສຳຄັນຂອງ ທລຍ 2 ທັງນີ້ເພື່ອຮັບປະກັນໃຫ້ການລົງທຶນຂອງ ທລຍ ເປັນການລົງທຶນທີ່ກຸ້ມຄ່າ. ຖ້າຫາກເປັນຄືຮູບເບື້ອງຊ້າຍມື ເຫັນວ່າຜິດຕໍ່ລະບຽບການຈັດຕັ້ງປະຕິບັດວຽກງານ ທລຍ ຖ້າຫາກວ່າ ມີກໍລະນີເກີດຂຶ້ນຄືດັ່ງຮູບເບື້ອງຊາຍມື, ທ່ານສາມາດແຈ້ງໃຫ້ພວກເຮົາ (ທລຍ) ຊາບໂດຍຜ່ານກົນໄກສະແດງຄຳເຫັນ ແລະ ແກ້ໄຂບັນຫາຂອງ ທລຍ ທີ່ມີຢູ່ທຸກ ບ້ານ, ທຸກກຸ່ມບ້ານ.

2. ຖ້າຫາກວ່າ ບໍ່ເອົາໃຈໃສ່ໃນເລື່ອງການລົງທຶນທີ່ກຸ້ມຄ່າແລ້ວ ອັນໃດຈະເກີດຂຶ້ນ?
   ຜົນເສຍທີ່ຈະເກີດຂຶ້ນຕາມມາລວມມີ: ໂຄງການກໍ່ສ້າງບໍ່ສຳເລັດ ເພາະວ່າໃຊ້ຈ່າຍເງິນໂຄງການແບບຟູມເຟືອຍ. ມີພຽງກຸ່ມໃດກຸ່ມໜຶ່ງໄດ້ຮັບຜົນປະໂຫຍດຈາກໂຄງການ ແລະ ຮ້າຍແຮງໄປກວ່ານັ້ນມັນຈະສົ່ງຜົນໃຫ້ເກີດຄວາມແຕກແຍກທາງດ້ານຄວາມສາມັກຄີ ເພາະວ່າຄົນກຸ່ມໜຶ່ງໄດ້ຮັບຜົນປະໂຫຍດ, ແຕ່ອີກກຸ່ມໜຶ່ງຊໍ້າພັດບໍ່ໄດ້, ຄວາມທຸກຍາກ ຍັງມີຄືເກົ່າ, ໂຄງການເປ່ເພໄວ ເພາະວ່າຄຸນນະພາບບໍ່ມີ .

ສະເໜີໃຫ້ຜູ້ອຳນວຍຄວາມສະດວກ ຍົກຕົວຢ່າງ ທີ່ທ່ານ ພົບເຫັນຜ່ານມາ:.....

## ລະບຽບທີ 10: ການກຳນົດທິດທາງ ທີ່ຖືກຕ້ອງ

ຖາມ: ຮູບນີ້ແມ່ນຮູບຫຍັງ ແລະ ທ່ານເຂົ້າໃຈແນວໃດ?



ລະບຽບການຈັດຕັ້ງປະຕິບັດວຽກງານຂອງ ທລຍ ລະບຽບນີ້ຄວາມໝາຍວ່າ "ການພັດທະນາຊຸມຊົນຕາມ ຮູບແບບຂອງ ທລຍ ຕ້ອງມີການກຳນົດທິດທາງໃຫ້ຖືກຕ້ອງ ຊຶ່ງກ່ອນອື່ນໝົດຊຸມຊົນພວກເຮົາຕ້ອງຄຳນຶງເຖິງ ຄວາມອາດສາມາດຂອງຊາວບ້ານພວກເຮົາວ່າມີຄວາມສາມາດອັນໃດແດ່, ມີທ່າແຮງໃນດ້ານໃດແດ່ ສະນັ້ນ ພວກເຮົາຕ້ອງເຮັດອັນນັ້ນກ່ອນບໍ່ແມ່ນ ວ່າເຮັດໃນສິ່ງທີ່ ນອກເໜືອຈາກຄວາມສາມາດຂອງພວກເຮົາ. ສິ່ງສຳຄັນ ຕ້ອງກຳນົດໃຫ້ໄດ້ວ່າ ອັນໃດຄວນເຮັດກ່ອນ ຫຼື ອັນໃດຄວນນຳຫລັງ, ອັນໃດຄວນເຮັດປີນີ້, ອັນໃດຈະເຮັດໃນປີຕໍ່ໄປ ແລະ ປີຕໍ່ໄປໆຈະເຮັດຫຍັງ?

ຖ້າຫາກບໍ່ມີການກຳນົດທິດທາງການພັດທະນາທີ່ຖືກຕ້ອງແລ້ວ ມັນກໍ່ຈະເຮັດໃຫ້ພວກເຮົາບໍ່ມີຜົນສຳເລັດ ຫລື ຖ້າເຮັດສຳເລັດແລ້ວມັນກໍ່ບໍ່ມີຄວາມຍືນຍົງ ແລະ ນຳໃຊ້ບໍ່ໄດ້ດົນ. ດັ່ງໃນຮູບພາບນີ້ ພວກເຮົາຈະເຫັນວ່າ ເດັກນ້ອຍຕ້ອງການຢາກຂີ່ລົດຖີບໃຫ່ຍກ່ອນໂຕເອງ.

ພວກເຮົາເຫັນວ່າຮູບນີ້ເປັນແນວໃດ? ເຫັນວ່າເດັກນ້ອຍຈະຂີ່ລົດຖີບໃຫຍ່ ບາງທີອາດຈະຂີ່ໄດ້ແຕ່ໄປບໍ່ດົນກໍ່ລົ້ມ ແລະ ບໍ່ເຖິງເປົ້າໝາຍປາຍທາງ. ດ້ວຍເຫດຜົນດັ່ງກ່າວນີ້, ທລຍ ຈຶ່ງໄດ້ໃຫ້ຄວາມສຳຄັນທີ່ສຸດວ່າການພັດທະນາຊຸມ ຊົນຕ້ອງໄປຕາມທິດທາງທີ່ຖືກຕ້ອງ. ແນວທາງການພັດທະນາທີ່ຖືກຕ້ອງ ຄວນປະກອບດ້ວຍບັນດາເງື່ອນໄຂລຸ່ມນີ້: ມີວັດຖຸ, ເງິນ ແລະ ແຮງງານພຽງພໍສຳລັບເຮັດໃຫ້ແນວທາງການພັດທະນາທີ່ກຳນົດໄວ້ນັ້ນ ປະກົດຜົນເປັນຈິງ. ສາມາດປະສານສົມທົບກັບບ້ານໃກ້ຄຽງ ຫຼື ອຳນາດການປົກຄອງ ເພື່ອ ເຮັດໃຫ້ແນວທາງການພັດທະນາທີ່ກຳນົດໄວ້ນັ້ນປະກົດຜົນເປັນຈິງ. ແນວທາງການພັດທະນານີ້ ບໍ່ສ້າງຜົນເສຍໃຫ້ກັບວັດທະນາທຳ, ສັງ ຄົມ ແລະ ສິ່ງແວດລ້ອມ. ສະເໜີໃຫ້ຜູ້ອຳນວຍຄວາມສະດວກ ຍົກຕົວຢ່າງ ທີ່ທ່ານພົບເຫັນຜ່ານມາ:.....

# ຂໍ້ແນະນຳໃນການນຳໃຊ້ແຜ່ນໂຄສານາ ຂອງ ທລຍ

1. ໃຫ້ຕິດແຜ່ນຕິດແຜ່ນໂຄສະນາໄວ້ພ້ອມດຽວກັນ (ຊ້ອນກັນ) ຈາກນັ້ນເປີດໄປເທື່ອລະໃບ ເພື່ອອະທິບາຍ (ຫ້າມເອົາຂຶ້ນມາຕິດລຽນກັນຢູ່ຕໍ່ໜ້າຫ້ອງປະຊຸມ ເພາະຈະເຮັດໃຫ້ຜູ້ເຂົ້າຮ່ວມບໍ່ຕັ້ງໃຈຟັງ.

2. ພາຍຫຼັງອະທິບາຍໝົດທຸກແຜ່ນແລ້ວ ເວລາພັກພ່ອນຈຶ່ງໃຫ້ເອົາໄປຕິດໄວ້ຢູ່ດ້ານຫລັງຂອງຫ້ອງປະຊຸມ. ເພາະວ່າຖ້າເອົາໄປຕິດໄວ້ໃນເວລາກຳລັງອະບາຍຢູ່ ຈະເຮັດໃຫ້ຜູ້ເຂົ້າຮ່ວມບໍ່ສົນໃຈແຜນໂຄສະນາອື່ນໆ ທີ່ເຮົາກຳລັງອະທິບາຍຢູ່.

3. ໃນກໍລະນີຫ້ອງປະຊຸມກ້ວາງ ຊຶ່ງຄາດວ່າ ເຂົາເຈົ້າບໍ່ສາມາດເບິ່ງເຫັນໄດ້ ຢ່າງຈະແຈ້ງ. ສະນັ້ນຜູ້ອຳນວຍຄວາມສະດວກ ຄວນຈັບແຜ່ນໂຄສະນາດັ່ງກ່າວ ຢ່າງໄປອະທິບາຍໃຫ້ພາກສ່ວນທີ່ນັ່ງຢູ່ໄກ ຫລື ຜູ້ທີ່ນັ່ງຢູ່ດ້ານຫລັງຂອງຫ້ອງປະຊຸມ.

4. ໃນເວລາພັກພ່ອນ ຖ້າມີພໍ່ແມ່ປະຊາຊົນສົນໃຈແຜ່ນໂຄສະນາຕື່ມອີກ, ດັ່ງນັ້ນ ຜູ້ອຳນວຍຄວາມສະດວກຕ້ອງໄດ້ອະທິບາຍເພີ່ມເຕີມ.

5. ພາຍຫຼັງສຳເລັດກອງປະຊຸມແລ້ວ ແມ່ນໃຫ້ເກັບມ້ຽນແຜ່ນໂຄສະນາໄວ້ຢ່າງດີ ເພື່ອຈະນຳໃຊ້ໃນໂອກາດຕໍ່ໄປ.

ກອງທຶນຫຼຸດຜ່ອນຄວາມທຸກຍາກ II                    ວັນທີ: _____/_____/_______

# ແບບຟອມສັງລວມທິດທາງການພັດທະນາບ້ານ ໃນໄລຍະ 5 ປີ (2011-2015)

| ທີ່ຕັ້ງ | | ລະຫັດຂອງທລຍ | ລະຫັດຂອງກົມສະຖິຕິ |
|---|---|---|---|
| ແຂວງ | | | |
| ເມືອງ | | | |
| ກຸ່ມບ້ານ | | | |
| ບ້ານ | | | |

ຈຳນວນຂອງຜູ້ທີ່ເຂົ້າຮ່ວມ: ____________________ຄົນ, ຍິງ:__________________ຄົນ

ຈຳນວນຂອງຜູ້ທີ່ເຂົ້າຮ່ວມທີ່ເປັນຄົນທຸກ:___________ຄົນ, ຍິງ:__________________ຄົນ

ຜູ້ອຳນວຍຄວາມສະດວກ: 1.______________________________

2. ______________________________

3. ______________________________

4. ______________________________

## ທິດທາງການພັດທະນາບ້ານ

*ຄຳແນະນຳ:*

*ພະນັກງານ ທລຍ ແລະ/ຫຼື ຜູ້ປະສານງານກຸ່ມບ້ານ ຈະຕ້ອງຕື່ມແບບຟອມນີ້ຫຼັງຈາກກອງປະຊຸມກຳນົດທິດທາງການພັດທະນາບ້ານສຳເລັດ.*

______________________________________________________

**ກ. ທິດທາງການພັດທະນາ**– ທ່ານຫວັງວ່າ ຢາກຈະໃຫ້ບ້ານຂອງທ່ານເປັນແນວໃດ ໃນຫ້າປີຕໍ່ໜ້າ?

| ທິດທາງການພັດທະນາຂອງຜູ້ຍິງ | | ທິດທາງການພັດທະນາຂອງຜູ້ຊາຍ | |
|---|---|---|---|
| 1 | | 1 | |
| 2 | | 2 | |
| 3 | | 3 | |
| 4 | | 4 | |
| 5 | | 5 | |
| 6 | | 6 | |
| 7 | | 7 | |
| 8 | | 8 | |
| 9 | | 9 | |
| 10 | | 10 | |

ຂ. ແມ່ນຫຍັງແດ່ທີ່ທ່ານຈຳເປັນຕ້ອງມີເພື່ອເຮັດໃຫ້ບັນລຸທິດທາງການພັດທະນາດັ່ງກ່າວ?
ລຽງລຳດັບບູລິມາສິດ

| ບູລິມາສິດທີ່ຕ້ອງການໂດຍຜູ້ຍິງ | | ບູລິມາສິດທີ່ຕ້ອງການໂດຍຜູ້ຊາຍ | |
|---|---|---|---|
| 1 | | 1 | |
| 2 | | 2 | |
| 3 | | 3 | |
| 4 | | 4 | |
| 5 | | 5 | |
| 6 | | 6 | |
| 7 | | 7 | |
| 8 | | 8 | |
| 9 | | 9 | |
| 10 | | 10 | |

ລຳດັບບູລິມະສິດ ທີ່ຕ້ອງການພັດທະນາບ້ານໃນ 5 ປີຕໍ່ໜ້າ

| ລາຍການບູລິມະສິດທີ່ຕ້ອງການພັດທະນາບ້ານ | | ຂະໜາດ/ມາດຕາສ່ວນ | | | | ສະເໜີໂດຍ | | |
|---|---|---|---|---|---|---|---|---|
| | | ຫໜ | ຈນ | ຫໜ | ຈນ | ກຸ່ມ ຊາຍ | ກຸ່ມ ຍິງ | ກຸ່ມຊົນເຜົ່າ / ອື່ນໆ |
| 1 | ໂຮງຮຽນ | ຫ້ອງ | 3 | ແມັດ | 4X8 | | | |
| 2 | ທາງ | ເສັ້ນ | 2 | ກມ | 8 | | | |
| 3 | ນ້ຳລິນ | ກມ | 3 | ກ໊ອກ | 6 | | | |
| 4 | ນ້ຳບາດານ | ບໍ່ | 3 | | | | | |
| 5 | ຝຶກອົບຮົມ ວິທີປູກເຫັດ | ຄົນ | 100 | | | | | |
| 6 | | | | | | | | |
| 7 | | | | | | | | |
| 8 | | | | | | | | |
| 9 | | | | | | | | |
| 10 | | | | | | | | |
| 11 | | | | | | | | |
| 12 | | | | | | | | |
| 13 | | | | | | | | |
| 14 | | | | | | | | |
| 15 | | | | | | | | |

## ຂໍ້ມູນພື້ນຖານຂອງບ້ານ:

**ຂໍ້ມູນທົ່ວໄປ**

ປະຊາກອນທັງໝົດ: ____________ # ຍິງ: ________________ຈຳນວນຄົນທຸກທັງໝົດ: ___________ຍິງ:______ # ເດັກນ້ອຍ (<15): ___________

# ຄົວເຮືອນ: ____________ # ຄົວເຮືອນທຸກຍາກ: _____________

ໃຫ້ຕື່ມຈຳນວນຄອບຄົວທຸກຍາກພຽງແຕ່ໃນກໍລະນີທີ່ອຳນາດການປົກຄອງບ້ານໃຊ້ປື້ມຂອງກົມສະຖິຕິແລະໄດ້ຮັບການຝຶກອົບຮົມວິທີ່ການຄັດເລືອກຄອບຄົວທຸກຍາກອີງໃສ່ມາດຕາເກນຂອງກົມສະຖິຕິເທົ່ານັ້ນ. ຖ້າບໍ່ດັ່ງນັ້ນແມ່ນໃຫ້ຂຽນຄຳວ່າ "ບໍ່ຮູ້"

**ກຸ່ມຊົນເຜົ່າໃນບ້ານ**

| | ລາຍຊື່ຂອງກຸ່ມຊົນເຜົ່າ | ລະຫັດກຸ່ມຊົນເຜົ່າ | ຈຳນວນຄົນ | ຈຳນວນແມ່ຍິງ |
|---|---|---|---|---|
| 1 | | | | |
| 2 | | | | |
| 3 | | | | |
| 4 | | | | |
| 5 | | | | |
| 6 | | | | |

ໃຊ້ລາຍຊື່ກຸ່ມຊົນເຜົ່າທີ່ເປັນທາງການ ກັບ ລະຫັດກົມສະຖິຕິ, ກະຊວງແຜນການ ແລະ ການລົງທຶນ

ລາຍເຊັນແລະປະທັບການາຍບ້ານ ຜູ້ບັນທຶກ

KDP Form

ກອງທຶນຫຼຸດຜ່ອນຄວາມທຸກຍາກ II

ວັນທີ: _____/_____/______

**ແບບຟອມສັງລວມແຜນພັດທະນາກຸ່ມບ້ານໃນໄລຍະ 5 ປີ (ປີ_________ເຖິງ__________)**

| ທີ່ຕັ້ງ | | ລະຫັດຂອງ ທລຍ | ລະຫັດຂອງ ກົມສະຖິຕິ |
|---|---|---|---|
| ແຂວງ | | | |
| ເມືອງ | | | |

| ທີ່ຕັ້ງ | | ລະຫັດຂອງ ທລຍ | ລະຫັດຂອງກົມ ສະຖິຕິ |
|---|---|---|---|
| ກຸ່ມບ້ານ | | | |

ຈຳນວນຂອງຜູ້ທີ່ເຂົ້າຮ່ວມ: ____________________ຄົນ ຍິງ:_________________ຄົນ

I. ເປົ້າໝາຍຍຸດທະສາດເພື່ອຫຼຸດຜ່ອນຄວາມທຸກຍາກ (2011-2015)

| |
|---|
| 1. |
| 2. |
| 3. |
| 4. |
| 5. |
| 6. |
| 7. |
| 8. |
| 9. |
| 10. |

## II. ບຸລິມະສິດຄວາມຕ້ອງການ ໃນ**ການລົງທຶນ (ເພື່ອບັນລຸເປົ້າໝາຍຍຸດທະສາດ)** <u>**– ພື້ນຖານໂຄງລ່າງ, ການຍົກລະດັບຊີວິດການເປັນຢູ່, ການຝຶກອົບຮົມ ແລະອື່ນໆ**</u>

| ລຳດັບບຸລິສິດຄວາມຕ້ອງການ | ທີ່ຕັ້ງ (ຊື່ບ້ານແລະກຸ່ມບ້ານ) | ສະຖານະພາບຂອງບ້ານ* | | | ຂະໜາດ / ມາດຕາສ່ວນ | | | | ກຸ່ມສະເໜີໂດຍ: | | | ຄາດຄະເນ ຜູ້ທີ່ຈະໄດ້ຮັບຜົນປະໂຫຍດ | | ຄາດຄະເນ ງົບປະມານທີ່ຕ້ອງການລົງທຶນ |
|---|---|---|---|---|---|---|---|---|---|---|---|---|---|---|
| | | ດີ | ປານກາງ | ບໍ່ດີ | ຫໜ | ຈນ | ຫໜ | ຈນ | ກຸ່ມຊາຍ | ກຸ່ມຍິງ | ກຸ່ມຊົນເຜົ່າ | ຊາຍ | ຍິງ | |
| 1. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| 2. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| 3. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| 4. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| 5. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| 6. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| 7. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| 8. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| 9. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| 10. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| 11. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| 12. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| 13. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| 14. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| 15. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |

| | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|
| 16. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| 17. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| 19. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| 20. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |

* ໝາຍເຫດ: ໃຫ້ປະຊາຊົນສົມທຽບກັນເອງລະຫວ່າງບ້ານຕໍ່ບ້ານ

## III. ແຜນການຂອງ ທລຍ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາກຸ່ມບ້ານ ໃນໄລຍະ 5 ປີ

| | ໂຄງການຍ່ອຍ | ທີ່ຕັ້ງ (ຊື່ບ້ານແລະກຸ່ມບ້ານ) | ສະຖານະພາບຂອງບ້ານ** | | | ຂະໜາດ / ມາດຕາສ່ວນ | | | | ກຸ່ມສະເໜີໂດຍ: | | | ຄາດຄະເນຜູ້ທີ່ຈະໄດ້ຮັບຜົນປະໂຫຍດ | | ງົບປະມານ |
|---|---|---|---|---|---|---|---|---|---|---|---|---|---|---|---|
| | | | ທຸກ | ປານກາງ | ບໍ່ທຸກ | ຈນ | ຫໜ | ຂໜ | ຫໜ | ກຸ່ມຊາຍ | ກຸ່ມຍິງ | ກຸ່ມຊົນເຜົ່າ | ຊາຍ | ຍິງ | |
| ປີທີ 1 | 1. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| | 2. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| | 3. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| ປີທີ 2 | 1. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| | 2. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| | 3. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| ປີທີ 3 | 1. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |

| | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|
| | 2. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| | 3. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| ປີທີ 4 | 1. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| | 2. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| | 3. | | ☐ | ☐ | ☐ | | | | | ☐ | ☐ | ☐ | | | |
| | | | ☐ | ☐ | ☐ | | | | | ☐ | ☐ | ☐ | ງົບປະມານທັງໝົດ | | |

** ໝາຍເຫດ: ໃຫ້ປະຊາຊົນສົມທຽບກັນເອງລະຫວ່າງບ້ານຕໍ່ບ້ານ

<u>ເຊັນຄະນະກຸ່ມບ້ານພັດທະນາ</u>

<u>ຜູ້ບັນທຶກ</u>

# ແບບຟອມສັງລວມ ການວິເຄາະບັນຫາຂອງບ້ານໆ___________________

| ບັນຫາຄວາມທຸກຍາກ ຂອງບ້ານ | ສາເຫດ | ຜົນກະທົບ | ວິທີແກ້ໄຂ | ພາກສ່ວນຮັບຜິດຊອບ ຊາວບ້ານ/ພາຍນອກ |
|---|---|---|---|---|
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |
| | | | | |

ວັນທີ: _____/_____/_______

ເຊັນ ແລະ ຈ້ຳກາ ນາຍບ້ານ

ຜູ້ບັນທຶກ

ກອງທຶນຫລຸດຜ່ອນຄວາມທຸກຍາກຍາກ 2

## ແບບຟອມຈັດລະດັບຄວາມທຸກຍາກ ຂອງບ້ານຕ່າງໆ ພາຍໃນກຸ່ມບ້ານ___________

| ລດ | ຊື່ບ້ານ | ມາດຖານຄວາມທຸກຍາກ (ອີງຕາມດຳລັດ ເລກທີ່ 285/ນຍ) | | | | | | | |
|---|---|---|---|---|---|---|---|---|---|
| | | ມີເຂົ້າກຸ້ມກິນ (ບໍ່ມີ = 1, ມີ = 0) | ໂຮງຮຽນ (ບໍ່ມີ = 1, ມີ = 0) | ສຸກສາລາ (ບໍ່ມີ = 1, ມີ = 0) | ນ້ຳສະອາດ (ບໍ່ມີ = 1, ມີ = 0) | ຫົນທາງທ່ຽວໄດ້ 2 ລະດູ(ບໍ່ມີ = 1, ມີ = 0) | ໄຟຟ້າ (ບໍ່ມີ = 1, ມີ = 0) | ລວມຄະແນນ | ລະດັບຄວາມທຸກຍາກ |
| 1. | | | | | | | | | |
| 2 | | | | | | | | | |
| 3. | | | | | | | | | |
| 4. | | | | | | | | | |
| 5. | | | | | | | | | |
| 6 | | | | | | | | | |
| 7 | | | | | | | | | |
| 8 | | | | | | | | | |
| 9 | | | | | | | | | |
| | | | | | | | | | |
| | | | | | | | | | |
| | | | | | | | | | |

ວັນທີ: _____/_____/_______

ຄະນະຮັບຜິດຊອບ

ກອງທຶນຫລຸດຜ່ອນຄວາມທຸກຍາກຍາກ 2

# ແບບຟອມ ລົງທະບຽນຜູ້ເຂົ້າຮ່ວມ

ກອງປະຊຸມ______________________________

| ລດ | ລາຍຊື່ຜູ້ເຂົ້າຮ່ວມ | ໜ້າທີ່ຮັບຜິດຊອບພາຍໃນບ້ານ | ໝາຍເຫດ |
|---|---|---|---|
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |

ວັນທີ: _____/_____/_______

ເຊັນ ແລະ ຈ້ຳການາຍບ້ານ

## ລາຄາຫົວໜ່ວຍ ໂດຍສະເລັ່ຽ ສຳລັບໂຄງການຍ່ອຍພື້ນຖານໂຄງລ່າງ ພາຍໃຕ້ວຽກງານ ທລຍ

## ປະຈຳປີ 2011-2012

| ລ/ດ | ລາຍການກໍ່ສ້າງ | ຫົວໜ່ວຍ | ລາຄາ/ຫົວໜ່ວຍ |
|---|---|---|---|
| 1 | ໂຮງຮຽນປະຖົມ 6ມx7ມ | ຫ້ອງ | 75,000,000 |
| 2 | ສຸກສາລາ | 2 ຫຼັງ | 320,000,000 |
| 3 | ນ້ຳລິນ | ກລມ | 35,000,000 |
| 4 | ນ້ຳສ້າງ | ບໍ່ | 10,000,000 |
| 5 | ນ້ຳບາດານ | ບໍ່ | 18,000,000 |
| 6 | ໄຟຟ້າແສງຕາເວັນ | ຊຸດ | 50,000,000 |
| 7 | ໄຟຟ້າຕາຂ່າຍແຮງກາງ+ໝໍ້ແປງ | ກລມ | 95,000,000 |
| 8 | ໄຟຟ້າຕາຂ່າຍແຮງຕ່ຳ+ໝໍ້ແປງ | ກລມ | 75,000,000 |
| 9 | ທາງ | ກລມ | 35,000,000 |
| 10 | ຂົວຈົມ | ມ | 6,500,000 |
| 11 | ຂົວນ້ຳລົ້ນ | ມ | 8,500,000 |
| 12 | ຂົວໄມ້ຂາງເຫຼັກ | ມ | 8,000,000 |
| 13 | ຂົວອູ່ | ມ | 8,000,000 |

ແຂວງເຊກອງ
ເມືອງດາກຈຶງ
ຫ້ອງການກໍ່ສ້າງຮາກຖານ ແລະ ພັດທະນາຊົນນະບົດຮອບດ້ານ

ທລຍ 2

# ແຜນການພັດທະນາບ້ານກຸ່ມບ້ານ

## ໃນໄລຍະ 5 ປີ

## ( 2011 - 2016)

# ກຸ່ມບ້ານ ດາກມ່ອນ

ສະໜັບສະໜູນໂດຍ:

| | | | |
|---|---|---|---|
| ທະນາຄານໂລກ | ປະເທດສະວິດເຊີແລນ | ປະເທດອົດສະຕາລີ | ປະເທດຍີ່ປຸ່ນ |

# ສາລະບານ

1. ທ່າແຮງ, ບັນຫາ, ໂອກາດ ແລະ ຄວາມມຸ້ງໝາດປາຖະໜາຂອງບ້ານ
2. ແຜນວາດຂອງກຸ່ມບ້ານ
3. ແບບຟອມ ສະແດງລະດັບຄວາມທຸກຍາກຂອງແຕ່ລະບ້ານ
4. ແຜນວາດໃນຝັນຂອງກຸ່ມບ້ານ
5. ແບບຟອມສັງລວມ ແຜນພັດທະນາກຸ່ມບ້ານໃນໄລຍະ 5 ປີ. ລວມທັງ ແຜນການຂອງ ທລຍ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາກຸ່ມບ້ານ

## ເອກະສານຊ້ອນທ້າຍ

- ແຈ້ງການຂອງເມືອງ ກ່ຽວກັບການເປີດກອງປະຊຸມວາງແຜນພັດທະນາກຸ່ມບ້ານ
- ຂໍ້ຕົກລົງ ການຄັດເລືອກຕົວແທນກຸ່ມບ້ານ ໄປຮ່ວມກອງປະຊຸມປະສານງານ ການວາງແຜນ ພັດທະນາກຸ່ມບ້ານ
- ແບບຟອມ ລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມ ວາງແຜນພັດທະນາບ້ານກຸ່ມ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງ:____________________
ເມືອງ:____________________
ກຸ່ມບ້ານ:__________________

# ຂໍ້ຕົກລົງການຄັດເລືອກຕົວແທນກຸ່ມບ້ານ

- ອີງໃສ່ ກອງປະຊຸມວາງກຳນົດທິດທາງການພັດທະນາບ້ານ ຊຶ່ງຈັດຂຶ້ນໃນຄັ້ງວັນທີ່ ________________

ພໍ່ແມ່ປະຊາຊົນ ບ້ານ_____________ກຸ່ມບ້ານ___________________ເມືອງ_____________ ແຂວງ___________________ ໄດ້ຕົກລົງເຫັນດີຄັດເລືອກເອົາ **ຕົວແທນບ້ານ** ຈຳນວນ 6 ທ່ານ (ຍິງ 3 ທ່ານ ແລະ ຊາຍ 3 ທ່ານ) ລາຍລະອຽດມີ ດັ່ງຕໍ່ໄປນີ້:

| ລດ | ຊື່ ແລະ ນາມສະກຸນ | ອາຍຸ | ຊົນເຜົ່າ | ໜ້າທີ່ຮັບຜິດຊອບ ພາຍໃນບ້ານ |
|---|---|---|---|---|
| 1 | | | | |
| 2 | | | | |
| 3 | | | | |
| 4 | | | | |
| 5 | | | | |
| 6 | | | | |

ຈຸດປະສົງ ເພື່ອໃຫ້ພວກກ່ຽວເຂົ້າຮ່ວມກອງປະຊຸມ ຜ່ານແຜນພັດທະນາກຸ່ມບ້ານຂອງພວກເຮົາຢູ່ຂັ້ນ ເມືອງ, ຊຶ່ງຈະຈັດທີ່ __________ ໃນລະຫວ່າງວັນທີ່ ______/_____/________

**ວັນທີ່_____/___/____**
**ຢັ້ງຢືນໂດຍນາຍບ້ານ (ເຊັນ ແລະ ປະທັບກາ)**

ແຂວງເຊກອງ
ເມືອງດາກຈຶງ
ຫ້ອງການກໍ່ສ້າງຮາກຖານ ແລະ ພັດທະນາຊົນນະບົດຮອບດ້ານ ທລຍ 2
<u>ກຸ່ມບ້ານດາກມ່ວນ</u>

# ປື້ມສັງລວມທິດທາງພັດທະນາບ້ານ

## ໃນໄລຍະ 5 ປີ

## ( 2011 - 2016)

# <u>ບ້ານ ດາກຕະອອກນ້ອຍ</u>

ສະໜັບສະໜູນໂດຍ:

ທະນາຄານໂລກ ປະເທດສະວິດເຊີແລນ ປະເທດອົດສະຕາລີ ປະເທດຍີ່ປຸ່ນ

## ສາລະບານ

1. ແຜນວາດຊັບພະຍາກອນຂອງບ້ານ (ບ້ານຂອງພວກເຮົາ ໃນປະຈຸບັນ)
2. ຕາຕະລາງ ວິເຄາະບັນຫາຂອງບ້ານ (ບ້ານຂອງພວກເຮົາ ໃນອະນາຄົດ) ທັງຈາກກຸ່ມຍິງ, ກຸ່ມຊາຍ ແລະ ຊົນເຜົ່າ
3. ແຜນວາດໃນຝັນຂອງບ້ານ
4. ແບບຟອມສັງລວມທິດທາງການພັດທະນາບ້ານ
5. ຕາຕະລາງ ສະແດງລະດັບຄວາມທຸກຍາກຂອງບ້ານອື່ນໆ ພາຍໃນກຸ່ມບ້ານ (ເອົາໃຈໃສ່ ບ້ານອື່ນ)

### ເອກະສານຊ້ອນທ້າຍ

- ແຈ້ງການຂອງເມືອງ ກ່ຽວກັບການເປີດກອງປະຊຸມກຳນົດທິດທາງພັດທະນາບ້ານ
- ຂໍ້ຕົກລົງ ການຄັດເລືອກຕົວແທນບ້ານ ໄປຮ່ວມກອງປະຊຸມວາງແຜນພັດທະນາກຸ່ມບ້ານ
- ແບບຟອມ ລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມກຳນົດທິດທາງການພັດທະນາບ້ານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງ:____________________
ເມືອງ:____________________
ກຸ່ມບ້ານ:__________________
ບ້ານ:____________________

# ຂໍ້ຕົກລົງການຄັດເລືອກຕົວແທນບ້ານ

- ອີງໃສ່ ກອງປະຊຸມວາງກຳນົດທິດທາງການພັດທະນາບ້ານ ຊຶ່ງຈັດຂຶ້ນໃນຄັ້ງວັນທີ່ ______________

ພໍ່ແມ່ປະຊາຊົນ ບ້ານ______________ກຸ່ມບ້ານ___________________ເມືອງ______________ ແຂວງ___________________ ໄດ້ຕົກລົງເຫັນດີຄັດເລືອກເອົາ **ຕົວແທນບ້ານ** ຈຳນວນ 6 ທ່ານ (ຍິງ 3 ທ່ານ ແລະ ຊາຍ 3 ທ່ານ) ລາຍລະອຽດມີ ດັ່ງຕໍ່ໄປນີ້:

| ລດ | ຊື່ ແລະ ນາມສະກຸນ | ອາຍຸ | ຊົນເຜົ່າ | ໜ້າທີ່ຮັບຜິດຊອບ ພາຍໃນບ້ານ |
|---|---|---|---|---|
| 1 | | | | |
| 2 | | | | |
| 3 | | | | |
| 4 | | | | |
| 5 | | | | |
| 6 | | | | |

ຈຸດປະສົງ ເພື່ອໃຫ້ພວກກ່ຽວ ເຂົ້າຮ່ວມກອງປະຊຸມ ວາງແຜນພັດທະນາກຸ່ມບ້ານຂອງພວກເຮົາ, ຊຶ່ງຈະຈັດທີ່ ___________ ໃນລະຫວ່າງວັນທີ່ _______/_____/________

**ວັນທີ່_____/___/____**

**ຢັ້ງຢືນໂດຍນາຍບ້ານ (ເຊັນ ແລະ ປະທັບກາ)**

## *ເອກະສານແນບທ້າຍທີ່ 1*: **ພາລະບົດບາດ ແລະ ໜ້າທີ່ບຜິດຊອບ ຂອງຜູ້ປະສານງານ ກຸ່ມບ້ານ**

ຜູ້ປະສານງານກຸ່ມບ້ານຖືວ່າເປັນຜູ້ທີ່ເຮັດວຽກໃຫ້ກັບ ທລຍ, ຜູ້ປະສານງານກຸ່ມບ້ານ ຄວນເປັນບຸກຄົນທີ່ມີຄຸນສົມບັດດັ່ງນີ້: ມີຄວາມຊື່ສັດ, ເປັນຄົນດຸໝັ່ນ, ເປັນຄົນໄວ້ເນື້ອເຊື່ອໃຈໄດ້, ແລະ ເປັນຄົນທີ່ແຕ່ລະບ້ານຍອມຮັບ. ນອກຈາກນີ້ ຕ້ອງສາມາດອ່ານອອກຂຽນໄດ້ ແລະ ສາມາດຮູ້ຄິດໄລ່ເລກໃນຂັ້ນພື້ນຖານ. ເປັນບຸກຄົນທີ່ມີປະສົບການ ໃນວຽກງານອົງການຈັດຕັ້ງຂັ້ນຊຸມຊົນ ແລະ ຜົນງານການເຮັດວຽກຜ່ານມາເປັນທີ່ຍອມ ຮັບໄດ້.

ຜູ້ປະສານງານກຸ່ມບ້ານ ມີໜ້າທີ່ຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກໃຫ້ແກ່ກຸ່ມບ້ານ ແລະ ບ້ານ ໃນການຈັດຕັ້ງປະຕິບັດວຽກງານ ທລຍ ໃນນັ້ນລວມທັງ ຂັ້ນຕອນການວາງແຜນແບບມີສ່ວນຮ່ວມ (ການກຳນົດທິດທາງການພັດທະນາບ້ານ ແລະ ການວາງແຜນພັດທະນາກຸ່ມບ້ານ) ລວມທັງການຈັດຕັ້ງປະ ຕິບັດໂຄງການຍ່ອຍ.

ຜູ້ປະສານງານກຸ່ມບ້ານແຕ່ລະທ່ານຈະເຮັດໜ້າທີ່ສູງສຸດແມ່ນ 4 ປີ, ຫຼັງຈາກນັ້ນ ຈະຖືກປ່ຽນແທນໂດຍຜູ້ອື່ນພາຍໃນກຸ່ມບ້ານ, ເພາະວ່າຊຸມຊົນຈະມີໂອກາດ ສະເໜີຊື່ຜູ້ປະສານງານກຸ່ມບ້ານຄົນໃໝ່ ຢູ່ໃນກອງປະຊຸມກຳນົດທິດທາງພັດທະນາບ້ານ. ການປະເມີນຜູ້ປະສານງານກຸ່ມບ້ານ ແມ່ນຈະໄດ້ເຮັດເປັນແຕ່ລະໄລຍະໆ ໂດຍຊຸມຊົນ ແລະ ອາດຈະຖືກປ່ຽນແທນຖ້າຫາກຊຸມຊົນບໍ່ພໍໃຈ. ການສະເໜີຊື່ຜູ້ປະສານງານກຸ່ມບ້ານຄົນໃໝ່ ຈະໄດ້ເຮັດໃນແຕ່ລະປີ ໃນເວລາຈັດກອງປະຊຸມກວດກາການ ໃຊ້ຈ່າຍເງິນໂຄງການຍ່ອຍງວດສຸດທ້າຍ.

ພາລະບົດບາດຂອງຜູ້ປະສານງານກຸ່ມບ້ານ ແມ່ນຊ່ວຍເຫຼືອທີມງານ ທລຍ ຂັ້ນເມືອງໃນການຈັດຕັ້ງປະຕິບັດກິດຈະກຳຕ່າງໆຂອງໂຄງການຢູ່ກຸ່ມບ້ານຂອງຕົນ ນັບແຕ່ການວາງແຜນ ຈົນເຖິງການຈັດຕັ້ງປະຕິ ບັດໂຄງການຍ່ອຍ, ຊຶ່ງໜ້າທີ່ຫຼັກໆມີດັ່ງນີ້:

- ຊ່ວຍຈັດກອງປະຊຸມທີ່ຈັດຂຶ້ນຢູ່ບ້ານ ແລະ ຢູ່ຂັ້ນກຸ່ມບ້ານ (ກອງປະຊຸມກຳນົດທິດທາງພັດທະນາບ້ານ, ກອງປະຊຸມວາງແຜນພັດທະນາບ້ານ ແລະ ກອງປະຊຸມອື່ນໆ),
- ຊ່ວຍເຮັດໃຫ້ປະຊາຊົນທຸກຄົນຮູ້ຈັກ ກ່ຽວກັບ ທລຍ ແລະ ຊຸກຍູ້ໃຫ້ເຂົາເຈົ້າທຸກຄົນເຂົ້າຮ່ວມກອງປະຊຸມ ແລະ ເຂົ້າຮ່ວມກິດຈະກຳຕ່າງໆພາຍໃຕ້ວຽກງານ ທລຍ, ໂດຍສະເພາະ ຊຸກຍູ້ໃຫ້ຊົນເຜົ່າ, ຜູ້ດ້ອຍໂອກາດ ແລະ ແມ່ຍິງ.
- ຊ່ວຍໃນການວາງແຜນ ແລະ ຈັດຕັ້ງປະຕິບັດກິດຈະກຳຂອງ ທລຍ ພາຍໃນກຸ່ມບ້ານ.
- ຊ່ວຍເຮັດໃຫ້ຊຸມຊົນມີຄວາມເຂົ້າໃຈ ກ່ຽວກັບຄວາມຈຳເປັນຂອງການມີສ່ວນຮ່ວມຈາກຊຸມຊົນເຂົ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ ແລະ ໃຫ້ແນ່ໃຈວ່າການປະກອບສ່ວນດັ່ງກ່າວແມ່ນຄວາມຈິງ,

- ຊ່ວຍເຮັດໃຫ້ແນ່ໃຈວ່າ ກິດຈະກຳຂອງ ທລຍ ໄດ້ມີການປະສານກັບພາກສ່ວນ ອື່ນໆ ແລະ ໂຄງການພັດທະນາອື່ນໆ ທີ່ກຳລັງຈັດຕັ້ງປະຕິບັດຢູ່ໃນກຸ່ມບ້ານຂອງຕົນ ທັງນີ້ເພື່ອຫຼີກລ້ຽງບັນຫາການຊ້ຳຊ້ອນກັນ,
- ຊ່ວຍໃນການວັດແທກຈຳນວນຜູ້ດ້ອຍໂອກາດ ເຂົ້າຮ່ວມໃນຂະບວນການປຶກສາຫາ ລື ຕ່າງໆ (ການແຍກກຸ່ມຍ່ອຍເພື່ອປຶກສາຫາລື ຖ້າມີຄວາມຈຳເປັນ)
- ລາຍງານຄວາມຄືບໜ້າຂອງໂຄງການ ທລຍ ຈາກນັ້ນເອົາໄປຕິດໄວ້ຢູ່ກະດານຂ່າວຂອງກຸ່ມບ້ານຢ່າງເປັນປະຈຳໃນແຕ່ລະໄລຍະ,
- ເຮັດບົດລາຍງານປະຈຳເດືອນ ໃຫ້ແກ່ຜູ້ປະສານງານ ທລຍ ຂັ້ນເມືອງ ໂດຍໃຊ້ແບບຟອມລາຍງານ ຂອງ ທລຍ.
- ລາຍງານບັນຫາທີ່ເກີດຂຶ້ນ ໃຫ້ກັບອຳນາດການປົກຄອງທ້ອງຖິ່ນ ແລະ ພະນັກ ງານ ທລຍ,
- ຊ່ວຍໃນການບັນທຶກ ແລະ ດຳເນີນການກວດສອບທຸກຄຳຄິດຄຳເຫັນທີ່ເຫັນວ່າ ມີຄວາມຈຳເປັນທີ່ໄດ້ສົ່ງຜ່ານທາງກົນໄກສະແດງຄຳຄິດຄຳເຫັນ ແລະ ແກ້ໄຂບັນຫາ,
- ຊ່ວຍແປພາສາທ້ອງຖິ່ນ ໃນເວລາຈັດກອງປະຊຸມ, ຝຶກອົບຮົມ ແລະ ການຢ້ຽມຢາມກຸ່ມບ້ານ ຖ້າຫາກມີຄວາມຈຳເປັນ,
- ແຈ້ງໃຫ້ພະນັກງານ ທລຍ ຮູ້ແຕ່ລະບັນຫາ ຫລື ບາງບັນຫາທີ່ອາດເກີດຂຶ້ນ ກ່ຽວກັບການປ້ອງກັນທາງສັງຄົມ ແລະ ສິ່ງແວດລ້ອມ.

ຕາມປົກກະຕິແລ້ວ ຜູ້ປະສານງານກຸ່ມບ້ານຈະແບ່ງໜ້າວຽກກັນ ໂດຍອີງຕາມ ຈຳນວນບ້ານ ແລະ ໄລຍະທາງໄປຫາແຕ່ລະບ້ານ ແລະ ຂະໜາດຂອງບ້ານ ພາຍໃນກຸ່ມບ້ານ, ຊຶ່ງຜູ້ປະສານງານກຸ່ມບ້ານຈະເປັນຜູ້ອຳນວຍຄວາມສະດວກ ໃຫ້ແກ່ບັນດາບ້ານເຫຼົ່ານັ້ນ.

# ສັນຍາລັກສຳລັບແຕ້ມແຜນທີ່ບ້ານ ແລະ ແຜນທີ່ກຸ່ມບ້ານ

## ສັນຍາລັກດ້ານໂຄງລ່າງ


ໂຮງຮຽນ


ສະໂມສອນກຸ່ມບ້ານ


ເຮືອນປະຊາຊົນ


ສຸກສາລາ


ໂຮງໝໍ


ໄຟຟ້າ


ວັດ


ໂບດ


ຕະຫຼາດ


ນ້ຳລິນ


ນ້ຳບາດານ


ນ້ຳປະປາ


ນ້ຳສ້າງ


ຊົນລະປະທານ

 ຂົວຂ້າມນ້ຳ

ທາງຊຸມຊົນພາຍໃນບ້ານ

ທາງຊຸມຊົນບ້ານຫາບ້ານ

ທາງຫຼວງ (ທາງປູຢາງ)

## ສັນຍາລັກດ້ານຊັບພະຍາກອນທາງທຳມະຊາດ ແລະ ການຜະລິດ

 ສາຍນ້ຳຕ່າງໆ

 ບຶງ ຫຼື ໜອງຂະໜາດໃຫຍ່

 ຂອບເຂດປ່າເລົ່າ/ປ່າປູກ

 ຂອບເຂດປ່າສັກສິດ

 ຂອບເຂດປ່າດົງດິບ



ຂອບເຂດພູດອຍ



ຂອບເຂດສວນ



ທົ່ງນາ



ທົ່ງລ້ຽງສັດ

<u>ສັນຍາລັກເຂດແດນ</u>

ເສັ້ນແດນລະຫວ່າງບ້ານ

ເສັ້ນແດນລະຫວ່າງກຸ່ມບ້ານ

ເສັ້ນແດນລະຫວ່າງເມືອງ

ເສັ້ນແດນລະຫວ່າງແຂວງ

ເສັ້ນແດນລະຫວ່າງປະເທດ

# ແບບຟອມການປະເມີນຜົນ TOT

| ຄະແນນ | ຄໍາຕອບຕົ້ນຕໍ |
|---|---|
| 5 | ຂ້າພະເຈົ້າເຫັນດີນໍາຢ່າງໜັກແໜ້ນ |
| 4 | ຂ້າພະເຈົ້າເຫັນດີພໍປະມານ |
| 3 | ເຄິ່ງໆ ກາງໆ |
| 2 | ບໍ່ເຫັນດີນໍາປານໃດ |
| 1 | ບໍ່ເຫັນດີຈັກໜ້ອຍ |

1. ການຝຶກອົບຮົມ TOT ຈະຊ່ວຍປັບປຸງ ສະມັດຖະພາບຂອງຂ້າພະເຈົ້າໃນຖານະ ທີ່ເປັນພະນັກງານຂອງ ທລຍ.

5 ____ 4 ____ 3 ____ 2 ____ 1 ____

2. ຂ້າພະເຈົ້າຮູ້ສຶກໝັ້ນໃຈວ່າຂ້າພະເຈົ້າສາມາດດໍາເນີນການ ຝຶກ TOT ໃຫ້ພະນັກງານລະດັບແຂວງ ແລະ ເມືອງ.

5 ____ 4 ____ 3 ____ 2 ____ 1 ____

3. ຂ້າພະເຈົ້າ ເຂົ້າໃຈຄວາມແຕກຕ່າງ ລະຫວ່າງ ທລຍ I ແລະ ທລຍ II.

5 ____ 4 ____ 3 ____ 2 ____ 1 ____

4. ຂ້າພະເຈົ້າ ຮູ້ສຶກເພີດເພີນ ຕໍ່ TOT. ພວກເຮົາມ່ວນຊື່ນ ແລະ ບໍ່ຢູ່ໃນສະພາບໜ້າເບື່ອໜ່າຍ.

5 ____ 4 ____ 3 ____ 2 ____ 1 ____

5. ຫົວໜ້າທີມງານຄູຝຶກປະຕິບັດໜ້າທີ່ ນໍາພາການຝຶກ TOT ໄດ້ດີ.

5 ____ 4 ____ 3 ____ 2 ____ 1 ____

6. ການນໍາໃຊ້ຜູ້ແປພາສາໃນການຝຶກ TOT ບໍ່ເປັນບັນຫາ.

5 ____ 4 ____ 3 ____ 2 ____ 1 ____

7. ຫົວຂໍ້ໃນການຝຶກອົບຮົມທີ່ເປັນປະໂຫຍດທີ່ສຸດແມ່ນ:

---

8. ຫົວຂໍ້ໃນການຝຶກອົບຮົມທີ່ມີປະໂຫຍດໜ້ອຍທີ່ສຸດແມ່ນ:

---

9. ຫົວຂໍ້ທີ່ສັບສົນກວ່າໝູ່ແມ່ນ:

---

10. ເຕັກນິກການຝຶກອົບຮົມ ທີ່ໜ້າສົນໃຈແມ່ນ:

---

11. ຂ້າພະເຈົ້າຮຽກຮ້ອງຕ້ອງການຝຶກອົບຮົມຕໍ່ເນື່ອງ ໃນຫົວຂໍ້ດັ່ງຕໍ່ໄປນີ້:

ກ) ________________________________________

ຂ) ________________________________________

ຄ) ________________________________________

# ເສີມສ້າງຄວາມເປັນເຈົ້າການໃຫ້ແກ່ຊຸມຊົນ
# ເພື່ອໃຫ້ເກີດການພັດທະນາທີ່ຍືນຍົງ

**ສະໜັບສະໜູນໂດຍ:**

ທະນາຄານໂລກ

ອົງການເພື່ອການພັດທະນາ ແລະ
ການຮ່ວມມືຂອງເຊີວິດເຊີແລນ

Australian AID

ອົງການເພື່ອການຊ່ວຍເຫລືອ
ລະຫວ່າງປະເທດຂອງອົດສະຕຣາລີ

JSDF

ອົງການເພື່ອການພັດທະນາສັງຄົມຂອງຍີ່ປຸ່ນ